# ການຄົ້ນຄວ້າ ແລະ ການສ້າງແຜນດຳເນີນງານດ້ານນະໂຍບາຍ ກະສິກຳ ແລະ ພັດທະນາຊົນນະບົດ (ARD PAP)

(ສະບັບຫຍໍ້)

# ແຜນດຳເນີນງານດ້ານນະໂຍບາຍ ພັດທະນາຊົນນະບົດໃນ ສປປ ລາວ (2026 -2030)


ກະຊວງກະສິກຳ ແລະ ສິ່ງແວດລ້ອມ

ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ



ຕຸລາ 2025

**ຄຳນຳ**

ສປປ ລາວ ມີຄວາມຄືບໜ້າຢ່າງໃຫຍ່ຫຼວງ ໃນການບັນລຸຕາມເປົ້າໝາຍການພັດທະນາ, ໂດຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ **IX** (National Socio-Economic Development Plan / **9th NSEDP)** ທີ່ໄດ້ວາງພື້ນຖານອັນໜັກ ແໜ້ນສຳລັບການປ່ຽນຜ່ານໄປສູ່ສະຖານະປະເທດທີ່ມີລາຍຮັບຮັບປານກາງ. ບົນພື້ນຖານບັນດາຜົນງານທີ່ບັນລຸໄດ້ມານັ້ນ, ບົດລາຍງານສະບັບນີ້ໄດ້ແນະນຳ ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະເຊື່ອມໂຍງ (**IIRD**) ທີ່ສອດຄ່ອງກັບບັນດາບຸລິມະສິດແຫ່ງຊາດເພື່ອພັດທະນາການເຕີບໂຕຂອງຊົນນະບົດແບບຍືນຍົງ.

ບົດລາຍງານສະບັບນີ້ໄດ້ຍົກໃຫ້ເຫັນເຖິງຄວາມຈຳເປັນໃນການທີ່ຈະຫັນປ່ຽນກອບແນວຄິດແບບດັ້ງເດີມທີ່ສຸມໃສ່ກະສິກຳເປັນຫຼັກ ແລະ ຂະແໜງການອື່ນ ແຕ່ຂາດການເຊື່ອມໂຍງດ້ານການປະຕິບັດທີ່ຊັດເຈນ; ໄປສູ່ກອບແນວຄິດທີ່ຫຼາກຫຼາຍ ແລະ ສອດຄ່ອງກັບນະໂຍບາຍເຊິ່ງລວມເຖິງການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ລວມທັງພາກລັດ, ພາກເອກະຊົນ, ແລະ ຊຸມຊົນທ້ອງຖິ່ນ; ທັງນີ້ຕ້ອງປັບໃຫ້ ເໝາະສົມກັບສະພາບທາງເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຈຸດພິເສດ ລັກສະນະພູມສັນຖານ ຂອງປະເທດລາວອີກດ້ວຍ.

ເນື່ອງຈາກ (ຮ່າງ) ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຄັ້ງທີ X ຍັງຢູ່ໃນຂະບວນການປັບປຸງ, ຍັງມີຂໍ້ຈຳກັດບາງດ້ານໃນການກຳນົດງົບປະມານໂຄງການ ແລະ ແຫຼ່ງທຶນ. ເຖິງແມ່ນວ່າບົດລາຍງານນີ້ໄດ້ ລະບຸລາຍລະອຽດ ຍຸດທະສາດ ແລະ ແຜນດຳເນີນງານ ກໍ່ຕາມ, ມັນຍັງຮຽກຮ້ອງໃຫ້ມີການພັດທະນາກອບໜ້າວຽກຢ່າງຄົບຖ້ວນທັງລະບົບຕື່ມ ເພື່ອການວາງແຜນ ແລະ ການຈັດຕັ້ງທີ່ເປັນລະບົບ ແລະ ການຈັດສັນງົບປະມານທີ່ສອດຄ່ອງກັບແຜນດຳເນີນງານທີ່ໄດ້ນຳສະ ເໜີເຫຼົ່ານີ້. ການປະຕິບັດກອບແນວຄວາມຄິດ ໂປຣກຣາມIIRD ຈຳເປັນຕ້ອງອາໃສການຕັດສິນໃຈດ້ວຍຄວາມຮັບຜິດຊອບສູງຈາກຜູ້ທີ່ມີສ່ວນກ່ຽວຂອງທຸກຝ່າຍໃນການປັບປຸງ ແລະ ປະຕິບັດຕາມຍຸດທະສາດ ແລະ ແຜນປະຕິບັດງານທີ່ໄດ້ນຳສະເໜີມານີ້ ຕາມຄວາມເໝາະສົມ ແລະ ສອດຄ່ອງກັບສະພາບການພັດທະນາກະສິກຳ ແລະພັດທະນາຊົນນະບົດໃນ ສປປ ລາວ.

ເຖິງຢ່າງໃດກໍຕາມ, ເອກະສານສະບັບນີ້ອາດມີຂໍ້ຂາດຕົກບົກຜ່ອງທາງດ້ານເນື້ອໃນ, ຮູບພາບປະກອບ ແລະເຕັກນິກບາງອັນອາດຍັງບໍ່ທັນຄົບຖ້ວນ ເຊິ່ງໃນໂອກາດນີ້ ພວກຂ້າພະເຈົ້າຂໍຄວາມຮ່ວມມືກັບທຸກພາກສ່ວນ ໃຫ້ມີການປະກອບຄຳຄິດຄຳເຫັນ, ສົ່ງຂ່າວ ເຖິງຄະນະຮັບຜິດຊອບດ້ວຍວິທີການສ້າງສັນ ເພື່ອປັບປຸງເອກະສານແນະນຳສະບັບນີ້ ໃຫ້ມີເນື້ອໃນສົມບູນຂຶ້ນຕື່ມ.

**ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ**

# ແຜນດຳເນີນງານດ້ານນະໂຍບາຍ ພັດທະນາຊົນນະບົດໃນ ສປປ ລາວ (2026 - 2030)

**(ສະບັບຫຍໍ້)**


**ຮຽບຮຽງໂດຍ:**

ທ່ານ ປອ. Jeongil Kim, Bidiv Inc.
ທ່ານ ປອ. Minho Lee, Biodiv Inc.
ທ່ານ ປອ. Chunkwon Yoo, Biodiv Inc.
ທ່ານ ປອ. Kapjin Chung, Biodiv Inc.
ທ່ານ ປອ.ນ. ພອນວິໄລ ສີນະວົງ, ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ
ທ່ານ ປັນຍາສິດ ສີມພະລີ, ກົມພັດທະນາຊົນນະບົດ
ທ່ານ ປອ.ນ. ລັດສະໝີ ພູນວິສຸກ, ສະຖາບັນຄົ້ນຄວ້າ ກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ



**ແປຈາກສະບັບພາສາອັງກິດສຳລັບກອງປະຊຸມໂດຍ:**

ທ່ານ ປອ.ນ.ພອນວິໄລ ສີນະວົງ, ຮອງຫົວໜ້າສູນຄົ້ນຄວ້ານະໂຍບາຍເສດຖະກິດກະສິກຳ ແລະ ພັດທະນາຊົນນະບົດ (ຜູ້ປະສານງານໂຄງການ: ການຄົ້ນຄວ້າ ແລະ ດຳເນີນງານ ຂອງຄະນະປະຕິບັດງານ ນະໂຍບາຍກະສິກຳ ແລະ ພັດທະນາຊົນນະບົດ ລາວ (ARD PAP).

# ສາລະບານ


I. ພາກສະເໜີ ........ 10

II. ສະພາບປັດຈຸບັນ ແລະ ວາລະຂອງການພັດທະນາຊົນນະບົດໃນ ສປປ ລາວ ........ 11

2.1. ດ້ານພູມສາດ ........ 11

2.2. ດ້ານເສດຖະກິດ ແລະ ອຸດສະຫະກຳ ........ 11

2.3. ດ້ານການສຶກສາ ແລະ ສະຫວັດດີການສັງຄົມ ........ 12

2.4. ດ້ານສະພາບການດຳລົງຊີວິດ ........ 13

2.5. ດ້ານປະຊາທິປະໄຕໃນລະດັບຮາກຖານ- ດ້ານຊຸມຊົນຂັ້ນບ້ານ ........ 13

2.6. ແຜນພັດທະນາ 5 ປີຄັ້ງທີ X ຂອງກະຊວງກະສິກຳ ແລະ ປ່າໄມ້ ........ 14

III. ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນໂຄງການພັດທະນາຊົນນະບົດ ........ 15

3.1. ການຈັດຕັ້ງປະຕິບັດການພັດທະນາຊົນນະບົດຂອງລັດຖະບານ: ຜົນສຳເລັດ ແລະ ປະເດັນສຳຄັນ 15

3.2. ໝາກຜົນ ແລະ ບົດຮຽນທີ່ຖອດຖອນໄດ້ຈາກໂຄງການຊ່ວຍເຫຼືອ (ODA) ການພັດທະນາຊົນນະບົດ16

IV. ການວິເຄາະຍຸດທະສາດຫຼັກເພື່ອການພັດທະນາຊົນນະບົດແບບໃໝ່ ........ 20

4.1. ການວິເຄາະ ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ SWOT ........ 20

4.2. ຍຸດທະສາດທີ່ສຳຄັນໂດຍອີງໃສ່ຜົນການວິເຄາະ SWOT ........ 23

4.3. ກອບແນວຄວາມຄິດການພັດທະນາຊົນນະບົດແບບໃໝ່ຂອງລາວ ........ 25

V. ແຜນຍຸດທະສາດການພັດທະນາຊົນນະບົດ (2026-2030) ........ 28

5.1. ແຜນຍຸດທະສາດ 1 : ການປັບປຸງນະໂຍບາຍ ແລະ ການຄຸ້ມຄອງວຽກງານພັດທະນາຊົນນະບົດ ... 29

5.2. ແຜນຍຸດທະສາດ 2 : ລະບົບ ແລະ ໜ້າທີ່ໃນການຈັດຕັ້ງປະຕິບັດໂປຣກຣາມພັດທະນາຊົນນະບົດ30

5.3. ແຜນຍຸດທະສາດ 3: ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ ........ 31

5.4. ແຜນຍຸດທະສາດ 4: ການສ້າງຂີດຄວາມສາມາດ ແລະ ຮູບແບບການຝຶກອົບຮົມ ........ 32

5.5. ແຜນຍຸດທະສາດ 5: ການຮັບປະກັນ ແລະ ການບໍລິຫານ ການພັດທະນາຊົນນະບົດ ........ 33

5.6. ແຜນຍຸດທະສາດ 6: ການຄຸ້ມຄອງປະສິດທິພາບ ແລະ ສະໜັບສະໜູນການພັດທະນາຊົນນະບົດ34

VI. ການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (IIRD) (2026-2030) ........ 34

VII. ສະຫຼຸບ ແລະ ຄຳແນະນຳ ........ 40

VIII. ແຜນດຳເນີນງານຂອງໂຄງການໃນອົງປະກອບພາຍໃຕ້ໂປຣກຣາມ IIRD ........ 42

8.1 ແຜນດຳເນີນງານໂຄງການ ພັດທະນາຊຸມຊົນ-ອົງປະກອບທີ 1: CD ........ 42

8.2 ແຜນດຳເນີນງານໂຄງການພັດທະນາຂີດຄວາມສາມາດຂອງ LKRDTC-ອົງປະກອບທີ 2: AE ........ 45

8.3 ແຜນດຳເນີນງານໂຄງການພັດທະນາຫຼັກສູດຝຶກອົບຮົມສີມືແຮງງານ ແລະ ທັກສະສາລັບໄວໜຸ່ມ ແລະ ແມ່ຍິງຊົນນະບົດ-ອົງປະກອບທີ 2: AE....49
8.4 ແຜນດຳເນີນງານໂຄງການບໍລິການໃຫ້ເຊົ່າເຄື່ອງຈັກກະສິກຳ-ອົງປະກອບທີ 3: AD....53
8.5 ແຜນດຳເນີນງານໂຄງການພັດທະນາພື້ນທີ່ການຜະລິດພືດຜັກ-ອົງປະກອບທີ 3: AD....57
8.6 ແຜນດຳເນີນງານໂຄງການສິນເຊື່ອຈູງໃຈເພື່ອການລ້ຽງງົວທອມ-ອົງປະກອບທີ 3: AD....60
8.7 ແຜນດຳເນີນງານໂຄງການສົ່ງເສີມສະຫະກອນກະສິກຳ-ອົງປະກອບທີ 4: AC....64
IX. ເອກະສານອ້າງອີງ....68

## ຕົວອັກສອນຫຍໍ້

| | | |
|---|---|---|
| AC | Agricultural Cooperatives | ສະຫະກອນກະສິກຳ |
| AD | Agricultural Development | ການພັດທະນາດ້ານກະສິກຳ |
| ADB | Asian Development Bank | ທະນາຄານພັດທະນາອາຊີ |
| ADS | Agricultural Development Strategy | ຍຸດທະສາດການພັດທະນາກະສິກຳ |
| AE | Agricultural/Rural Extension | ສົ່ງເສີມກະສິກຳ ແລະ ຊົນນະບົດ |
| APB | Agriculture Promotion Ban | ທະນາຄານສົ່ງເສີມກະສິກຳ |
| ASEAN | Association of Southeast Asian Nations | ສະມາຄົມປະຊາຊາດອາຊີຕາເວັນອອກສ່ຽງໃຕ້ |
| CD | Community Development | ການພັດທະນາຊຸມຊົນ |
| CDD | Community-Driven Development | ການພັດທະນາແບບຊຸມຊົນເປັນເຈົ້າ |
| DAEC | Department of Agricultural Extension and Cooperative | ກົມສົ່ງເສີມກະສິກຳ ແລະ ສະຫະກອນ |
| DAFO | District Agriculture and Forestry Office | ຫ້ອງການກະສິກຳ ແລະ ປ່າໄມ້ ເມືອງ |
| DLF | Department of Livestock and Fishery | ກົມລ້ຽງສັດ ແລະ ການປະມົງ |
| DoA | Department of Agriculture | ກົມປູກຝັງ |
| DoPC | Department of Planning and Cooperation | ກົມແຜນການ ແລະ ການຮ່ວມມື |
| DRD | Department of Rural Development | ກົມພັດທະນາຊົນນະບົດ |
| FAO | Food and Agriculture Organization | ອົງການອາຫານ ແລະ ການກະເສດ |
| IFAD | International Fund for Agricultural Development | ກອງທຶນສາກົນເພື່ອການພັດທະນາກະສິກຳ |
| IIRD | Innovative and Integrated Rural Development Program | ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ |
| KOICA | Korea International Cooperation Agency | ອົງການຮ່ວມມືສາກົນແຫ່ງ ສ. ເກົາຫຼີ |
| MAE | Ministry of Agriculture and Environment | ກະຊວງກະສິກຳ ແລະ ສິ່ງແວດລ້ອມ |
| MAF | Ministry of Agriculture and Forestry | ກະຊວງກະສິກຳ ແລະ ປ່າໄມ້ |
| MOE | Ministry of Education | ກະຊວງສຶກສາທິການ ແລະ ກິລາ |
| MOH | Ministry of Health | ກະຊວງສາທາລະນະສຸກ |
| MOIC | Ministry of Industry and Commerce | ກະຊວງອຸດສະຫະກຳ ແລະ ການຄ້າ |
| MPI | Ministry of Planning and Investment | ກະຊວງແຜນການ ແລະ ການລົງທຶນ |
| NAFRI | National Agriculture and Forestry Research Institute | ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ |
| NSEDP | National Socio-Economic Development Plan | ແຜນພັດທະນາເສດຖະກິດສັງຄົມແຫ່ງຊາດ |
| NOUL | National University of Laos | ມະຫາວິທະຍາໄລແຫ່ງຊາດລາວ |
| ODA | Official Development Assistance | ການຊ່ວຍເຫຼືອຈາກສາກົນ |
| OECD | Organization for Economic Cooperation & Development | ອົງການຮ່ວມມືດ້ານເສດຖະກິດ ແລະ ການພັດທະນາ |

| | | |
|---|---|---|
| PAFO | Provincial Agriculture and Forestry Office | ພະແນກກະສິກຳ ແລະ ປ່າໄມ້ແຂວງ |
| PPP | Public Private Partnership | ການຮ່ວມມືພາກລັດ ແລະ ເອກະຊົນ |
| R&D | Research and Development | ການຄົ້ນຄວ້າ ແລະ ການພັດທະນາ |
| RD | Rural Development | ພັດທະນາຊົນນະບົດ |
| SMU | Saemaul Undong (New Village Movement) | ການພັດທະນາບ້ານແບບໃໝ່ |
| SPRI | Socio-economic Policy Research Institute | ສະຖາບັນຄົ້ນຄວ້ານະໂຍບາຍເສດຖະກິດ ແລະ ສັງຄົມ |
| SWOT | Strengths, Weakness, Opportunities, and Threats | ຈຸດແຂງ,ຈຸດອ່ອນ, ທ່າແຮງ ແລະ ສິ່ງທ້າທາຍ |
| TMR | Total Mixed Ration | ອັດຕາສ່ວນປະກອບທັງໝົດຢ່າງເໝາະສົມ |
| UNDP | United Nations Development Programme | ອົງການສະຫະປະຊາຊາດ |
| WB | World Bank | ທະນາຄານໂລກ |

## ສະຫຼຸບສັງລວມຫຍໍ້

ສປປ ລາວ ມີຄວາມຄືບໜ້າຢ່າງໃຫຍ່ຫຼວງ ໃນການບັນລຸຕາມເປົ້າໝາຍການພັດທະນາ, ໂດຍແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ **IX** (National Socio-Economic Development Plan / **9th NSEDP)** ທີ່ໄດ້ວາງພື້ນຖານອັນໜັກ ແໜ້ນສໍາລັບການປ່ຽນຜ່ານໄປສູ່ສະຖານະປະເທດທີ່ມີລາຍຮັບຮັບປານກາງ. ບົນພື້ນຖານບັນດາຜົນງານທີ່ບັນລຸໄດ້ມານັ້ນ, ບົດລາຍງານສະບັບນີ້ໄດ້ແນະນໍາ ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (**IIRD)** ທີ່ສອດຄ່ອງກັບບັນດາບຸລິມະສິດແຫ່ງຊາດເພື່ອພັດທະນາການເຕີບໂຕຂອງຊົນນະບົດແບບຍືນຍົງ.

ບົດລາຍງານສະບັບນີ້ໄດ້ຍົກໃຫ້ເຫັນເຖິງຄວາມຈໍາເປັນໃນການທີ່ຈະຫັນປ່ຽນກອບແນວຄິດແບບດັ້ງເດີມທີ່ສຸມໃສ່ກະສິກໍາເປັນຫຼັກ ແລະ ຂະແໜງການອື່ນ ແຕ່ຂາການເຊື່ອມໂຍງດ້ານການປະຕິບັດທີ່ຊັດເຈນ; ໄປສູ່ກອບແນວຄິດທີ່ຫຼາກຫຼາຍ ແລະ ສອດຄ່ອງກັບນະໂຍບາຍເຊິ່ງລວມເຖິງການມີສ່ວນຮ່ວມຢ່າງຕັ້ງໜ້າຂອງຫຼາຍພາກສ່ວນທີ່ກ່ຽວຂ້ອງ ລວມທັງພາກລັດ, ພາກເອກະຊົນ, ແລະ ຊຸມຊົນທ້ອງຖິ່ນ; ທັງນີ້ຕ້ອງປັບໃຫ້ ເໝາະສົມກັບສະພາບທາງເສດຖະກິດ, ສັງຄົມ, ສິ່ງແວດລ້ອມ ແລະ ຈຸດພິເສດ ລັກສະນະພູມສັນຖານ ຂອງປະເທດລາວອີກດ້ວຍ.

ຜົນການປະເມີນໂຄງການພັດທະນາຊົນນະບົດໃນລາວທີ່ຜ່ານມາທີ່ໄດ້ຮັບການສະໜັບສະໜູນຈາກສາກົນພົບວ່າມີສິ່ງທ້າທາຍທີ່ສໍາຄັນໂດຍສະເພາະໃນດ້ານຂອງຄວາມຍືນຍົງທີ່ຈໍາກັດຂອງໂຄງການເຫຼົ່ານັ້ນ. ບັນຫາໃຫຍ່ອັນໜຶ່ງແມ່ນການເອື່ອຍອີງແຫຼ່ງທຶນພາຍນອກຫຼາຍເກີນໄປ ເຊິ່ງສົ່ງຜົນໃຫ້ໂຄງການຖືກຢຸດຕິລົງເມື່ອສິ້ນສຸດການສະໜັບສະໜູນທາງດ້ານການເງິນ. ເພື່ອແກ້ໄຂບັນຫາດັ່ງກ່າວ, ຮູບແບບການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (**IIRD)** ທີ່ນໍາສະເໜີມານີ້ ຈຶ່ງໄດ້ເນັ້ນໜັກເຖິງການເປັນເຈົ້າຕົນເອງ, ຄວາມຍືນຍົງ ແລະ ການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (**CDD)** ເພື່ອໃຫ້ເກີດການປ່ຽນແປງໃນຊົນນະບົດແບບຍືນຍົງໃນໄລຍະຍາວ.

ໂປຣກຣາມ IIRD ແມ່ນສຸມໃສ່ຢ່າງມີຍຸດທະສາດໄປທີ່ບັນຫາສໍາຄັນທີ່ມີຄວາມຮີບດ່ວນສູງ ແລະ ມີຜົນກະທົບຢ່າງກວ້າງຂວາງ. ອົງປະກອບຫຼັກທັງສີ່ອົງປະກອບ (ດ້ານວິຊາການ) ຖືກເຊື່ອມຕໍ່ກັນເພື່ອຮັບປະກັນວ່າຜົນໄດ້ຮັບແມ່ນການເສີມສ້າງເຊິ່ງກັນ ແລະ ກັນ ແລະ ມີຄວາມຍືນຍົງພາຍໃຕ້ກອບການຈັດຕັ້ງປະຕິບັດຂອງອົງປະກອບທີ 5 (ດ້ານບໍລິຫານຈັດການ) ຂອງ ໂປຣກຣາມ IIRD. ສັງລວມແລ້ວ, IIRD ມີ 5 ອົງປະກອບຫຼັກດັ່ງລຸ່ມນີ້:

1) ການພັດທະນາຊຸມຊົນ (Community Development /CD): ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໂດຍຜ່ານວິທີການພັດທະນາທີ່ຊຸມຊົນເປັນຜູ້ຂັບເຄື່ອນ (community-led development /CDD) ເພື່ອປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມການຊ່ວຍເຫລືອຕົນເອງ ແລະ ໂຄງການເງິນຝາກເງິນປະຢັດຂອງບ້ານ.
2) ການສ້າງຂີດຄວາມສາມາດ ແລະ ການສົ່ງເສີມກະສິກໍາ (Capacity Building and Agricultural Extension /AE): ຝຶກອົບຮົມພະນັກງານລັດ, ຜູ້ນໍາບ້ານ, ຊາວໜຸ່ມ ແລະ ແມ່ຍິງໃນຊົນນະບົດ, ແລະ ຊາວກະສິກອນໃນດ້ານທັກສະການນໍາພາ ແລະ ການພັດທະນາກະສິກໍາ/ຊົນນະບົດ.
3) ການພັດທະນາກະສິກໍາ (Agricultural Development/AD): ເພີ່ມທະວີການຜະລິດເຂົ້າ, ພືດສວນ (ພືດຜັກ) ແລະ ສັດລ້ຽງ (ງົວ), ພ້ອມທັງຊຸກຍູ້ກຸ່ມຊາວກະສິກອນດ້ານການຄ້າ ແລະ ການທົດລອງສະຫະກອນກະສິກໍາ.
4) ສະຫະກອນກະສິກໍາ (Agricultural Cooperative /AC): ສ້າງຕັ້ງສະຫະກອນ ແລະ ສ້າງຄວາມເຂັ້ມແຂງໃຫ້ຕ່ອງໂສ້ມູນຄ່າ ເພື່ອເພີ່ມລາຍຮັບ ແລະ ຊຸກຍູ້ການເຕີບໂຕທາງດ້ານກະສິກໍາ
5) ປະສິດທິພາບວຽກງານການຄຸ້ມຄອງໂຄງການ ແລະ (Project and Performance Management /PM): ອົງປະກອບທີ 5 ຂອງການດໍາເນີນງານຫຼັກຂອງໂຄງການ/ໂຄງການເຮັດໜ້າທີ່ຊື່ອມໂຍງໂຄງການຕ່າງໆເພື່ອເສີມຂະຫຍາຍຜົນກະທົບຕໍ່ການພັດທະນາທີ່ສອດຄ່ອງ ແລະ ຍືນຍົງ.

ໂປຣກຣາມຂອງການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ ຫຼື **IIRD** ແມ່ນຮັບປະກັນຄວາມສອດຄ່ອງລະຫວ່າງອົງປະກອບຕ່າງໆເຫຼົ່ານີ້ເພື່ອສ້າງຄວາມເຂັ້ມແຂງໃນການພັດທະນາ, ເສີມສ້າງຄວາມເຂັ້ມແຂງໃຫ້ແກ່ຊຸມຊົນ ແລະ ສົ່ງເສີມຄວາມຍືນຍົງໃນໄລຍະຍາວ. ໂດຍນໍາໃຊ້ບັນດາບົດຮຽນ ແລະ ປະສົບການ ເຊມາອຸດົງ ຂອງ ສ.ເກົາຫຼີ ແລະ ກອບແນວຄວາມຄິດການພັດທະນາພາກພື້ນທີ່ປະສົບຜົນສໍາເລັດແບບປະສົມປະສານ, ເຮັດໃຫ້ປະເທດລາວສາມາດບັນລຸການຫັນປ່ຽນຊົນນະບົດທີ່ເໝາະສົມກັບສະພາບການ ແລະ ຄວາມຕ້ອງການຂອງຕົນເອງຢ່າງມີປະສິດທິພາບ.

ເນື່ອງຈາກ (ຮ່າງ) ແຜນພັດທະນາກະສິກໍາ, ປ່າໄມ້ ແລະ ພັດທະນາຊົນນະບົດ ຄັ້ງທີ X ຍັງຢູ່ໃນຂະບວນການປັບປຸງ, ຍັງມີຂໍ້ຈໍາກັດບາງດ້ານໃນການກໍານົດງົບປະມານໂຄງການ ແລະ ແຫຼ່ງທຶນ. ເຖິງແມ່ນວ່າບົດລາຍງານນີ້ໄດ້ ລະບຸລາຍລະອຽດຍຸດທະສາດ ແລະ ແຜນດໍາເນີນງານ ກໍ່ຕາມ, ມັນຍັງຮຽກຮ້ອງໃຫ້ມີການພັດທະນາກອບໜ້າວຽກຢ່າງຄົບຖ້ວນທັງລະບົບຕື່ມເພື່ອການວາງແຜນ ແລະ ການຈັດຕັ້ງທີ່ເປັນລະບົບ ແລະ ການຈັດສັນງົບປະມານທີ່ສອດຄ່ອງກັບແຜນດໍາເນີນງານທີ່ໄດ້ນໍາສະ ເໜີເຫຼົ່ານີ້. ການປະຕິບັດກອບແນວຄວາມຄິດ ໂປຣກຣາມIIRD ຈໍາເປັນຕ້ອງອາໃສການຕັດສິນໃຈດ້ວຍຄວາມຮັບຜິດຊອບສູງຈາກຜູ້ທີ່ມີສ່ວນກ່ຽວຂອງທຸກຝ່າຍໃນການປັບປຸງ ແລະ ປະຕິບັດຕາມຍຸດທະສາດ ແລະ ແຜນປະຕິບັດງານທີ່ໄດ້ນໍາສະເໜີມານີ້ ຕາມຄວາມເໝາະສົມ ແລະ ສອດຄ່ອງກັບສະພາບການພັດທະນາກະສິກໍາ ແລະ ພັດທະນາຊົນນະບົດໃນ ສປປ ລາວ.

# I. ພາກສະເໜີ

ລັດຖະບານລາວ ພວມກຳລັງຕັ້ງໜ້າຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX (9th NSEDP 2021 – 2025 )ໃນໄລຍະສຸດທ້າຍຂອງ ແລະ ເພື່ອແກ້ໄຂປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຈາກພະຍາດໂຄວິດ-19 ແລະ ແກ້ໄຂບັນດາບັນຫາໂຄງສ້າງທີ່ແກ່ຍາວມາແຕ່ດົນນານ. ແຜນດັ່ງກ່າວມີເປົ້າໝາຍໃຫ້ ສປປ ລາວ ຫຼຸດພົ້ນຈາກສະຖານະປະເທດດ້ອຍພັດທະນາ (Least Developed Country/ LDC) ພາຍໃນປີ 2026 ແລະ ເປັນປະເທດທີ່ມີລາຍໄດ້ປານກາງສູງສຸດ (Upper middle income/UPM) ໃນປີ 2030 ຜ່ານຍຸດທະສາດສອງຄວບຄູ່ກັນເຊິ່ງເນັ້ນໃສ່ທັງນະວັດຕະກຳດີຈິຕອນ ແລະ ເສດຖະກິດສີຂຽວ. ຂໍ້ລິເລີ່ມທີ່ສຳຄັນລວມມີການເຮັດໃຫ້ພື້ນຖານໂຄງລ່າງທັນສະໄໝ, ປັບປຸງການສະໜອງການບໍລິການ, ແລະ ການສ້າງສະພາບແວດລ້ອມທາງທຸລະກິດທີ່ດຶງດູດການລົງທຶນ. ທັງໝົດນີ້, ແມ່ນໄດ້ລວມເອົາຍຸດທະສາດການເຊື່ອມໂຍງ ແລະ ການສົ່ງອອກໃນຕ່ອງໂສ້ມູນຄ່າຂອງພາກພື້ນ.

ໜຶ່ງໃນຈຸດສຸມທີ່ສຳຄັນຂອງ 9th NSEDP ນີ້ແມ່ນການພັດທະນາຊົນນະບົດ, ເຊິ່ງເປັນສິ່ງສຳຄັນທີ່ສຸດຍ້ອນວ່າຫຼາຍກວ່າ 65% ຂອງປະຊາກອນລາວອາໄສຢູ່ໃນເຂດຊົນນະບົດ ແລະ ອີງໃສ່ກະສິກຳເປັນຫຼັກ. ໃນຂະນະທີ່ ສປປ ລາວ ກຳລັງມີການຂະຫຍາຍຕົວທາງດ້ານເສດຖະກິດຢ່າງໄວວາ ຍ້ອນການຮ່ວມມືຢ່າງໃກ້ຊິດກັບປະເທດເພື່ອນບ້ານ, ສິ່ງທ້າທາຍດ້ານຄວາມບໍ່ສະເໝີພາບໃນແຕ່ລະທ້ອງຖິ່ນຍັງຄົງຢູ່, ໂດຍສະເພາະໃນສະພາບທີ່ການດຳລົງຊີວິດຂອງປະຊາຊົນລາວ 50 ຊົນເຜົ່າມີຄວາມຫຼາກຫຼາຍ ແລະ ຈຸດພິເສດຕ່າງກັນ. ຖ້າບໍ່ມີວິທີການທີ່ມີຫົວຄິດປະດິດສ້າງ ແລະ ຍືນຍົງ, ອາດຫຍຸ້ງຍາກທີ່ຈະບັນລຸໄດ້ໃນການຫຼຸດຜ່ອນຄວາມທຸກຍາກ, ພັດທະນາການສຶກສາ, ສາທາລະນະສຸກ ແລະ ຊີວິການເປັນຢູ່ຂອງຊາວຊົນນະບົດ.

ບົດລາຍງານສະບັບນີ້ວິເຄາະສະພາບການພັດທະນາຊົນນະບົດໃນປະຈຸບັນ ແລະ ທົບທວນຄືນບັນດາໂຄງການຊ່ວຍເຫຼືອຈາກສາກົນ, ໂດຍສະເພາະແມ່ນໂຄງການທີ່ໄດ້ຮັບການສະໜັບສະໜູນຈາກ KOICA, ເພື່ອກຳນົດເຖິງຜົນສຳເລັດ ແລະ ຊ່ອງຫວ່າງທີ່ຍັງມີຢູ່. ບົດລາຍງານໄດ້ສະເໜີແຜນດຳເນີນງານດ້ານນະໂຍບາຍທີ່ມີຈຸດສຸມ ແລະ ສະເພາະ ເພື່ອຮັດແໜ້ນຊ່ອງຫວ່າງລະຫວ່າງຕົວເມືອງ ກັບຊົນນະບົດ, ໂດຍສຸມໃສ່ການພັດທະນາຊັບພະຍາກອນມະນຸດທີ່ມີສີມືແຮງງານ ແລະ ເສີມຂະຫຍາຍຄວາມເຂັ້ມແຂງໃຫ້ກັບບັນດາຂະແໜງການສຳຄັນຄື: ກະສິກຳ, ປ່າໄມ້, ການທ່ອງທ່ຽວ. ນອກຈາກນັ້ນ, ສິ່ງທ້າທາຍດ້ານເສດຖະກິດມະຫາພາກທີ່ພວມດຳເນີນຢູ່ເຊັ່ນ: ໜີ້ສິນພາຍນອກທີ່ເພີ່ມຂຶ້ນ, ອັດຕາເງິນເຟີ້ທີ່ເພີ່ມຂຶ້ນ, ແລະ ຄວາມສ່ຽງຕໍ່ການປ່ຽນແປງດິນຟ້າອາກາດ (ເຊັ່ນ: ໄພແຫ້ງແລ້ງ, ໄພນ້ຳຖ້ວມ, ແລະໄຟໄໝ້ປ່າ) ລ້ວນແຕ່ຊີ້ໃຫ້ເຫັນເຖິງຄວາມຈຳເປັນໃນການທີ່ຈະຫັນປ່ຽນຈາກວິທີການຈັດການ ແບບດັ້ງເດີມໄປສູ່ວິທີການປະສົມປະສານທີ່ສ້າງສັນ ແລະ ເປັນມິດຕໍ່ສິ່ງແວດລ້ອມຢ່າງຍືນຍົງ.

ໂດຍລວມແລ້ວ, ແຜນດຳເນີນງານທີ່ນຳສະເໜີໃນບົດລາຍງານສະບັບນີ້ ບໍ່ພຽງແຕ່ສະໜັບສະໜູນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX (9th NSEDP) ຢ່າງມີປະສິດທິຜົນເທົ່ານັ້ນ, ແຕ່ຍັງວາງພື້ນຖານໃຫ້ແກ່ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ X ( 10th NSEDP 2026 – 2030) ອີກດ້ວຍ. ໂດຍການວາງຍຸດທະສາດໃຫ້ສອດຄ່ອງກັບບຸລິມະສິດຂອງການພັດທະນາໃນລະດັບທ້ອງຖິ່ນ ແລະ ສົ່ງເສີມະບອນການຕັດສິນໃຈແບບລວມ ແລະ ເປັນສູນກາງ, ກອບແນວທາງນີ້ແນໃສ່ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ເສດຖະກິດແຫ່ງຊາດ ແລະ ປັບປຸງຄຸນນະພາບຊີວິດຂອງປະຊາຊົນໃນເຂດຊົນນະບົດໃນທົ່ວ ສປປ ລາວ ຢ່າງຍືນຍົງ.

## II. ສະພາບປັດຈຸບັນ ແລະ ວາລະຂອງການພັດທະນາຊົນນະບົດໃນ ສປປ ລາວ

### 2.1. ດ້ານພູມສາດ

ເນື້ອທີ່ດິນຂອງລາວຫຼາຍກວ່າ 70% ເປັນພູດອຍ ແລະ ພູພຽງ, ໂດຍມີເນື້ອທີ່ພຽງປະມານ 10% ເທົ່ານັ້ນທີ່ເໝາະສົມແກ່ການກະສິກຳ. ເຖິງວ່າຈະມີຂໍ້ຈຳກັດເຫຼົ່ານີ້, ແຕ່ປະຊາກອນປະມານ 65% ຍັງຄົງເຮັດອາຊີບກະສິກຳ, ຍ້ອນສະພາບອາກາດທີ່ເອື້ອອຳນວຍ ແລະ ຄວາມຫຼາກຫຼາຍທາງດ້ານນິເວດວິທະຍາ, ເຊິ່ງສະໜັບສະໜູນຄວາມຫຼາກຫຼາຍທາງດ້ານຊີວະນາໆພັນໃນລະດັບສູງ ແລະ ມີທ່າແຮງສຳລັບການປູກພືດເປັນເສດຖະກິດເຊັ່ນ: ຜັກ, ໝາກໄມ້ເຂດຮ້ອນ, ແລະ ສັດລ້ຽງ.

ເພື່ອຫຼຸດຜ່ອນສິ່ງທ້າທາຍຈາກການເປັນປະເທດທີ່ບໍ່ມີທາງອອກສູ່ທະເລ, ລັດຖະບານລາວໄດ້ຫັນປ່ຽນທັດສະນະພູມສາດໂດຍຜ່ານໂຄງການກໍ່ສ້າງພື້ນຖານໂຄງລ່າງຂະໜາດໃຫຍ່ເຊັ່ນ: ເສັ້ນທາງເລກ 3 (ແລວທາງເໜືອ-ໃຕ້ ເຊື່ອມຕໍ່ໄທ, ລາວ-ຈີນ) ແລະ ເສັ້ນທາງເລກ 9 (ແລວທາງຕາເວັນອອກ-ຕາເວັນຕົກ ເຊື່ອມຕໍ່ໄທ, ລາວ ແລະ ຫວຽດນາມ), ເປັນຕົ້ນແມ່ນການພັດທະນາເຂດເສດຖະກິດພິເສດຈຳນວນ 21 ແຫ່ງໃນ 7 ແຂວງໃນທົ່ວປະເທດ. ການພັດທະນາດັ່ງກ່າວໄດ້ຊຸກຍູ້ການຮ່ວມມືດ້ານເສດຖະກິດກັບປະເທດເພື່ອນບ້ານຫຼາຍຍິ່ງຂຶ້ນ ແລະ ຫັນປ່ຽນໃຫ້ປະເທດລາວເປັນດິນແດນທີ່ມີໂອກາດ ແລະ ທ່າແຮງໃນການລົງທຶນ.

ນອກຈາກນັ້ນ, ໃນແຜນການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX ($9^{th}$ NSEDP ), ຕົວຊີ້ວັດພື້ນຖານດ້ານຊີວິດການເປັນຢູ່ຂອງປະຊາຊົນໄດ້ຮັບການປັບປຸງຢ່າງຫຼວງຫຼາຍ, ໂດຍສະເພາະການເຂົ້າເຖິງນ້ຳສະອາດ, ສຸຂາພິບານ ແລະ ການບໍລິການສາທາລະນະສຸກ. ເຖິງຢ່າງໃດກໍ່ຕາມ, ຄວາມບໍ່ສະເໝີພາບຂອງທ້ອງຖິ່ນຍັງຄົງມີຢູ່, ໂດຍສະເພາະຢູ່ເຂດພາກເໜືອ, ເຊິ່ງອັດຕາສ່ວນຂອງບ້ານທຸກຍາກແມ່ນສູງກວ່າພາກກາງ ແລະ ພາກໃຕ້ຢ່າງຫຼວງຫຼາຍ. ຄຽງຄູ່ກັນນັ້ນ, ການປ່ຽນແປງດິນຟ້າອາກາດຍັງຄົງເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ຊຸມຊົນຊົນນະບົດ, ໂດຍສະເພາະຜູ້ທີ່ອາໄສການເຮັດກະສິກຳເປັນຕົ້ນຕໍ, ເນື່ອງຈາກຝົນຕົກທີ່ຜິດປົກກະຕິ ແລະ ຄວາມສ່ຽງເພີ່ມຂຶ້ນຈາກໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງ ສົ່ງຜົນກະທົບຕໍ່ການຜະລິດກະສິກຳໂດຍກົງ.

ເພື່ອແກ້ໄຂຕໍ່ສະພາບການດັ່ງກ່າວ, ຍຸດທະສາດພັດທະນາໃນແຕ່ລະຂົງເຂດຈຶ່ງມີຄວາມແຕກຕ່າງກັນ. ໂດຍພາກເໜືອຈະໃຫ້ຄວາມສຳຄັນກັບຄວາມຫຼາກຫຼາຍຂອງພືດໄຮ່ເຊັ່ນ: ມັນຝຣັ່ງ, ສາລີ, ອ້ອຍ, ແລະການລ້ຽງສັດເພື່ອຕອບສະໜອງຄວາມຕ້ອງການສົ່ງອອກ. ສ່ວນພາກກາງ, ເຊິ່ງໄດ້ຮັບການໜູນຊ່ວຍຈາກຂະແໜງການຜະລິດ ແລະ ທ່ອງທ່ຽວທີ່ນັບມື້ນັບເພີ່ມຂຶ້ນຢ່າງຕໍ່ເນື່ອງ, ໄດ້ສຸມໃສ່ການປູກຝັງຄື: ຜັກທຽມ, ສາລີຫວານ ແລະ ການສົ່ງອອກບັນດາຜະລິດຕະພັນພິເສດ. ພ້ອມກັນນັ້ນ, ພາກໃຕ້ໄດ້ມີການເຕີບໂຕຢ່າງບໍ່ຢຸດຢັ້ງໃນຂົງເຂດກະສິກຳ ແລະ ການປຸງແຕ່ງກະສິກຳ, ໂດຍສະເພາະແມ່ນຜະລິດຕະພັນກາເຟ, ຢາງພາລາ, ຜະລິດຕະພັນຊີ້ນສັດ.

### 2.2. ດ້ານເສດຖະກິດ ແລະ ອຸດສະຫະກຳ

ສປປ ລາວ ຖືກຈັດຢູ່ໃນປະເທດທີ່ມີຄ່າຄອງຊີບຕ່ຳ ທີ່ໄດ້ຮັບຜົນປະໂຫຍດຈາກປະຊາກອນໃນໄວເຮັດວຽກທີ່ເພີ່ມຂຶ້ນຢ່າງຕໍ່ເນື່ອງ - ໂດຍຄາດວ່າຈະເພີ່ມຂຶ້ນຈາກ 64% ໃນປີ 2020 ເປັນ 69% ໃນປີ 2030. ດ້ວຍທີ່ຕັ້ງຢູ່ໃນເຂດອະນຸພາກພື້ນແມ່ນ້ຳຂອງຕອນລຸ່ມ, ລາວຈຶ່ງໄດ້ປຽບທາງດ້ານຍຸດທະສາດໂດຍຜ່ານແລວທາງຄົມມະນາຄົມຫຼັກທີ່ສຳຄັນ ໄດ້ແກ່ (ແລວທາງຕາເວັນອອກ-ຕາເວັນຕົກ ແລະ ເໜືອ-ໃຕ້ ) ລວມເຖິງການເປີດບໍລິການທາງລົດໄຟຄວາມໄວສູງລາວ-ຈີນ ໃນປີ 2021, ເຊິ່ງຊ່ວຍຍູ້ແຮງການແລກປ່ຽນດ້ານເສດຖະກິດກັບບັນດາປະເທດເພື່ອນບ້ານ. ນັບແຕ່ປີ 2003 ເປັນຕົ້ນມາ, ໂຄງການເຂດເສດຖະກິດພິເສດ (Special Economic Zone /SEZ) ຈຳນວນ 21 ໃນ 7 ແຂວງໄດ້ຊ່ວຍຊຸກຍູ້ການເຕີບໂຕດ້ານການຜະລິດ, ການຄ້າ, ການທ່ອງທ່ຽວ, ກະສິກຳໃນເຂດຊົນນະບົດຢ່າງຕໍ່ເນື່ອງ.

ຂະແໜງກະສິກຳ ແລະ ປ່າໄມ້ ໄດ້ປະກອບສ່ວນ 19,76% ເຂົ້າໃນ GDP ໃນປີ 2023, ແລະ ແມ່ນການສົ່ງອອກເປັນຫຼັກ, ໂດຍມີຕະຫຼາດທີ່ສຳຄັນຄື ຫວຽດນາມ, ຈີນ, ໄທ, ແຕ່ກໍ່ຍັງປະເຊີນກັບສິ່ງທ້າທາຍຈາກພື້ນຖານໂຄງລ່າງການຜະລິດ ແລະ ປຸງແຕ່ງທີ່ຍັງບໍ່ພຽງພໍ. ເພື່ອແກ້ໄຂບັນຫາດັ່ງກ່າວ, ຈຶ່ງໄດ້ສຸມໃສ່ສົ່ງເສີມການດຶງດູດການລົງທຶນໂດຍກົງຈາກຕ່າງປະເທດ (FDI) ໂດຍຜ່ານການສຳປະທານຂະໜາດໃຫຍ່ (ສຳລັບປູກຢາງພາລາ, ມັນຕົ້ນ, ອ້ອຍ, ແລະ ຢູກາລິບຕັນ); ດຳເນີນໄປຄວບຄູ່ກັບໂຄງການລິເລີ່ມຕ່າງໆ ເພື່ອຈັດຕັ້ງຊາວກະສິກອນຂະໜາດນ້ອຍເຂົ້າເປັນສະຫະກອນ ແລະ ຂໍ້ຕົກລົງການເຮັດກະສິກຳແບບມີສັນຍາ. ນອກຈາກນັ້ນ, ຍັງມີນະໂຍບາຍທາງເລືອກທີ່ສົ່ງເສີມການຜະລິດແບບ “ສະອາດ” ແລະ “ອັດສະລິຍະ” ໂດຍສົ່ງເສີມການນ□າໃຊ້ລະບົບກະສິກ□າອິນຊີ (OA) ແລະ ກະສິກຳທີ່ດີ (GAP) ເພື່ອຍົກສູງຄຸນນະພາບຜະລິດຕະພັນໃຫ້ສາມາດແຂ່ງຂັນໄດ້ໃນຕະຫຼາດສົ່ງອອກທີ່ສຳຄັນ. ນອກຈາກນັ້ນ, ຄວາມຫຼາກຫຼາຍທາງດ້ານວັດທະນະທຳຂອງຊົນເຜົ່າຫຼາຍກວ່າ 50 ຊົນເຜົ່າ ແລະ ຊັບພະຍາກອນທຳມະຊາດອັນອຸດົມສົມບູນ ຂອງແຕ່ລະເຂດ ເປັນປັດໃຈໜຶ່ງທີ່ເຮັດໃຫ້ຄວາມບໍ່ສະເໝີພາບການພັດທະນາລະຫວ່າງທ້ອງຖິ່ນ ແລະ ກໍ່ໃຫ້ເກີດເປັນສິ່ງທ້າທາຍດ້ານສິ່ງແວດລ້ອມ. ເຖິງຢ່າງໃດກໍ່ຕາມ, ຄຸນລັກສະນະສະເພາະເຫຼົ່ານີ້ຍັງເປີດໂອກາດອັນສຳຄັນໃນການສົ່ງເສີມການທ່ອງທ່ຽວດ້ານວັດທະນະທຳ ແລະ ການພັດທະນາເສດຖະກິດຊົນນະບົດໃນຮູບແບບທີ່ຫຼາກຫຼາຍ.

## 2.3. ດ້ານການສຶກສາ ແລະ ສະຫວັດດີການສັງຄົມ

ນັບແຕ່ປີ 2020 ເປັນຕົ້ນມາ, ຂະແໜງການສຶກສາ ແລະ ສະຫວັດດີການສັງຄົມຂອງ ສປປ ລາວ ໄດ້ປະເຊີນກັບສິ່ງທ້າທາຍຢ່າງໃຫຍ່ຫຼວງຈາກການແຜ່ລະບາດຂອງພະຍາດໂຄວິດ-19. ການເພີ່ມຂຶ້ນຂອງຄ່າຄອງຊີບ ແລະ ລາຄານ້ຳມັນ, ບວກກັບການຂາດແຄນຄູສອນໃໝ່, ສົ່ງຜົນໃຫ້ມີອັດຕາການເຂົ້າຮຽນຫຼຸດລົງ ແລະ ອັດຕາການອອກໂຮງຮຽນເພີ່ມຂຶ້ນ. ເຖິງວ່າຈະມີສິ່ງທ້າທາຍເຫຼົ່ານີ້, ໂຮງຮຽນຕ່າງໆກໍສາມາດກັບມາເປີດຄືນໃຫມ່ໄດ້ຢ່າງປອດໄພໂດຍໄດ້ຮັບການສະໜັບສະໜູນຈາກສື່ ແລະ ໄດ້ມີການຈັດຕັ້ງປະຕິບັດໂຄງການທີ່ສຳຄັນເຊັ່ນ: ການຈັດຕັ້ງ "ຄັງປັນຍາລາວ" ເປັນຖານຂໍ້ມູນການຮຽນການສອນ, ການພັດທະນາເນື້ອໃນການສອນໃນຮູບແບບດິຈິຕອນ, ແລະ ການເສີມສ້າງສະໜັບສະໜູນດ້ານສຸຂະພາບຈິດຂອງຄູ ແລະ ນັກຮຽນຢ່າງຕໍ່ເນື່ອງ.

ການປັບປຸງທີ່ເຫັນໄດ້ຊັດເຈນໃນທົ່ວທຸກຂະແໜງການສຶກສາ: ຈຳນວນການເຂົ້າໂຮງຮຽນກ່ອນໄວຮຽນເພີ່ມຂຶ້ນ, ການເຂົ້າເຖິງການສຶກສາຊັ້ນປະຖົມສຶກສາ ແລະ ພື້ນຖານໂຄງລ່າງໄດ້ຮັບການປັບປຸງດີຂຶ້ນ, ແລະ ຄຸນນະພາບຂອງການສຶກສາມັດທະຍົມກໍ່ໄດ້ຮັບການປັບປຸງ. ອັດຕາການອອກໂຮງຮຽນໄດ້ຫຼຸດລົງ. ນອກຈາກນັ້ນ, ໂຄງການການສຶກສານອກໂຮງຮຽນໄດ້ຊ່ວຍຫຼຸດຜ່ອນອັດຕາການບໍ່ຮູ້ໜັງສື, ການຝຶກອົບຮົມຄູໄດ້ປັບປຸງທັກສະວິຊາຊີບ, ແລະ ການສຶກສາດ້ານວິຊາການ ແລະ ອາຊີວະສຶກສາເຂົ້າເຖິງໄດ້ຫຼາຍຂຶ້ນ. ປັດຈຸບັນມີປະມານ 39,000 ຄົນກຳລັງສຶກສາຢູ່ສະຖາບັນດ້ານກະສິກຳ (2020-2024).

ຢ່າງໃດກໍ່ຕາມ, ການພັດທະນາກຳລັງແຮງງານຍັງຄົງເປັນປະເດັນທີ່ມີຄວາມກັງວົນ. ໂດຍການມີສ່ວນຮ່ວມຢ່າງຈຳກັດຂອງຜູ້ປະກອບການໃນການວາງແຜນດ້ານກຳລັງແຮງງານ ສົ່ງຜົນເຮັດໃຫ້ການຂາດແຄນຜູ້ສຳເລັດການສຶກສາທີ່ມີຄຸນນະພາບສູງ, ແລະ ການສະໜັບສະໜູນດ້ານການຕະຫຼາດສຳລັບຜູ້ຮຽນຈົບການສຶກສາວິຊາຊີບຍັງບໍ່ພຽງພໍ. ໃນລະຫວ່າງກອງປະຊຸມ NSEDP ຄັ້ງທີ IX, ວິສາຫະກິດບໍລິການຈັດຫາວຽກເຮັດງານທຳ 46 ແຫ່ງ, ດຳເນີນທຸລະກິດທັງແບບພົບໜ້າ ແລະ ອອນລາຍ, ໄດ້ປັບປຸງລະບົບການຈ້າງງານໃຫ້ທັນສະໄໝຜ່ານລະບົບຂໍ້ມູນຂ່າວສານຕະຫຼາດແຮງງານ (Labor Market Information System/LMIS) ທີ່ໄດ້ຮັບການປັບປຸງໃໝ່, ເຊິ່ງປະຈຸບັນໄດ້ເພີ່ມປະສິດທິພາບໃນການເຊື່ອມຕໍ່ລະຫວ່າງຜູ້ຊອກວຽກ ແລະ ໂອກາດຕ່າງໆໃນທົ່ວປະເທດ.

## 2.4. ດ້ານສະພາບການດຳລົງຊີວິດ

ການພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກແມ່ນຖືເປັນບູລິມະສິດແຫ່ງຊາດຂອງ ສປປ ລາວ. ຕາມດຳລັດຂອງສູນກາງພັກ ສະບັບເລກທີ 097/PDCP ໄດ້ກຳນົດໄວ້, ໃນໄລຍະປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດຄັ້ງທີ IX (9th NSEDP) ມີຄວາມຄືບໜ້າຢ່າງຊັດເຈນໃນດ້ານການບໍລິການພື້ນຖານສໍາລັບຊົນນະບົດ. ຕົວຢ່າງ, ອັດຕາການເຂົ້າເຖິງນໍ້າສະອາດໄດ້ເພີ່ມຂຶ້ນຈາກ 90.1% ໃນປີ 2021 ເປັນ 94.41% ໃນເດືອນກັນຍາ 2024, ແລະ ການເຂົ້າເຖິງຫ້ອງນໍ້າກໍ່ໄດ້ຮັບການປັບປຸງໃນລັກສະນະທີ່ຄ້າຍຄືກັນ. ເຖິງວ່າຈະມີຄວາມຄືບໜ້າໃນຫຼາຍຂົງເຂດກໍ່ຕາມ, ແຕ່ສິ່ງທ້າທາຍຫຼາຍຢ່າງຍັງຄົງມີຢູ່ຄື: ຄອບຄົວທຸກຍາກຫຼວງຫຼາຍຄອບຄົວ, ບ້ານດ້ອຍພັດທະນາຫຼາຍໆບ້ານ, ແລະ ຫຼາຍເມືອງທີ່ຕ້ອງໄດ້ເອົາໃຈໃສ່ ແລະ ແກ້ໄຂຢ່າງຮີບດ່ວນ.

ເງື່ອນໄຂທີ່ໃຊ້ໃນການວັດແທກ "ການເປັນຢູ່ທີ່ດີ" – ເຊິ່ງລວມທັງທີ່ຢູ່ອາໄສທີ່ປອດໄພ, ຊັບສິນທີ່ພຽງພໍ, ແຮງງານໃນຄົວເຮືອນທີ່ພຽງພໍ, ລະດັບການສຶກສາທີ່ໄດ້ຮັບ ແລະ ການເຂົ້າເຖິງການບໍລິການຂັ້ນພື້ນຖານອາດຖືໄດ້ວ່າ ບໍ່ສອດຄ່ອງກັບສະພາບປັດຈຸບັນແລ້ວເນື່ອງຈາກສະພາບເສດຖະກິດ ແລະ ສັງຄົມທີ່ປ່ຽນໄປ. ເຖິງວ່າຈະມີຄວາມກ້າວຈາກການພັດທະນາທາງດ້ານໂທລະຄົມການສື່ສານກໍ່ຕາມ, ແຕ່ກໍຍັງມີພຽງໝູ່ບ້ານຈໍານວນໜ້ອຍເທົ່ານັ້ນທີ່ສາມາດເຂົ້າເຖິງເຄື່ອຂ່າຍ 4G ແລະ ໂດຍສະເພາະຢ່າງຍິ່ງແມ່ນເຄືອຂ່າຍ 5G. ໃນຂະນະດຽວກັນ, ການເປັນເຈົ້າຂອງເຄື່ອງຈັກທາງກະສິກໍາຂອງປະຊາຊົນກໍ່ຍັງຢູ່ໃນລະດັບຕໍ່າ.

ນອກຈາກນັ້ນ, ການຂະຫຍາຍຕົວທາງດ້ານອຸດສາຫະກໍາຢ່າງວ່ອງໄວເຮັດໃຫ້ການຈັດສັນທີ່ດິນສ່ວນລວມຖືກຈໍາກັດ, ສົ່ງຜົນກະທົບຕໍ່ການຜະລິດກະສິກໍາ ແລະ ສະພາບຊີວິດການເປັນຢູ່ໂດຍລວມ. ນອກຈາກນັ້ນ, ການຂາດການວາງແຜນການຮັບມືຕໍ່ການປ່ຽນແປງດິນຟ້າອາກາດ ແລະ ມາດຕະຖານທີ່ຢູ່ອາໄສທີ່ບໍ່ສະໝໍ່າສະເໝີ, ໂດຍສະເພາະໃນພື້ນທີ່ທີ່ສ່ຽງເກີດໄພນໍ້າຖ້ວມ, ຊີ້ໃຫ້ເຫັນເຖິງຄວາມຈໍາເປັນຂອງວິທີການຈັດການຄວາມສ່ຽງຢ່າງຮອບດ້ານ ແລະ ການສົ່ງເສີມໂຄງການທີ່ຢູ່ອາໄສທີ່ປອດໄພໂດຍຖືເອົາຊຸມຊົນເປັນສູນກາງ.

## 2.5. ດ້ານປະຊາທິປະໄຕໃນລະດັບຮາກຖານ- ດ້ານຊຸມຊົນຂັ້ນບ້ານ

ນະໂຍບາຍສາມສ້າງຂອງລັດຖະບານລາວ ທີ່ແນໃສ່ຊຸກຍູ້ການພັດທະນາຮາກຖານຢ່າງສົມດູນ ໂດຍຜ່ານການວາງແຜນການແບ່ງຂັ້ນ, ຂັ້ນແຂວງ, ເມືອງ, ບ້ານ, ຍັງບໍ່ທັນບັນລຸໄດ້ຜົນຕາມຈຸດປະສົງຄາດໝາຍອັນເນື່ອງມາຈາກມີຂໍ້ຈໍາກັດຫຼາຍຢ່າງ. ເຖິງວ່າການພັດທະນາຊົນນະບົດໃນລາວໄດ້ຮັບການສົ່ງເສີມໂດຍໃຊ້ວິທີອີງໃສ່ຮາກຖານຕັ້ງແຕ່ປີ 1988 ເປັນຕົ້ນມາ ແລະ ມີການນໍາແນວຄວາມຄິດການພັດທະນາໂດຍຂັບເຄື່ອນຈາກຊຸມຊົນ (CDD) ຢ່າງມີປະສິດທິພາບມາໃຊ້ໃນປີ 2004, ແຕ່ຍັງມີຫຼາຍໂຄງການປະຕິບັດຕາມຮູບແບບຈາກຂັ້ນເທິງລົງລຸ່ມ ເຊິ່ງປະຊາຊົນໃນທ້ອງຖິ່ນພຽງແຕ່ໄດ້ຮັບການແຈ້ງຂໍ້ມູນເທົ່ານັ້ນ ໂດຍບໍ່ໄດ້ມີສ່ວນຮ່ວມໃນການຕັດສິນໃຈຢ່າງແທ້ຈິງ. ສະຖານະການດັ່ງກ່າວເຮັດໃຫ້ການມີສ່ວນຮ່ວມຂອງຊຸມຊົນຈໍາກັດ ແລະ ຄວາມສາມາດໃນການພັດທະນາທ້ອງຖິ່ນອ່ອນແອລົງ. ເພື່ອແກ້ໄຂກັບບັນຫາດັ່ງກ່າວນີ້, ໂຄງການພັດທະນາຊົນນະບົດໄລຍະທີ 2 (2021-2025) ທີ່ໄດ້ຮັບການສະໜັບສະໜູນຈາກ **KOICA** ໄດ້ພະຍາຍາມປະສານແນວທາງຈາກຂັ້ນເທິງລົງລຸ່ມໂດຍການມີສ່ວນຮ່ວມຂອງທ້ອງຖິ່ນຢ່າງແທ້ຈິງ, ໂດຍໃຫ້ຄວາມສໍາຄັນກັບການຈັດຕັ້ງປະຕິບັດຮ່ວມກັນຢ່າງສອດຄ່ອງ ລະຫວ່າງລັດຖະບານລະດັບສູນກາງ, ແຂວງ, ເມືອງ, ຕະຫຼອດຮອດ ລະຫວ່າງບັນດາເຈົ້າໜ້າທີ່ລັດຖະບານ ແລະ ຊາວບ້ານໃນໝູ່ບ້ານ. ເພື່ອເພີ່ມຄວາມຍືນຍົງຂອງໂຄງການ, ຈໍາເປັນຕ້ອງໄດ້ກໍານົດພາລະບົດບາດຂອງຜູ້

ຈັດບໍລິຫານໂຄງການຮ່ວມ **(Co-PM)** ໃນການຄຸ້ມຄອງທຸກລະດັບເພື່ອຮັບປະກັນການປະສານງານຢ່າງຕໍ່ເນື່ອງແລະ ປະສິດທິພາບພາຍໃຕ້ກອບນະໂຍບາຍສາມສ້າງ.

### 2.6. ແຜນພັດທະນາ 5 ປີຄັ້ງທີ X ຂອງກະຊວງກະສິກຳ ແລະ ປ່າໄມ້

ປະຈຸບັນ, ກະຊວງກະສິກຳ ແລະ ປ່າໄມ້ (MAF) ກຳລັງສ້າງແຜນພັດທະນາໄລຍະ 5 ປີ ສຳລັບແຜນພັດທະນາ ກະສິກຳ, ປ່າໄມ້ ແລະ ຊົນນະບົດ ຄັ້ງທີ X (2026 – 2030). ໂດຍຮ່າງແຜນການ 5 ປີຄັ້ງທີ X ໄດ້ກຳນົດບັນດາສິ່ງທ້າທາຍ, ໂອກາດ, ທິດທາງ, ແລະ ເປົ້າໝາຍລວມດັ່ງນີ້:

**ທິດທາງລວມ:** ສຸມໃສ່ການລະດົມທຸກກຳລັງແຮງທັງໝົດໃນການຊຸກຍູ້ການຜະລິດທາງກະສິກຳ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານແລະ ໂພສະນາການ, ຜະລິດສິນຄ້າກະສິກຳ ແລະ ຜະລິດຕະພັນປຸງແຕ່ງໃຫ້ມີຄຸນນະພາບ ແລະ ຫຼາກຫຼາຍ, ເພີ່ມລາຍຮັບຂອງປະຊາຊົນ, ຫຼຸດຜ່ອນຄວາມທຸກຍາກ, ປັບປຸງຊີວິດການເປັນຢູ່ຂອງປະຊາຊົນຊົນນະບົດ, ໄປຄຽງຄູ່ກັບການອະນຸລັກຮັກສາ ແລະ ພັດທະນາຊັບພະຍາກອນປ່າໄມ້, ສ້າງມູນຄ່າເພີ່ມ, ເພີ່ມລາຍຮັບໃຫ້ເສດຖະກິດຂອງຊາດ.

**ເປົ້າໝາຍລວມ:** ເປົ້າໝາຍໂດຍລວມຂອງແຜນພັດທະນາໄລຍະ 5 ປີ ຄັ້ງທີ X ຂອງກະຊວງກະສິກຳ ແລະ ປ່າໄມ້ ແມ່ນເພື່ອເລັ່ງການຂະຫຍາຍຕົວຂອງຂະແໜງກະສິກຳ ແລະ ປ່າໄມ້ ໃຫ້ບັນລຸ 18,7% ຂອງ GDP. ໂດຍຄາດວ່າອັດຕາການຂະຫຍາຍຕົວຂອງແຕ່ລະຂະແໜງການຈະເພີ່ມຂຶ້ນມີດັ່ງນີ້: ພືດ 3.0%, ສັດລ້ຽງ 4.5%, ສັດປີກ 5.0%, ການປະມົງ 4.3% ແລະ ປ່າໄມ້ 4.4% (ແຫຼ່ງຂໍ້ມູນ: ກົມແຜນການ ແລະ ການຮ່ວມມື, ກປ, ເດືອນກຸມພາ 2025). ນອກຈາກນັ້ນ, ຍັງຕັ້ງເປົ້າໝາຍໃຫ້ພື້ນທີ່ປ່າໄມ້ຄອບຄຸມໃຫ້ໄດ້ 70% ຂອງເນື້ອທີ່ທັງໝົດຂອງປະເທດ. ກ່ຽວກັບການຫຼຸດຜ່ອນຄວາມທຸກຍາກ, ລັດຖະບານລາວມີເປົ້າໝາຍເພື່ອຍົກ 90% ຂອງຄອບຄົວໃນທົ່ວປະເທດໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ.

**ເພື່ອບັນລຸຄາດໝາຍ, ກະຊວງກະສິກຳ ແລະ ປ່າໄມ້ ໄດ້ກຳນົດ 4 ແຜນງານຫຼັກດັ່ງນີ້;**

1) ແຜນງານຜະລິດກະສິກຳ ເພື່ອຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ແລະ ໂພຊະນາການ;
2) ແຜນງານຜະລິດກະສິກຳເປັນສິນຄ້າ ແລະ ການແປຮູບຂັ້ນຕົ້ນເພື່ອການບໍລິໂພກພາຍໃນປະເທດ ແລະ ການສົ່ງອອກ;
3) ແຜນງານບໍລິຫານຈັດການ, ພັດທະນາ ແລະ ນຳໃຊ້ຊັບພະຍາກອນປ່າໄມ້ແບບຍືນຍົງ; ແລະ
4) ແຜນງານພັດທະນາຊົນນະບົດ ແລະ ການແກ້ໄຂຄວາມທຸກຍາກ

**ໃນ 4 ແຜນງານຫຼັກຂອງ ກປ, ແຜນງານພັດທະນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ 5 ປີ (2026-2030) ມີເປົ້າໝາຍດັ່ງນີ້:**

- ຫຼາຍກວ່າ 100,000 ຄອບຄົວສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ;
- ຫຼາຍກວ່າ 1,000 ບ້ານສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ;
- ຫຼາຍກວ່າ 25-30 ເມືອງສາມາດຫຼຸດພົ້ນອອກຈາກຄວາມທຸກຍາກ.
- ຫຼາຍກວ່າ 200,000 ຄອບຄົວ ບັນລຸຄອບຄົວທີ່ພັດທະນາແລ້ວ;
- ຫຼາຍກວ່າ 2,000 ບ້ານ ບັນລຸບ້ານພັດທະນາ;
- ສ້າງ 20 ເມືອງ ໃຫ້ເຂັ້ມແຂງຮອບດ້ານ;

- ເຮັດໃຫ້ 25 ບ້ານໃຫຍ່ກາຍເປັນຕົວເມືອງໃນເຂດຊົນນະບົດ;
- ຈັດສັນພູມລຳເນົາສ້າງຕັ້ງຖິ່ນຖານ ແລະ ອາຊີບ 20 ຈຸດ.
- ສະໜອງກອງທຶນພັດທະນາບ້ານໃນ 100 ເມືອງທີ່ທຸກຍາກ.

## III. ຄວາມຄືບໜ້າ ແລະ ສິ່ງທ້າທາຍໃນໂຄງການພັດທະນາຊົນນະບົດ

ດ້ວຍການສະໜັບສະໜູນຂອງອົງການພັດທະນາແຫ່ງສະຫະປະຊາຊາດ UNDP, ສປປ ລາວ ໄດ້ຈັດຕັ້ງປະຕິບັດຕາມແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະ 5 ປີ (NSEDP), ໂດຍຂະນະນີ້ແມ່ນຢູ່ໃນຫວ່າງການຈັດຕັ້ງແຜນຄັ້ງທີ IX  (2021-2025) ແລະ ຢູ່ໃນລະຫວ່າງການວາງແຜນການຄັ້ງທີ X (2026-2030). ນັບແຕ່ຕົ້ນປີ 2024 ເປັນຕົ້ນມາ,  ໄດ້ມີການປະເມີນຜົນເພື່ອພິຈາລະນາວ່າໂຄງການພັດທະນາທີ່ໄດ້ຮັບງົບປະມານສະໜັບສະໜູນນັ້ນ  ສາມາດບັນລຸໄດ້ຕາມເປົ້າໝາຍທີ່ກຳ ນົດໄວ້ໄດ້ຫຼືບໍ່. ໃນຂົງເຂດກະສິກຳ, ຍຸດທະສາດການພັດທະນາກະສິກຳເປັນພື້ນຖານທີ່ສຳຄັນຂອງແຜນງານຫຼັກຕ່າງໆ ຈົນເຖິງປີ 2025. ແນວໃດກໍ່ຕາມ, ຄວາມກັງວົນກ່ຽວກັບອຸປະສັກໃນການຈັດຕັ້ງປະຕິບັດເຊັ່ນ: ການຈັດບູລິມະສິດຄວາມສຳຄັນທີ່ບໍ່ຊັດເຈນ ແລະ ການຈັດສັນງົບປະມານທີ່ບໍ່ພຽງພໍ, ເຖິງແມ່ນວ່າຈະມີຄວາມກ້າວໜ້າຢ່າງຕໍ່ເນື່ອງໃນດ້ານການບໍລິຫານການເງິນ, ເຊິ່ງໄດ້ຊ່ວຍຫຼຸດການຂາດດຸນງົບປະມານຫຼຸດລົງເທື່ອລະກ້າວ. ເຖິງວ່າຈະມີຄວາມກ້າວໜ້າດ້ານກະສິກຳ ແລະ ປ່າໄມ້ຢ່າງຫຼວງຫຼາຍ, ແຕ່ການພັດທະນາຊົນນະບົດຍັງກວມເອົາບັນດາບັນຫາທີ່ກວ້າງຂວາງ (ການສຶກສາ, ສາທາລະນະສຸກ, ສະຫວັດດີການ, ພື້ນຖານໂຄງລ່າງ) ເຊິ່ງປະເມີນໄດ້ຍາກໂດຍອີງໃສ່ການຈັດຕັ້ງປະຕິບັດທາງເສດຖະກິດພຽງຢ່າງດຽວ. ນອກຈາກນັ້ນ, ນັບຕັ້ງແຕ່ປີ 2013, ການສະໜັບສະໜູນຂອງຜູ້ໃຫ້ທຶນໂດຍລວມໄດ້ຫຼຸດລົງ (ຍົກເວັ້ນໃນດ້ານການຈັດການຊັບພະຍາກອນນ້ຳ ແລະ ປ່າໄມ້). ຢ່າງໃດກໍຕາມ, ລັດຖະບານ ສ.ເກົາຫຼີ ໄດ້ຂະຫຍາຍການສະໜັບສະໜູນຢ່າງຕັ້ງໜ້າ, ໂດຍສຸມໃສ່ການຖອດຖອນບົດຮຽນຈາກໂຄງການ KOICA ເພື່ອໃຊ້ເປັນແນວທາງການພັດທະນາຊົນນະບົດໃນອະນາຄົດ.

### 3.1. ການຈັດຕັ້ງປະຕິບັດການພັດທະນາຊົນນະບົດຂອງລັດຖະບານ: ຜົນສຳເລັດ ແລະ ປະເດັນສຳຄັນ

ໃນໄລຍະຂອງແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX ຂອງ ລັດຖະບານລາວ, ພາຍໃຕ້ແນວທາງສາມສ້າງ,  ໄດ້ບັນລຸຜົນສຳເລັດອັນພົ້ນເດັ່ນຫຼາຍຢ່າງລວມທັງການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ LDC ໃນປີ 2018 ແລະ 2021, ໂດຍຄາດວ່າຈະມີຄວາມກ້າວຫນ້າຕື່ມອີກໃນປີ 2024 ແລະ ບັນລຸຫຼຸດພົ້ນໂດຍສົມບູນພາຍໃນປີ 2026, ຄຽງຄູ່ໄປກັບການກ້າວໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ ແລະ ການຂະຫຍາຍຕົວຢ່າງເປັນມິດກັບສິ່ງແວດລ້ອມ ໃນຂະນະດຽວກັນ, ລັດຖະບານຍັງຄົງຮັກສາສະຖຽນລະພາບທາງດ້ານເສດຖະກິດມະຫາພາກໄວ້ໄດ້ ທ່າມກາງພາວະອັດຕາເງິນເຟີ້ທີ່ສູງ ແລະ ການອ່ອນຄ່າຂອງເງິນກີບ, ແລະ ໄດ້ໃຫ້ບຸລິມະສິດຄວາມສຳຄັນໃນການພັດທະນາຊັບພະຍາກອນມະນຸດດ້ວຍການຍົກລະດັບການສຶກສາ, ການບໍລິການສາທາລະນະສຸກ ແລະ ການຝຶກອົບຮົມກຳລັງແຮງງານ, ເຖິງວ່າ ຊ່ອງວ່າງດ້ານຄຸນນະພາບຂອງການພັດທະນາໂດຍລວມຍັງມີຢູ່ກໍ່ຕາມ.

ຂະແໜງກະສິກຳມີການຂະຫຍາຍຕົວຢ່າງຫຼວງຫຼາຍຈາກການເພີ່ມຂຶ້ນຂອງຜະລິດຕະພັນພາຍໃນປະເທດໃນສິນຄ້າຫຼັກຫຼາຍລາຍການ, ໂດຍເຫັນໄດ້ຈາກການຜະລິດອາຫານສັດທີ່ເພີ່ມຂຶ້ນເຖິງ 37,75% ແລະ ການຜະລິດປຸ໋ຍເພີ່ມຂຶ້ນເຖິງ 300% ເຊິ່ງໄດ້ຊ່ວຍຫຼຸດຜ່ອນການເພິ່ງພາການນຳເຂົ້າ ແລະ ການຂະຫຍາຍຕະຫຼາດໂດຍຜ່ານມາດຕະການສຸຂານາໄມ ແລະ ສຸຂານາໄມພືດທີ່ປັບປຸງໃໝ່. ນອກຈາກນັ້ນ, ການສ້າງຕັ້ງສະຫະກອນການຜະລິດຈຳນວນ 18 ແຫ່ງ ແລະ ກຸ່ມຊາວກະສິກອນ 4,000 ກວ່າກຸ່ມ, ເຊິ່ງລວມເຖິງກຸ່ມທີ່ໄດ້ຮັບການຢັ້ງຢືນມາດຕະຖານກະສິກຳອິນຊີ OA ແລະ GAP; ລວມເຖິງການລິເລີ່ມສິ່ງເສີມວິສະຫະກິດຂະໜາດກາງ ແລະ ຂະໜາດນ້ອຍ ທີ່ນຳພາໂດຍແມ່ຍິງໃນຫຼາຍເມືອງ ແລະ ຫຼາຍບ້ານ ໄດ້

ສະທ້ອນໃຫ້ເຫັນຍຸດທະສາດຮອບດ້ານໃນການຊຸກຍູ້ການເຊື່ອມໂຍງລະດັບທ້ອງຖິ່ນ ແລະ ການເຕີບໂຕທາງດ້ານເສດຖະກິດ, ເຖິງແມ່ນຍັງມີສິ່ງທ້າທາຍຕ່າງໆໃນການບັນລຸເປົ້າໝາຍດ້ານການພັດທະນາສີມືແຮງງານກໍຕາມ.

ໃນໄລຍະຊ່ວງການລາຍງານຜົນສຳເລັດການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX, ສປປ ລາວ ໄດ້ປັບປຸງວຽກງານການຄຸ້ມຄອງທາງສັງຄົມ ໂດຍການຝຶກອົບຮົມຜູ້ຊ່ຽວຊານດ້ານສັງຄົມສົງເຄາະໂດຍສະເພາະ, ຈຳນວນ 87 ຄົນ (ຍິງ 25 ຄົນ), ຂະຫຍາຍຄະນະກຳມະການປົກປ້ອງເດັກໃຫ້ກວມເອົາ 40 ເມືອງ (ລື່ນຄາດໝາຍ 14.28%) ແລະ ສ້າງຕັ້ງຄະນະກຳມະການຂັ້ນບ້ານຈຳນວນ 1,793 ຄົນ, ເຊິ່ງລື່ນຄາດໝາຍທີ່ວາງໄວ້ 500 ກວ່າຄົນ, ໂດຍມີຜູ້ໄດ້ຮັບການຝຶກອົບຮົມດ້ານການຄຸ້ມຄອງເດັກນ້ອຍຈຳນວນມີ 1,528 ຄົນ. ການແຈກຢາຍຄວາມຊ່ວຍເຫຼືອດ້ານສະບຽງອາຫານບັນລຸໄດ້ 40,422 ໂຕນ (ມູນຄ່າ 36,322 ລ້ານກີບ) ເຊິ່ງສ້າງຜົນປະໂຫຍດໃຫ້ແກ່ປະຊາຊົນຈຳນວນ 322,160 ຄົນ, ໃນຂະນະດຽວກັນ ການຊ່ວຍເຫຼືອຄອບຄົວທີ່ໄດ້ຮັບຜົນກະທົບຈາກໄພພິບັດໄດ້ຊ່ວຍໃຫ້ມີການກໍ່ສ້າງບ້ານເຮືອນຈຳນວນ 2,928 ຄົວເຮືອນ ແລະ ໃຫ້ການສະໜັບສະໜູນການດຳລົງຊີວິດໃຫ້ແກ່ 196 ຄອບຄົວເຖິງວ່າຈະຍັງມີຂໍ້ຈຳກັດທາງດ້ານທຶນຮອນ ແລະ ງົບປະມານປະກັນສຸຂະພາບທີ່ຫຼຸດລົງ.

ຄວາມພະຍາຍາມໃນການຫຼຸດຊ່ອງຫວ່າງລະຫວ່າງຕົວເມືອງ ແລະ ຊົນນະບົດ ໄດ້ປັບປຸງພື້ນຖານໂຄງລ່າງທີ່ຈຳເປັນໂດຍຂະຫຍາຍລະບົບໄຟຟ້າໄປເຖິງ 7,366 ບ້ານ (ຍັງເຫຼືອ1.146 ບ້ານ,ທີ່ຍັງບໍ່ມີໄຟຟ້າ) ແລະ ຂະຫຍາຍລະບົບນ້ຳປະປາໃຫ້ໄດ້ 117 ເມືອງ ແລະ 1,480 ບ້ານ ກວມເອົາ 77.56% ຂອງພົນລະເມືອງໃນຕົວເມືອງ. ນອກຈາກນັ້ນ, ຍັງໄດ້ມີການລິເລີ່ມຈັດຕັ້ງປະຕິບັດກົນລະຍຸດການປັບປຸງການບໍລິຫານຈັດການທີ່ດິນໃຫ້ທັນສະໄໝ ໂດຍຜ່ານການພັດທະນາລະບົບ ICT , ການທົບທວນໂຄງການທີ່ດິນຈຳນວນ 438 ໂຄງການ (ອອກມະຕິແກ້ໄຂແລ້ວ 101 ໂຄງການ) ແລະ ສ້າງແຜນການຈັດສັນທີ່ດິນໃຫ້ໄດ້ 50 ເມືອງ ແລະ 3,200 ບ້ານ. ຄວາມສາມາດໃນການຮັບມືກັບໄພພິບັດໄດ້ຮັບການສ້າງຄວາມເຂັ້ມແຂງໂດຍການຕິດຕັ້ງສະຖານີ ອຸຕຸນິຍົມ ແລະ ອຸທົກກະສາດ 124 ແຫ່ງໃນທົ່ວປະເທດ, ສ້າງຕັ້ງຄະນະກຳມະການຈັດການໄພພິບັດທຸກຂັ້ນໄດ້ແກ່ ຂັ້ນສູນກາງ, ຂັ້ນແຂວງ, ຂັ້ນເມືອງ ແລະ ຂັ້ນບ້ານ ພ້ອມທັງຝຶກອົບຮົມຈຳນວນ 2,681 ຄົນ. ໃນຂະນະດຽວກັນບັນດາມາດຕະການກົດໝາຍສະບັບໃໝ່ໄດ້ປະຕິຮູບລະບົບການປົກຄອງບ້ານ. ນອກຈາກນັ້ນ, ການລວມເອົາເປົ້າໝາຍການພັດທະນາແບບຍືນຍົງ (SDGs) ເຂົ້າໃນກອບການຕິດຕາມ ແລະ ປະເມີນຜົນຂອງແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ (NSEDP) ໂດຍມີຕົວຊີ້ວັດທີ່ສອດຄ້ອງກັນຈຳນວນ 46 ຕົວຊີ້ວັດ , ສະແດງໃຫ້ເຫັນຄວາມຄືບໜ້າກ່ຽວກັບນ້ຳສະອາດ, ວຽກງານທີ່ເໝາະສົມ ແລະ ການຜະລິດທີ່ມີຄວາມຮັບຜິດຊອບ. ເຖິງຢ່າງໃດກໍຕາມ, ສິ່ງທ້າທາຍຍັງຄົງຢູ່ໃນການລຶບລ້າງຄວາມທຸກຍາກ, ການຮັບປະກັນຄວາມໝັ້ນຄົງດ້ານສະບຽງອາຫານ, ການຫຼຸດຜ່ອນອັດຕາການອອກໂຮງຮຽນ ແລະ ການອະນຸລັກຮັກສາລະບົບນິເວດເທິງບົກ.

## 3.2. ໝາກຜົນ ແລະ ບົດຮຽນທີ່ຖອດຖອນໄດ້ຈາກໂຄງການຊ່ວຍເຫຼືອ (ODA) ການພັດທະນາຊົນນະບົດ

### 1) ພາບລວມຂອງໂຄງການພັດທະນາຊົນນະບົດ KOICA (SMU):

KOICA ເປັນຄູ່ຮ່ວມພັດທະນາທີ່ສຳຄັນຂອງ ສປປ ລາວ ຕັ້ງແຕ່ປີ 1991, ແລະ ພາຍຫຼັງໄດ້ຈັດຕັ້ງປະຕິບັດໂຄງການທົດລອງໃນປີ 2013 ທີ່ນະຄອນຫຼວງວຽງຈັນ ໂດຍນຳໃຊ້ວິທີການ ແຊມາອຸດົງ (SMU), ຜູ້ນຳລາວ ໄດ້ຖືເອົາຮູບແບບດັ່ງກ່າວຢ່າງເປັນທາງການໃນປີ 2015 ໃຫ້ເປັນສ່ວນໜຶ່ງຂອງນະໂຍບາຍ 3 ສ້າງເພື່ອການພັດທະນາຊົນນະບົດແບບຍືນຍົງ ແລະ ລຶບລ້າງຄວາມທຸກຍາກ. ໄລຍະທີ 1 (2014-2021) ໄດ້ສຸມໃສ່ການລຶບລ້າງຄວາມທຸກຍາກ ແລະ ຍົກສູງຄຸນນະພາບຊີວິດ ໂດຍການສ້າງຕັ້ງສູນຝຶກອົບຮົມເຕັກນິກກະສິກຳ ແລະ ພັດທະນາຊົນນະບົດ ລາວ-ເກົາຫຼີ (LKRDTC) ເພື່ອເຜີຍແຜ່ຫຼັກການ SMU ໄດ້ແກ່ການຊ່ວຍເຫຼືອຕົນເອງ, ການຮ່ວມມື ແລະ ຄວາມດຸໝັ່ນຂະຫຍັນພຽນ; ຕໍ່ຍອດຈາກຄວາມ

ສໍາເລັດດັ່ງກ່າວນີ້ ໂຄງການໄລຍະທີ 2 ຈໍານວນ ສອງໂຄງການ ໄດ້ວາງເປົ້າໝາຍໄປທີ່ພາກເໜືອ/ພາກກາງ ແລະ ພາກໃຕ້ ແລະ ຄາດວ່າຈະສໍາເລັດໃນປີ 2025, ແມ່ນຈະເນັ້ນໜັກເຖິງການສຶກສາ, ການລວມກຸ່ມຊາວກະສິກອນ, ການສ້າງສະຫະກອນ ແລະ ການພັດທະນາຕະຫຼາດຊຸມຊົນໃນໝູ່ບ້ານ. ໂຄງການດັ່ງກ່າວແມ່ນໄດ້ຮັບການຈັດຕັ້ງປະຕິບັດໂດຍກົມພັດທະນາຊົນນະບົດ ຮ່ວມກັບຫ້ອງການກະສິກໍາແຂວງ ແລະ ເມືອງ ແລະ ອີງຕາມແນວທາງ "ແຜນແມ່ບົດບ້ານຕົວແບບໃໝ່ຂອງລາວ" ເຊິ່ງອີງໃສ່ການປະເມີນຂອງຜູ້ຊ່ຽວຊານກ່ຽວກັບປັດໄຈຄວາມສ□າເລັດ 22 ຫຼັກການຂອງ SMU, ໂດຍເນັ້ນໃຫ້ຄວາມສໍາຄັນກັບການບໍລິຫານຈັດການແບບປະດິດສ້າງ ແລະ ການປະສົມປະສານລະຫວ່າງແນວທາງຈາກຂັ້ນເທິງ ລົງລຸ່ມ ແລະ ຈາກລຸ່ມຂຶ້ນເທິງ ເຊິ່ງຖືເປັນກຸນແຈສໍາຄັນໃນການປັບໃຊ້ຕົວແບບ SMU ໃຫ້ສອດຄ່ອງກັບສະພາບການທ້ອງຖິ່ນຢ່າງມີປະສິດທິພາບ.

## 2) ຜົນການປະເມີນໂຄງການພັດທະນາຊົນນະບົດໄລຍະ 1 (2014-2021) ຂອງ KOICA ຢູ່ ສປປ ລາວ

KOICA ໄດ້ສະໜັບສະໜູນໂຄງການພັດທະນາຊົນນະບົດແບບປະສົມປະສານ ຢູ່ ສປປ ລາວ ແຕ່ເດືອນທັນວາ 2014 ຫາ 2021 ດ້ວຍງົບປະມານທັງໝົດ 14.55 ລ້ານໂດລາສະຫະລັດ, ໂດຍນໍາໃຊ້ວິທີການ ແຊມາອຸດົງ (SMU) ເພື່ອບັນລຸເປົ້າໝາຍໃນການຫຼຸດຜ່ອນຄວາມທຸກຍາກ, ຍົກສູງມາດຕະຖານຊີວິດການເປັນຢູ່ໃນຊົນນະບົດ ແລະ ເສີມສ້າງຂີດຄວາມສາມາດດ້ານການພັດທະນາແບບຍືນຍົງ. ໂຄງການດັ່ງກ່າວໄດ້ສ້າງຕັ້ງໂຄງຮ່າງການຈັດຕັ້ງສໍາລັບ ແຊມາອຸດົງ , ພັດທະນາບ້ານທົດລອງ, ສ້າງຕັ້ງສູນຝຶກອົບຮົມເຕັກນິກກະສິກໍາ ແລະ ການພັດທະນາຊົນນະບົດ ລາວ-ເກົາຫຼີ (LKRDTC), ແລະ ໄດ້ຈັດຕັ້ງປະຕິບັດໂຄງການທົດລອງເພື່ອປັບປຸງການຈັດການອາຫານສັດ ແລະ ຕ່ອງໂສ້ມູນຄ່າເຂົ້າ. ການປະເມີນຜົນການຈັດຕັ້ງປະຕິບັດຈັດອັນດັບໂຄງການຢູ່ໃນລະດັບ "ສູງຫຼາຍ" ຍ້ອນວ່າຕົວຊີ້ວັດເປົ້າໝາຍທັງໝົດບັນລຸໄດ້ຫຼືເກີນເປົ້າໝາຍຂອງໂຄງການ. ນອກຈາກນັ້ນ, ຍັງໄດ້ຮັບການສະໜັບສະໜູນເອົາໃຈໃສ່ຈາກລັດຖະບານ, ລວມທັງຄໍາສັ່ງຂອງທ່ານນາຍົກລັດຖະມົນຕີ ເພື່ອເຊື່ອມຕໍ່ SMU ກັບນະໂຍບາຍສ້າງສາມສ້າງ, ເຊິ່ງໄດ້ຊຸກຍູ້ການລົງນາມໃນບົດບັນທຶກຄວາມເຂົ້າໃຈ (MOU) ເພີ່ມເຕີມເພື່ອຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດໃນຫຼາຍແຂວງ. ບັນດາໂຄງການທີ່ກ່ຽວຂ້ອງກັບພື້ນຖານໂຄງລ່າງຈະມີຄວາມສາມາດຍືນຍົງສູງ; ໃນຂະນະດຽວກັນ, ກິດຈະກໍາການສ້າງລາຍຮັບໄດ້ມີຜົນຮັບທີ່ຫຼາກຫຼາຍ. ຄວາມຕັ້ງໃຈຂອງໂຄງການໃນການເນັ້ນການມີສ່ວນຮ່ວມແບບແຕ່ຂັ້ນຮາກຖານ ຫາຂັ້ນເທິງນັ້ນຍັງຄົງມີຂໍ້ຈໍາກັດ ແລະ ບໍ່ສາມາດປະຕິບັດໄດ້ຕາມແຜນ ເພາະສ່ວນໃຫຍ່ເປັນຂະບວນການວາງແຜນແບບເທິງ ລົງລຸ່ມ ທີ່ຖືກບໍລິຫານຈັດການໂດຍຄະນະການຈັດຕັ້ງບ້ານ; ແຜນບໍ່ມີຕົວຊີ້ວັດທີ່ຊັດເຈນ ແລະ ເຮັດໃຫ້ການບໍລິການຈັດການບໍ່ມີປະສິດທິພາບເທົ່າທີ່ຄວນ.

## 3) ການທົບທວນຄວາມຄືບໜ້າຂອງໂຄງການພັດທະນາຊົນນະບົດໄລຍະທີ 2 (2021–2025) ຂອງ KOICA ຢູ່ພາກເໜືອ/ພາກກາງ ແລະ ພາກໃຕ້ຂອງ ສປປ ລາວ

ໃນໄລຍະທີ 2 (2021-2025), KOICA ໄດ້ໃຫ້ທຶນສະໜັບສະໜູນ 2 ໂຄງການຢູ່ ສປປ ລາວ ຄື: ໂຄງການໜຶ່ງກວມເອົາພາກເໜືອ/ພາກກາງ (ຈໍານວນເງິນ 12.5 ລ້ານໂດລາສະຫະລັດ, ກວມເອົາ 14 ບ້ານໃນນະຄອນຫຼວງວຽງຈັນ, ແຂວງຊຽງຂວາງ ແລະ ແຂວງບໍລິຄໍາໄຊ) ແລະ ອີກໂຄງການໜຶ່ງກວມເອົາພາກໃຕ້ (ຈໍານວນເງິນ 9 ລ້ານໂດລາສະຫະລັດ, ກວມເອົາ 20 ບ້ານ, ແຂວງຈໍາປາສັກ, ສາລະວັນ ແລະ ເຊກອງ). ໂດຍມີຈຸດປະສົງເພື່ອຍົກສູງຊີວິດການເປັນຢູ່ຂອງຊົນນະບົດ, ເພີ່ມລາຍຮັບ ແລະ ສ້າງຕັ້ງຮູບແບບການພັດທະນາທີ່ຍືນຍົງໃຫ້ສອດຄ່ອງກັບນະໂຍບາຍສາມສ້າງ. ທັງສອງໂຄງການໄດ້ນໍາເອົາແນວທາງການຈັດຕັ້ງປະຕິບັດແບບ ແຊມາອຸດົງ ມາໃຊ້ ຜ່ານກິດຈະກໍາຮ່ວມກັນເຊັ່ນ: ການສ້າງຕັ້ງຄະນະພັດທະນາບ້ານເພື່ອການວາງແຜນແບບມີສ່ວນຮ່ວມ, ການຈັດການຝຶກອົບຮົມຜູ້ນໍາບ້ານ ແລະ ເຈົ້າໜ້າທີ່ທ້ອງຖິ່ນ, ແລະ

ການຈັດຕັ້ງປະຕິບັດການປັບປຸງພື້ນຖານໂຄງລ່າງ (ເຊັ່ນ: ເສັ້ນທາງຊົນນະບົດ, ລະບົບນໍ້າສະອາດ, ແລະ ສະໂມສອນບ້ານ) ຄຽງຄູ່ໄປກັບໂຄງການທົດລອງເພື່ອສ້າງລາຍຮັບ. ນອກຈາກນັ້ນ, ການປະສານງານລະຫວ່າງໂຄງການທີ່ມີປະສິດຕິຜົນ, ເຊິ່ງເຫັນໄດ້ຈາກການຮ່ວມມືລະຫວ່າງ KOICA ແລະ ADB ໃນເຂດພາກໃຕ້, ໄດ້ຊ່ວຍປ້ອງກັນການຈັດຕັ້ງປະຕິບັດທີ່ຊໍ້າຊ້ອນ ແລະ ເຖິງແມ່ນວ່າ ຜົນໄດ້ຮັບຈໍານວນຫຼາຍ (ເຊັ່ນ: ໂຄງການຝຶກອົບຮົມ, ການສະໜັບສະໜູນປັດໃຈການຜະລິດທາງກະສິກໍາ ແລະ ໂຄງການວິສະວະກໍາໂຍທາ) ໃກ້ຈະສໍາເລັດສົມບູນແລ້ວ, ແຕ່ຍັງມີຄວາມຈໍາເປັນທີ່ຈະຕ້ອງໃຫ້ຄວາມກະຈ່າງແຈ້ງກ່ຽວກັບບົດບາດນ້າທີ່ທີ່ຊັດເຈນ (ໂດຍສະເພາະແມ່ນລະບົບຜູ້ຈັດການບໍລິຫານໂຄງການຮ່ວມກັນຮູບແບບໃໝ່ Co-PM), ປັບປຸງການຈັດສັນງົບປະມານໃຫ້ເປັນປົກກະຕິໃຫ້ແກ່ສູນຝຶກອົບຮົມເຕັກນິກກະສິກໍາ ແລະ ພັດທະນາຊົນນະບົດລາວ-ເກົາຫຼີ, ແລະ ທົບທວນຂໍ້ກໍານົດດ້ານການບໍລິຫານການເງິນທີ່ເຂັ້ມງວດເພື່ອຮັບປະກັນຄວາມຍືນຍົງຂອງຜົນປະໂຫຍດຂອງໂຄງການໃນໄລຍະຍາວ.

#### 4) ບົດຮຽນຈາກໂຄງການພັດທະນາຊົນນະບົດອື່ນໆ

##### ①. ໂຄງການກອງທຶນຫຼຸດຜ່ອນຄວາມທຸກຍາກຂອງທະນາຄານໂລກ

ທະນາຄານໂລກຮ່ວມກັບລັດຖະບານລາວ ໄດ້ໃຫ້ການສະໜັບສະໜູນການພັດທະນາຊົນນະບົດໃນ ສປປ ລາວ ພາຍໃຕ້ຂອບການຮ່ວມມືຂອງປະເທດໂດຍຜ່ານໂຄງການກອງທຶນເພື່ອຫຼຸດຜ່ອນຄວາມທຸກຍາກ (PRF) ທັງ 3 ໄລຍະ (PRF I, II ແລະ III) ລວມມູນຄ່າທັງໝົດປະມານ 43,98 ລ້ານໂດລາສະຫະລັດ (ໂດຍລັດຖະບານລາວປະກອບສ່ວນປະມານ 5,4 ເປີເຊັນ).ໂຄງການເຫຼົ່ານີ້, ເຊິ່ງເລີ່ມຕົ້ນດ້ວຍການກໍານົດຂອບເຂດຄວາມທຸກຍາກ ແລະ ການກໍານົດເຂດເປົ້າໝາຍເພື່ອຈັດຕັ້ງປະຕິບັດພາຍໃຕ້ຍຸດທະສາດການເຕີບໂຕ ແລະ ການລົບລ້າງຄວາມທຸກຍາກແຫ່ງຊາດ, ສຸມໃສ່ແນວທາງການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (CDD). ໂຄງການ PRF ໄລຍະທີ 1 (2003-2011) ໄດ້ຈັດຕັ້ງປະຕິບັດໂຄງການຍ່ອຍຈໍານວນ 3,179 ໂຄງການໃນ 7 ແຂວງ ພື້ນຖານໂຄງລ່າງເຊັ່ນ: ໂຮງຮຽນ, ຂົວ, ສຸກສາລາ, ລະບົບນໍ້າປະປາ ແລະ ເສັ້ນທາງຊົນນະບົດ 3,000 ກວ່າກິໂລແມັດ, ພ້ອມທັງຝຶກອົບຮົມພະນັກງານ ແລະ ຊຸມຊົນທ້ອງຖິ່ນ. ເຖິງແມ່ນວ່າຈະມີສິ່ງທ້າທາຍທີ່ມາຈາກຂໍ້ຈໍາກັດທາງດ້າຄວາມສາມາດໃນການມີສ່ວນຮ່ວມພາຍໃຕ້ລະບົບການບໍລິຫານທີ່ລວມສູນແບບດັ້ງເດີມ. ໂຄງການ PRF ໄລຍະ 2 (2011-2016), ເຊິ່ງໄດ້ເລີ່ມມາແຕ່ປີ 2012, ໄດ້ສຸມໃສ່ 38 ເມືອງໃນ 10 ແຂວງ, ໂດຍນໍາໃຊ້ທຶນອຸດໜູນແບບກຸ່ມບ້ານ ສໍາລັບການວາງແຜນພັດທະນາຊຸມຊົນໃນໄລຍະ 3 ປີ ທີ່ຂັບເຄື່ອນດ້ວຍການສ້າງແຜນທີ່ທາງສັງຄົມ ແລະ ການປະເມີນຜົນແບບມີສ່ວນຮ່ວມ. ໂຄງການ PRF ໄລຍະທີ 3 (2016-2024) ໄດ້ຂະຫຍາຍການຈັດຕັ້ງປະຕິບັດໃຫ້ຄອບຄຸມການສ້າງອາຊີບທີ່ຄໍານຶງເຖິງໂພຊະນາການ ແລະ ການພັດທະນາຂີດຄວາມສາມາດ ໂດຍສ້າງຕັ້ງກຸ່ມຊ່ວຍເຫຼືອເຊິ່ງກັນ ແລະ ກັນ ຈໍານວນ 2,019 ກຸ່ມທີ່ເປັນປະໂຫຍດຕໍ່ປະຊາຊົນເກືອບໜຶ່ງລ້ານຄົນ ໂດຍໃຫ້ຄວາມສ□າຄັນຢ່າງຍິ່ງຕໍ່ການຊ່ວຍເຫຼືອກຸ່ມທີ່ອ່ອນແອ ເຊັ່ນ: ກຸ່ມແມ່ຍິງທີ່ທຸກຍາກ ແລະ ຊົນເຜົ່າສ່ວນນ້ອຍ. ບົດຮຽນທີ່ຖອດຖອນໄດ້ຈາກໂຄງການເຫຼົ່ານີ້, ເຊິ່ງນັບຕັ້ງແຕ່ຄວາມຈໍາເປັນໃນການຈັດສັນງົບປະມານເພື່ອບໍາລຸງຮັກສາໂຄງລ່າງພື້ນຖານຫຼັງການກໍ່ສ້າງ; ແລະ ການບໍລິຫານຈັດການຄຸ້ມຄອງທີ່ເໝາະສົມກັບສະພາບການທ້ອງຖິ່ນ, ແມ່ນເປັນບົດຮຽນທີ່ມີຄຸນຄ່າສໍາລັບໂຄງການໃນອະນາຄົດ, ລວມທັງໂຄງການຂອງ KOICA ເພື່ອເຊື່ອມໂຍງການສ້າງລາຍຮັບ, ການຮັບມືກັບການປ່ຽນແປງດິນຟ້າອາກາດ ແລະ ການເສີມສ້າງຄວາມເຂັ້ມແຂງໃຫ້ຊຸມຊົນເຂົ້າໃນຂະບວນການພັດທະນາຊົນນະບົດໄດ້ຢ່າງມີປະສິດທິພາບຫຼາຍຂຶ້ນ.

##### ②. ໂຄງການພັດທະນາທ້ອງຖິ່ນ/ຊົນນະບົດ LUX-DEV[1]

ນັບແຕ່ປີ 2003 ເປັນຕົ້ນມາ, ປະເທດລຸກຊໍາບວກ ໄດ້ສືບຕໍ່ຂະຫຍາຍການຮ່ວມມືກັບ ສປປ ລາວ ພາຍໃຕ້ໂຄງການຮ່ວມມືແບບຕົວຊີ້ວັດ (Indicator Cooperation Programme /ICP), ໂດຍເພີ່ມຂຶ້ນຈາກວົງເງິນເລີ່ມຕົ້ນ

[1] Luxembourg/AIID & Development. (2023). Luxembourg Development Cooperation in Laos.

18 ລ້ານຢູໂຣໃນໂຄງການ ICP ໄລຍະທີ 1 ຈົນເຖິງໂຄງການ ICP ໄລຍະ 5 ໃນປະຈຸບັນທີ່ມີ ມູນຄ່າ 95 ລ້ານເອີໂຣ. ໄລຍະທີ່ 4 ຂອງໂຄງການ ICP (2016-2022) ໄດ້ສິ້ນສຸດລົງ. ICP ໄດ້ສຸມໃສ່ການໃຫ້ການບໍລິການດ້ານສາທາລະນະສຸກຂັ້ນພື້ນຖານ, ການຝຶກອົບຮົມວິຊາຊີບ ແລະ ການສຶກສາ, ການພັດທະນາທ້ອງຖິ່ນ/ຊົນນະບົດ ແລະ ການສົ່ງເສີມລະບຽບກົດໝາຍ. ໃນຂະແໜງການພັດທະນາຊົນນະບົດ, ໂຄງການຫຼັກແມ່ນ LAO/030, ໄດ້ວາງເປົ້າໝາຍໃສ່ບັນດາແຂວງຕ່າງໆ ເຊັ່ນ: ບໍ່ແກ້ວ, ບໍລິຄໍາໄຊ, ຄໍາມ່ວນ, ແລະ ວຽງຈັນ, ໂດຍຈັດສັນງົບປະມານ ປະມານ 32% ໃຫ້ກັບຂົງເຂດນີ້. ໂຄງການ LAO/030 ແນໃສ່ແກ້ໄຂຄວາມທຸກຍາກໃນເຂດພູດອຍທີ່ອ່ອນແອ, ໂດຍສຸມໃສ່ໃນ 229 ບ້ານ (ມີປະຊາກອນ 150,000 ຄົນ, ໃນນັ້ນ 74% ເປັນຊົນເຜົ່າສ່ວນນ້ອຍ) ໂດຍຜ່ານວິທີການ 2 ໄລຍະທີ່ປະສົມປະສານການລົງທຶນດ້ານພື້ນຖານໂຄງລ່າງເຂົ້າກັບການປັບປຸງການບໍລິຫານຄຸ້ມຄອງ.

ປະມານ 60% ຂອງງົບປະມານດ້ານຊົນນະບົດແມ່ນໄດ້ຈັດສັນໃຫ້ບັນດາບ້ານເຫຼົ່ານີ້, ໂດຍເຄິ່ງໜຶ່ງຂອງງົບປະມານສະໜັບສະໜູນໂຄງການທີ່ຊຸມຊົນເປັນຜູ້ຂັບເຄື່ອນຜ່ານກອງທຶນພັດທະນາບ້ານ (VDFs) ສໍາລັບໂຄງການຕ່າງໆເຊັ່ນ: ການພັດທະນາສຸຂາພິບານ, ການສ້ອມແປງໂຮງຮຽນ ແລະ ການປັບປຸງລະບົບນໍ້າປະປາ. ສ່ວນງົບປະມານທີ່ຍັງເຫຼືອແມ່ນໃຊ້ເຂົ້າໃນການພັດທະນາພື້ນຖານໂຄງລ່າງເຊັ່ນ: ອາຄານຮຽນ. ການເຄື່ອນໄຫວດັ່ງກ່າວ ແມ່ນໄດ້ຈັດຕັ້ງປະຕິບັດໂດຍບັນດາອົງການຂັ້ນແຂວງ ແລະ ຂັ້ນເມືອງ, ໂດຍສົມທົບຢ່າງໃກ້ຊິດກັບກະຊວງແຜນການ ແລະ ການລົງທຶນ ແລະ LuxDev ຈຶ່ງສາມາດປະຕິບັດກິດຈະກໍາກອງທຶນພັດທະນາບ້ານ (VDF) ໄດ້ຈໍານວນ 984 ກິດຈະກໍາ ແລະ ໂຄງການຍ່ອຍທີ່ລິເລີ່ມຈາກຊຸມຊົນຈໍານວນ 2,579 ໂຄງການ ພາຍໃຕ້ຮູບແບບການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ.

ເຖິງວ່າຈະມີການເປັນເຈົ້າການຂອງບ້ານທີ່ເຂັ້ມແຂງ ແລະ ປະສົບຜົນສໍາເລັດທາງດ້ານເສດຖະກິດ-ສັງຄົມກໍ່ຕາມ, ແຕ່ການປະເມີນຜົນໄດ້ສັງເກດເຫັນຂໍ້ຈໍາກັດໃນການປະຕິບັດດ້ານປະລິມານ, ການຈັດການຊັບພະຍາກອນທໍາມະຊາດແບບຍືນຍົງ, ແລະ ການພັດທະນາລະບົບສິນເຊື່ອບ້ານໃຫ້ກ້າວໄປສູ່ຮູບແບບການເງິນຈຸລະພາກທີ່ຍືນຍົງ. ໂດຍຖອດຖອນບົດຮຽນຈາກໂຄງການ ICP ໄລຍະ 3 ທີ່ຈັດຕັ້ງປະຕິບັດຜ່ານມາກ່ອນໜ້ານີ້, ໂຄງການເຫຼົ່ານີ້ໄດ້ເສີມຂະຫຍາຍຄວາມສໍາຄັນຂອງຍຸດທະສາດໄລຍະຍາວທີ່ສຸມໃສ່ພື້ນທີ່ສະເພາະ, ການເຊື່ອມໂຍງລະບົບລັດຖະບານ ແລະ ການສ້າງຄວາມອາດສາມາດ, ເຊິ່ງເປັນບົດຮຽນທີ່ມີຄຸນຄ່າສໍາລັບໂຄງການໃນອະນາຄົດຂອງອົງການອື່ນໆເຊັ່ນ KOICA.

### 5) ສັງລວມຫຍໍ້ບົດຮຽນຈາກໂຄງການພັດທະນາ



## IV. ການວິເຄາະຍຸດທະສາດຫຼັກເພື່ອການພັດທະນາຊົນນະບົດແບບໃໝ່

ສປປ ລາວ ມີຄວາມໝັ້ນຄົງທາງດ້ານການເມືອງ ແລະ ເຄີຍເປັນທີ່ຮັບຮູ້ເຖິງການຂະຫຍາຍຕົວທາງດ້ານເສດຖະກິດຢ່າງໄວວາ; ແຕ່ກຳລັງປະເຊີນກັບພາວະເສດຖະກິດທີ່ຊ້າລົງ. ໜີ້ສິນສາທາລະນະຂອງປະເທດກຳລັງເຂົ້າຫາ 120 ເປີເຊັນຂອງ **GDP,** ແລະ ອັດຕາເງິນເຟີ້ທີ່ເພີ່ມຂຶ້ນສູງຢູ່ລະຫວ່າງ 20 ຫາ 30%. ເຊິ່ງປັດໄຈເຫຼົ່ານີ້ໄດ້ບັ່ນທອນການພັດທະນາຊົນນະບົດໂດຍລວມ. ໃນຂະນະທີ່ປະຊາກອນປະມານ 2/3 ທີ່ປະກອບອາຊີບກະສິກຳເປັນຫຼັກ, ກຳລັງປະເຊີນກັບຜົນຜະລິດທີ່ຫຼຸດລົງ, ຊຸມຊົນຊົນຈຳນວນຫຼາຍຢູ່ເຂດຫ່າງໄກສອກຫຼີກ ແລະ ພູດອຍ ຍັງສືບຕໍ່ປະສົບກັບບັນຫາຈາກການເຂົ້າເຖິງເສັ້ນທາງຄົມມະນາຄົມທີ່ບໍ່ສະດວກ ແລະ ການໄດ້ຮັບການສະໜັບສະໜູນດ້ານກິດຈະກຳໃນລະບົບຕ່ອງໂສ້ມູນຄ່າທີ່ບໍ່ພຽງພໍ. ນອກຈາກນີ້, ການຂາດການເຝິກອົບຮົມຢ່າງເປັນລະບົບໃຫ້ແກ່ພະນັກງານສົ່ງເສີມກະສິກຳຢູ່ເຂດຊົນນະບົດ, ການປ່ຽນແປງການຈັດຕັ້ງເລື້ອຍໆຂອງກະຊວງ, ການເຊື່ອມໂຍງທີ່ບໍ່ເຂັ້ມແຂງກັບສະຖາບັນການສຶກສາ ແລະ ການຄົ້ນຄວ້າຍັງອ່ອນແອເຮັດໃຫ້ປະເທດຂາດຄວາມພ້ອມໃນການພັດທະນານະວັດຕະກຳດ້ານກະສິກຳ ຫຼື ການສ້າງແຫຼ່ງທຶນທາງສັງຄົມທີ່ທັນສະໄໝ. ຕໍ່ກັບບັນຫາດັ່ງກ່າວ, ອົງການຈັດຕັ້ງສາກົນເຊັ່ນ **UNDP, USAID** ແລະ **SDC** ຈິ່ງໃຫ້ບຸລິມະສິດໃນການປັບປຸງການປົກຄອງ, ແລະ ໄດ້ຍົກເອົາຕົວຢ່າງແນວທາງການເຊື່ອມໂຍງການເຮັດວຽກແບບເທິງລົງລຸ່ມ ແລະ ລຸ່ມຂຶ້ນເທິງ ໂດຍອ້າງເອົາຕົວແບບ ແຊມາອຸດົງ **(SMU)** ຂອງ ສ. ເກົາຫຼີ ເປັນຕົວແບບທີ່ມີທ່າແຮງສູງ. ເມື່ອພິຈາລະນາຈາກສິ່ງທ້າທາຍທີ່ກ່າວມາຂ້າງເທິງນັ້ນ, ລັດຖະບານລາວໄດ້ວາງຍຸດທະສາດ ແລະ ນະໂຍບາຍເພື່ອຫຼຸດຜ່ອນຄວາມທຸກຍາກ ແລະ ການພັດທະນາຊົນນະບົດໄວ້ຢ່າງຊັດເຈນ ລວມທັງການປັບປຸງດ້ານການປົກຄອງ. ສະນັ້ນ, ບົດນີ້ ມີຈຸດປະສົງແນໃສ່ເພື່ອວິເຄາະ ແລະ ກຳນົດບັນດານະໂຍບາຍ ແລະ ວິທີການທີ່ສາມາດໃຫ້ບຸລິມະສິດໃນການຈັດຕັ້ງປະຕິບັດ, ໂດຍມີພື້ນຖານຈາກຍຸດທະສາດ ແລະ ນະໂຍບາຍການພັດທະນາຊົນນະບົດແຫ່ງຊາດ ທີ່ໄດ້ກ່າວມາກ່ອນໜ້ານີ້.

### 4.1. ການວິເຄາະ ຈຸດແຂງ, ຈຸດອ່ອນ, ໂອກາດ ແລະ ສິ່ງທ້າທາຍ SWOT

#### 1) ຈຸດແຂງ

- ຄວາມຮັ່ງມີທາງທຳມະຊາດ: ປະເທດລາວອຸດົມສົມບູນໄປດ້ວຍຊັບພະຍາກອນທຳມະຊາດ, ສະພາບອາກາດທີ່ເໝາະສົມສຳລັບການກະສິກຳ, ແລະ ຄວາມຫຼາກຫຼາຍທາງດ້ານຊີວະນາໆພັນສຸງ, ມີພືດເສດຖະກິດ ແລະ ລະບົບນິເວດທາງກະສິກຳທີ່ມີລັກສະນະສະເພາະແຕ່ລະເຂດ.
- ແຮງງານ: ດ້ວຍກຳລັງແຮງງານຈຳນວນຫຼາຍ (ອາຍຸ 15–64 ປີ), ປະເທດລາວມີຈຸດດີເພື່ອຮອງຮັບອຸດສາຫະກຳທີ່ໃຊ້ແຮງງານ, ໂດຍສະເພາະຢ່າງຍິ່ງເມື່ອປະຊາກອນ 65% ແມ່ນປະກອບອາຊີບເຮັດກະສິກຳ, ເຮັດໃຫ້ອຸດສາຫະກຳກະສິກຳ ແລະ ອຸດສາຫະກຳສະບຽງອາຫານທີ່ໃຊ້ແຮງງານຫຼາຍມີຄວາມໄດ້ປຽບທາງດ້ານເສດຖະກິດໃນພື້ນທີ່ຊົນນະບົດ.
- ຄວາມຫຼາກຫຼາຍທາງວັດທະນະທຳ: ພື້ນທີ່ຊົນນະບົດຂອງປະເທດລາວມີຄວາມຫຼາກຫຼາຍທາງດ້ານຮີດຄອງປະເພນີ ແລະ ວັດທະນະທຳທີ່ເປັນເອກະລັກ ຊຶ່ງສາມາດນຳມາໃຊ້ເປັນຊັບພະຍາກອນສຳລັບອຸດສາຫະກຳດ້ານວັດທະນະທຳຕ່າງໆ ເຊັ່ນ: ການທ່ອງທ່ຽວ, ກິລາ, ສິລະປະ ແລະ ການອອກແບບອື່ນໆ.
- ຍຸດທະສາດແຫ່ງຊາດທີ່ເປັນລະບົບ: ການພັດທະນາ ແລະ ການຈັດຕັ້ງປະຕິບັດຍຸດທະສາດ ແລະ ນະໂຍບາຍການຂະຫຍາຍຕົວທາງດ້ານເສດຖະກິດ ແລະ ສັງຄົມທີ່ເປັນລະບົບເຊັ່ນ: ແຜນການພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ (NSEDP) ໄດ້ນຳໄປສູ່ການບັນລຸເປົ້າໝາຍຫຼາຍຢ່າງທີ່ຕິດພັນກັບ

ການພັດທະນາຊົນນະບົດ, ລວມທັງການປັບປຸງພື້ນຖານໂຄງລ່າງໃນຊົນນະບົດ, ຊີວິດການເປັນຢູ່, ການປະກອບອາຊີບ, ການພັດທະນາກະສິກຳ ແລະ ປ່າໄມ້ ແລະ ການລວມກຸ່ມຜູ້ຜະລິດເປັນຕົ້ນ.

- ການເຊື່ອມໂຍງ: ໃນແງ່ພູມສາດທາງດ້ານເສດຖະກິດ, ປະເທດລາວຕັ້ງຢູ່ຕຳແໜ່ງຍຸດທະສາດພາຍໃນເຂດອະນຸພາກລຸ່ມແມ່ນ້ຳຂອງ (GMS), ໂດຍມີການເຊື່ອມຕໍ່ຜ່ານແລວເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ແລວເສດຖະກິດເໜືອ-ໃຕ້; ເຮັດໃຫ້ການຄ້າກັບປະເທດເພື່ອນບ້ານເພີ່ມຂຶ້ນຢ່າງຫຼວງຫຼາຍ. ນອກຈາກນີ້ຍັງມີການຈັດຕັ້ງເຂດເສດຖະກິດພິເສດ (SEZ) ແລະ ເຂດນິຄົມອຸດສາຫະກຳຢູ່ໃນຫຼາຍແຂວງ.
- ການປົກຄອງ: ລັດຖະບານລາວມຸ້ງໝັ້ນໃນການປັບປຸງການປົກຄອງດ້ວຍການຊຸກຍູ້ປະຊາທິປະໄຕຢູ່ຂັ້ນຮາກຖານ, ສອດຄ່ອງກັບນະໂຍບາຍ "ສາມສ້າງ" ເພື່ອຊຸກຍູ້ການປະຕິບັດນະໂຍບາຍພັດທະນາຊົນນະບົດ. ນອກຈາກນັ້ນ, ພາຍໃຕ້ໂຄງການຮ່ວມມືເພື່ອການພັດທະນາ (ODA) ດ້ານການພັດທະນາຊົນນະບົດ, ລັດຖະບານ (ກະຊວງກະສິກຳ ແລະ ປ່າໄມ້ – MAF) ກຳລັງຈັດຕັ້ງປະຕິບັດເພື່ອເສີມສ້າງຄວາມສາມາດໃນການບໍລິຫານໂຄງການ ໂດຍຜ່ານການປະສານງານແບບຜູ້ຈັດການໂຄງການຮ່ວມ Co-PM ກັບອົງການຜູ້ໃຫ້ທຶນ .

## 2) ຈຸດອ່ອນ

- ເຂດພູດອຍທີ່ຍັງບໍ່ທັນໄດ້ຮັບການພັດທະນາ: ເນື່ອງຈາກວ່າ 70% ຂອງເນື້ອທີ່ປະເທດເປັນພູດອຍ ແລະ ເນີນສູງທີ່ມີພື້ນຖານໂຄງລ່າງໃນຊົນນະບົດທີ່ຍັງບໍ່ທັນໄດ້ພັດທະນາ, ເຮັດໃຫ້ປະຊາຊົນມີຂໍ້ຈຳກັດໃນການເຂົ້າເຖິງຕະຫຼາດ ແລະ ການບໍລິການ. ນອກຈາກນັ້ນ, ເນື້ອທີ່ດິນພຽງແຕ່ 10 ເປີເຊັນເທົ່ານັ້ນທີ່ເໝາະສົມແກ່ການກະສິກຳ.
- ຄວາມອ່ອນໄຫວຕໍ່ການປ່ຽນແປງສະພາບອາກາດ: ເນື່ອງຈາກການປ່ຽນແປງດິນຟ້າອາກາດ, ໄພນ້ຳຖ້ວມ ແລະ ໄພແຫ້ງແລ້ງໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ, ເຮັດໃຫ້ຫຼາຍພື້ນທີ່ກາຍເປັນພື້ນທີ່ທີ່ມີຄວາມສ່ຽງ ແລະ ຂາດຄວາມທົນທານຕໍ່ໄພທຳມະຊາດ. ນອກຈາກນັ້ນ, ຄວາມແຕກໂຕນຂອງລະດັບພື້ນຖານໂຄງລ່າງລະຫວ່າງທ້ອງຖິ່ນກໍຍິ່ງເຮັດໃຫ້ຄວາມແຕກຕ່າງໃນຄວາມສ່ຽງເຫຼົ່ານີ້ຮ້າຍແຮງຂຶ້ນ.
- ການເພິ່ງພາຊັບພະຍາກອນທຳມະຊາດ: ການເອື້ອຍອີງທຳມະຊາດຫຼາຍເກີນໄປຂອງຂະແໜງອຸດສາຫະກຳເຮັດໃຫ້ເກີດຄວາມກັງວົນຕໍ່ການເຊື່ອມໂຊມຂອງສິ່ງແວດລ້ອມ. ແນວໃດກໍ່ຕາມ, ການຈັດຕັ້ງປະຕິບັດນະໂຍບາຍປົກປ້ອງຊັບພະຍາກອນທຳມະຊາດຍັງບໍ່ພຽງພໍກັບຄວາມຕ້ອງການ.
- ຄວາມແຕກໂຕນດ້ານອັດຕາຄວາມທຸກຍາກ: ເຖິງວ່າຈະມີການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ຄັ້ງທີ IX ຢ່າງຫ້າວຫັນ, ແຕ່ 30% ຂອງບ້ານໃນທົ່ວປະເທດຍັງຄົງຢູ່ໃນສະພາບທຸກຍາກ, ແລະ ມີຄວາມແຕກໂຕນຢ່າງຫຼວງຫຼາຍໃນອັດຕາຄວາມທຸກຍາກລະຫວ່າງເຂດຕົວເມືອງ ແລະ ຊົນນະບົດ, ລວມທັງໃນແຕ່ລະເຂດທີ່ແຕກຕ່າງກັນ.
- ສະມັດຕະພາບ ແລະ ທັກສະທີ່ຈຳກັດໃນເຂດຊົນນະບົດ: ການເຮັດນາຂະໜາດນ້ອຍຍັງອາໄສນ້ຳຝົນເປັນຫຼັກ ແລະ ການນຳໃຊ້ເຄື່ອງກົນຈັກກະສິກຳຍັງຕ່ຳ. ສິ່ງຜົນໃຫ້ຜະລິດຕະພັນຕ່ຳ ແລະ ສະພາບຊີວິດການເປັນຢູ່ທຸກຍາກຢ່າງຕໍ່ເນື່ອງ, ເຮັດໃຫ້ຊາວໜຸ່ມຈຳນວນຫຼາຍໝົດຄວາມສົນໃຈໃນການໃຊ້ຊີວິດຢູ່ຊົນນະບົດ. ນອກຈາກນັ້ນ, ການຂາດໂອກາດໃນການສຶກສາອາຊີວະສຶກສາ ຍັງເຮັດໃຫ້ການສ້າງວຽກເຮັດງານທຳທີ່ມີຄຸນນະພາບສຳລັບຊາວໜຸ່ມໃນຕົວເມືອງເປັນເລື້ອງຍາກເຊັ່ນກັນ.

- ການຫັນເປັນການຄ້າທີ່ຍັງບໍ່ທັນເຂັ້ມແຂງ: ການພັດທະນາກະສິກຳແບບການຄ້າທີ່ສາມາດຜະລິດສິນຄ້າກະສິກຳຄຸນນະພາບສູງເປັນຈຳນວນຫຼວງຫຼາຍ ລວມທັງການສ້າງວິສາຫະກິດຂະໜາດນ້ອຍ ແລະ ຂະໜາດກາງ (SMEs) ດ້ານການແປຮູບອາຫານ ຍັງບໍ່ພຽງພໍ ເຮັດໃຫ້ການແຈກຢາຍໂອກາດການຈ້າງງານຢູ່ໃນຊຸມຊົນຍັງບໍ່ພຽງພໍ.
- ຄວາມອາດສາມາດໃນການບໍລິຫານຈັດການທີ່ຈຳກັດ: ເຖິງວ່າລັດຖະບານໄດ້ພະຍາຍາມປັບປຸງການປົກຄອງຕາມນະໂຍບາຍ "ສາມສ້າງ", ແຕ່ການຂາດຄວາມສາມາດຂອງເຈົ້າໜ້າທີ່ທ້ອງຖິ່ນໃນການບໍລິຫານໂຄງການ ແລະ ອຳນາດການຕັດສິນໃຈຂອງຊາວບ້ານທີ່ຈຳກັດເຮັດໃຫ້ການເປັນເຈົ້າຂອງ ແລະ ການມີສ່ວນຮ່ວມໃນໂຄງການພັດທະນາຊຸມຊົນຢູ່ໃນລະດັບທີ່ບໍ່ພຽງພໍໃນຫຼາຍວຽກງານເຕັກນິກ-ວິຊາສະເພາະ.
- ຂາດໂອກາດເຂົ້າເຖິງຂະບວນການພັດທະນາ: ໂຄງການພັດທະນາຢູ່ທ້ອງຖິ່ນ ມັກຈະຖືກຈັດຕັ້ງປະຕິບັດໂດຍບໍ່ໄດ້ສະທ້ອນເຖິງຄວາມຕ້ອງການຂອງການພັດທະນາຢ່າງພຽງພໍຂອງກຸ່ມທີ່ມີຄວາມສ່ຽງ ແລະ ຊົນເຜົ່າສ່ວນນ້ອຍທີ່ຢູ່ຫ່າງໄກສອກຫຼີກ,ເຮັດ ໃຫ້ພວກເຂົາຂາດໂອກາດທີ່ຈະໄດ້ເຂົ້າເຖິງຂະບວນການພັດທະນາເທົ່າທີ່ຄວນ.

**3) ໂອກາດ**

- ການຂະຫຍາຍຕົວທາງດ້ານເສດຖະກິດ: ເນື່ອງຈາກການພັດທະນາເສດຖະກິດຂອງລາວ, ຄາດວ່າຈະສາມາດຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດທະນາ (LDC) ໃນປີ 2026.
- ການປັບປຸງທາງດ້ານການຂົນສົ່ງ: ການປັບປຸງໂຄງສ້າງພື້ນຖານດ້ານຖະໜົນຫົນທາງ ລວມທັງແລວທາງເສດຖະກິດເໜືອ-ໃຕ້, ແລວທາງເສດຖະກິດຕາເວັນອອກ-ຕາເວັນຕົກ ແລະ ການສ້າງທາງລົດໄຟຄວາມໄວສູງ ລາວ-ຈີນ ເຮັດໃຫ້ການຄ້າທາງບົກກັບປະເທດເພື່ອນບ້ານເພີ່ມຂຶ້ນຢ່າງຫຼວງຫຼາຍ.
- ທຸລະກິດເພີ່ມຂຶ້ນ: ດ້ວຍການເພີ່ມຂຶ້ນຂອງການລົງທຶນໂດຍກົງຈາກຕ່າງປະເທດ (FDI) ແລະການສ້າງຕັ້ງເຂດເສດຖະກິດພິເສດຈຳນວນ 21 ແຫ່ງໃນທົ່ວປະເທດ, ເຮັດໃຫ້ໂອກາດສຳລັບການຂະຫຍາຍກະສິກຳດ້ານການຄ້າ, ອຸດສາຫະກຳການຜະລິດ, ແລະ ການພັດທະນາອຸດສາຫະກຳການບໍລິການ ແມ່ນມີການຂະຫຍາຍຕົວຫຼາຍຂຶ້ນໃນເຂດຕ່າງໆ.
- ຄວາມຕ້ອງການສິນຄ້າຄຸນນະພາບສູງ: ຄວາມຕ້ອງການສິນຄ້າກະສິກຳຄຸນນະພາບສູງຈາກລາວທີ່ເພີ່ມຂຶ້ນໃນຕະຫຼາດເຊັ່ນ: ຈີນ ແລະ ເອີຣົບ ໄດ້ກະຕຸ້ນໃຫ້ລັດຖະບານຂະຫຍາຍລາຍການສິນຄ້າທີ່ຕ້ອງຜ່ານການກັກກັນກ່ອນສົ່ງອອກ ແລະ ຈັດໃຫ້ມີກອບມາດຕະຖານຢັ້ງຢືນຈາກທາງການເຊັ່ນ: ການຢັ້ງຢືນກະສິກຳອິນຊີ ແລະ ການຈັດຕັ້ງປະຕິບັດທາງກະສິກຳທີ່ດີ GAP.
- ການທ່ອງທ່ຽວ: ພາຍຫຼັງການຢຸດຕິການລະບາດຂອງພະຍາດໂຄວິດ-19, ການປັບປຸງພື້ນຖານໂຄງລ່າງດ້ານການທ່ອງທ່ຽວ ແລະ ການປູກຈິດສຳນຶກທີ່ເພີ່ມຂຶ້ນກ່ຽວກັບມໍລະດົກທາງດ້ານທຳມະຊາດ ແລະ ວັດທະນະທຳທ້ອງຖິ່ນໄດ້ເພີ່ມຂຶ້ນຢ່າງຫຼວງຫຼາຍ ເຮັດໃຫ້ນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດເພີ່ມຂຶ້ນຢ່າງຫຼວງຫຼາຍ.
- ການຊ່ວຍເຫຼືອຈາກສາກົນ: ທະນາຄານໂລກ ແລະ ອົງການຜູ້ໃຫ້ທຶນຕ່າງໆມີຍຸດທະສາດການພັດທະນາລະດັບພາກພື້ນທີ່ສຸມໃສ່ກຸ່ມທີ່ມີຄວາມສ່ຽງ, ຊົນເຜົ່າກຸ່ມນ້ອຍ ແລະ ເຂດດ້ອຍໂອກາດ.

**4) ສິ່ງທ້າທາຍ**

- ສະພາບເສດຖະກິດມະຫາພາກ: ອັດຕາໜີ້ສິນແຫ່ງຊາດ ແລະ ອັດຕາເງິນເຟີ້ທີ່ສູງ, ບວກກັບຄ່າເງິນກີບທີ່ອ່ອນຄ່າລົງເມື່ອທຽບກັບເງິນໂດລາສະຫະລັດ, ເປັນສິ່ງທ້າທາຍອັນໃຫຍ່ຫຼວງຕໍ່ການບໍລິຫານຈັດການງົບປະມານຂອງລັດຖະບານ.
- ວາລະທີ່ສະຫຼັບຊັບຊ້ອນ: ຂອບເຂດ ແລະ ວາລະຂອງການພັດທະນາຊົນນະບົດມີຄວາມກ້ວາງຂວາງ ແລະ ຄອບຄຸມຫຼາຍດ້ານ, ເຮັດໃຫ້ມັນມີຄວາມທ້າທາຍຕໍ່ການສົ່ງເສີມຄວາມຮ່ວມມື ແລະ ການປະສານງານລະຫວ່າງກະຊວງ, ອົງການ ແລະ ພາກສ່ວນກ່ຽວຂ້ອງໃນຂະແໜງການຕ່າງໆ.
- ຄວາມສ່ຽງໄພພິບັດສູງ: ຊຸມຊົນຊົນນະບົດມີຄວາມສ່ຽງສູງຕໍ່ໄພພິບັດອັນເນື່ອງມາຈາກການປ່ຽນແປງຂອງດິນຟ້າອາກາດ ແລະ ຍັງມີຄວາມເປັນຫ່ວງກ່ຽວກັບຄວາມເສື່ອມໂຊມຂອງສິ່ງແວດລ້ອມທີ່ເກີດຈາກການນໍາໃຊ້ເຂົ້າໃນການພັດທະນາເກີນຂອບເຂດ.
- ການປ່ຽນແປງຄວາມຕ້ອງການດ້ານການພັດທະນາ: ມາດຕະຖານການພັດທະນາຂອງລັດຖະບານອາດຈະບໍ່ສອດຄ່ອງກັບຄວາມຕ້ອງການຂອງປະຊາຊົນໃນປະຈຸບັນຫຼືໃນອະນາຄົດ, ໂດຍສະເພາະໃນດ້ານການປັບຕົວຂອງການປ່ຽນແປງດິນຟ້າອາກາດ ແລະ ທິດທາງຂອງການພັດທະນາອຸດສາຫະກຳຕ່າງໆໃນແຕ່ລະເຂດ.
- ການຈັດສັນທີ່ດິນ: ການລົງທຶນຂອງຕ່າງປະເທດໃນຮູບແບບການສໍາປະທານປູກພືດເຊີງດ່ຽວຂະໜາດໃຫຍ່ອາດເຮັດໃຫ້ຊາວກະສິກອນຂະໜາດນ້ອຍໃນທ້ອງຖິ່ນມີຄວາມສາມາດໃນການແຂ່ງຂັນຫຼຸດລົງ ແລະ ເພີ່ມຄວາມບໍ່ພໍໃຈຕໍ່ການຈັດສັນທີ່ດິນເພື່ອການໃຊ້ປະໂຫຍດຂອງຕົນ.
- ການປ່ຽນແປງຄວາມຕ້ອງການຂອງຕະຫຼາດ: ການປ່ຽນແປງຄວາມຕ້ອງການຂອງຕະຫຼາດຈາກປະເທດເພື່ອນບ້ານເພີ່ມຄວາມສ່ຽງຕໍ່ການປ່ຽນແປງຂອງການປູກພືດຢ່າງກະທັນຫັນໃນຂະແໜງການກະສິກໍາ.
- ການຂາດວຽກເຮັດງານທໍາ: ໃນເຂດຊົນນະບົດ, ການສ້າງວຽກເຮັດງານທໍາທີ່ມີທ່າແຮງຍັງຈໍາກັດ, ເຮັດໃຫ້ປະຊາຊົນມີໂອກາດໜ້ອຍໃນການເຂົ້າຮັບການຝຶກອົບຮົມທັກສະວິຊາຊີບ. ສິ່ງຜົນໃຫ້ການຈັດຫາບຸກຄະລາກອນໃນທ້ອງຖິ່ນທີ່ມີຄວາມສາມາດພຽງພໍຕໍ່ການພັດທະນາແຕ່ລະເຂດເປັນເລື້ອງທີ່ທ້າທາຍ.

## 4.2. ຍຸດທະສາດທີ່ສໍາຄັນໂດຍອີງໃສ່ຜົນການວິເຄາະ SWOT

### 1) ຍຸດທະສາດ (ຈຸດແຂງ – ໂອກາດ)

ໝູນໃຊ້ຊັບພະຍາກອນທີ່ເປັນເອກະລັກຂອງພາກພື້ນລາວ ດ້ວຍການສ້າງ “ອຸດສາຫະກໍາຂັ້ນ 6” ທີ່ເຊື່ອມຕໍ່ກະສິກໍາ, ການແປຮູບອາຫານ ແລະ ການທ່ອງທ່ຽວ, ລວມທັງລັດຖະບານທ້ອງຖິ່ນສ້າງແຜນ ແລະ ງົບປະມານເພື່ອການຄ້າທັງຊັບສິນທີ່ເປັນມໍລະດົກ ທັງຈັບຕ້ອງໄດ້ ແລະ ຈັບຕ້ອງບໍ່ໄດ້, ຄຽງຄູ່ກັບການພັດທະນາຄວາມສາມາດໃນໃນທ້ອງຖິ່ນເພື່ອກໍານົດແຫຼ່ງຊັບພະຍາກອນ ແລະ ວາງແຜນໄດ້ຢ່າງເປັນເອກະລາດ.

### 2) ຍຸດທະສາດ (ຈຸດອ່ອນ-ໂອກາດ)

ເພີ່ມຂະໜາດ ແລະ ປະສິດທິພາບຂອງການຜະລິດກະສິກໍາ ໂດຍການລວມກຸ່ມຊາວກະສິກອນໃຫ້ເປັນສະຫະກອນດ້ານການຄ້າ ຫຼື ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ແລະ ເຊື່ອມໂຍງກັບການລົງທຶນໂດຍກົງຈາກຕ່າງປະເທດ (FDI), ເຂດເສດຖະກິດພິເສດ (SEZs) ແລະ ຊ່ອງທາງການຕະຫຼາດທີ່ມີຢູ່ແລ້ວ ລວມທັງການສ້າງຄວາມອາດສາມາດ, ການຝຶກອົບຮົມດ້ານວິຊາການ ແລະ ການສະໜັບສະໜູນດ້ານການບໍລິຫານ, ພ້ອມທັງອໍານວຍຄວາມສະດວກໃຫ້ແກ່ການເຂົ້າເຖິງການຊ່ວຍເຫຼືອເພື່ອການພັດທະນາຊົນນະບົດຈາກ ODA ເພື່ອຮັບປະກັນດ້ານການເງິນທີ່ຈໍາເປັນ.

### 3) ຍຸດທະສາດ ( ຈຸດແຂງ- ສິ່ງທ້າທາຍ)

ໃຊ້ຈຸດແຂງທີ່ມີຢູ່ເພື່ອຮັບມືກັບຄວາມສ່ຽງ ແລະ ສິ່ງທ້າທາຍ ຈາກພາຍນອກ ໂດຍການຂະຫຍາຍການຝຶກອົບຮົມດ້ານພາວະເປັນຜູ້ນຳ ແລະ ການເປັນຜູ້ປະກອບການໃຫ້ແກ່ໄວໜຸ່ມ ແລະ ແມ່ຍິງຊົນນະບົດ ໂດຍຜ່ານສະຖາບັນຕ່າງໆ ເຊັ່ນ: LKRDTC ແລະ SATC. ນອກຈາກນີ້, ຍຸດທະສາດດັ່ງກ່າວຍັງລວມເຖິງການລວມເອົາຄະນະກຳມະການຕ້ານໄພພິບັດໄວ້ໃນຂະບວນການວາງແຜນໂຄງການ ແລະ ການນຳຂະບວນການປະເມີນລ່ວງໜ້າແບບດິຈິຕອລມາໃຊ້ໃນແຜນການນຳໃຊ້ທີ່ດິນແບບມີສ່ວນຮ່ວມ (Participatory Land Use Planning/ PLUPs) ເພື່ອຈັດການຄວາມສ່ຽງ ແລ ະຈັດລຳດັບຄວາມສຳຄັນຄວາມຕ້ອງການຂອງຊຸມຊົນໃຫ້ໄດ້ດີຍິ່ງຂຶ້ນ.

### 4) ຍຸດທະສາດ (ຈຸດອ່ອນ-ສິ່ງທ້າທາຍ)

ແກ້ໄຂບັນຫາດ້ານການບໍລິຫານຈັດການ ແລະ ການປະສານງານໂດຍການສ້າງກອບການພັດທະນາຊົນນະບົດຮອບດ້ານ ແລະ ຄ່ອງຕົວ, ເປັນແບບຢ່າງຈາກໂຄງການ KOICA SMU. ໂດຍແບບຢ່າງນີ້ ໄດ້ເຊື່ອມໂຍງກັບກິດຈະກຳສ້າງລາຍຮັບ, ການປັບປຸງພື້ນຖານໂຄງລ່າງ, ການສ້າງຄວາມສາມາດ, ແລະ ການບໍລິຫານຈັດການ ການຈັດຕັ້ງປະຕິບັດໃຫ້ເປັນໂຄງການຍ່ອຍທີ່ເຊື່ອມໂຍງກັນ, ແລະ ຈັດຕັ້ງປະຕິບັດຕໍ່ເນື່ອງກັນເປັນໄລຍະ 10 ປີ. ແນວທາງແບບລວມນີ້ຊ່ວຍແກ້ໄຂບັນຫາການແຂ່ງຂັນດ້ານຊັບພະຍາກອນ ແລະ ການຂາດປະສິດທິພາບໃນການປະສານງານລະຫວ່າງກະຊວງ, ພ້ອມທັງຊຸກຍູ້ການພັດທະນາຊົນນະບົດແບບຍືນຍົງ.

## 4.3. ກອບແນວຄວາມຄິດການພັດທະນາຊົນນະບົດແບບໃໝ່ຂອງລາວ

ອີງໃສ່ (ຮ່າງ) ແຜນພັດທະນາ ກະສິກຳ, ປ່າມໄມ້ ແລະ ພັດຊົນນະບົດ, ຄັ້ງທີ X ຂອງກະຊວງກະສິກຳ ແລະ ປ່າໄມ້ (ກປ) ແລະ ຜົນການວິເຄາະ ຍຸດທະສາດຫຼັກຈາກ SWOT, ບົດລາຍງານສະບັບນີ້ ໄດ້ສະເໜີກອບຍຸດທະສາດໄລຍະຍາວເພື່ອພັດທະນາຊົນນະບົດ:

### ວິໄສທັດ ຮອດປີ 2050

ຄວາມທຸກຍາກໄດ້ຮັບການແກ້ໄຂຢ່າງທົ່ວເຖິງ; ຄອບຄົວ ມີພູມລຳເນົາ ແລະ ອາຊີບທີ່ໝັ້ນຄົງ; ຊົນນະບົດ ໄດ້ຮັບການພັດທະນາແບບຍືນຍົງ ໃກ້ຄຽງກັບຕົວເມືອງ, ເປັນພື້ນຖານທີ່ສຳຄັນໃຫ້ ເສດຖະກິດເອກະລາດເປັນເຈົ້າຕົນເອງ ແລະ ການຫັນເປັນອຸດສາຫະກຳ ແລະ ທັນສະໄໝ; ລະບົບການເມືອງ-ການປົກຄອງ ຢູ່ຮາກຖານຊົນນະບົດ ປອດໄສ, ເຂັ້ມແຂງ, ໜັກແໜ້ນ ຕາມທິດສາມສ້າງ ຄ້ຳປະກັນ ຄວາມເປັນລະບຽບຮຽບຮ້ອຍ ຄວາມສາມັກຄີປອງດອງ ສົ່ງເສີມໃຫ້ຊາວຊົນນະບົດ ເຈົ້າໃນການພັດທະນາ ແລະມີຊີວິດການເປັນຢູ່ດ້ານວັດຖຸ ແລະ ວັດທະນະທຳດີຂຶ້ນ.

### ເປົ້າໝາຍລວມ ຮອດປີ 2035

1) ຄວາມທຸກຍາກຂັ້ນຄອບຄົວ ແລະ ຂັ້ນບ້ານ ໄດ້ຮັບການແກ້ໄຂໂດຍພື້ນຖານ;
2) ຊຸມຊົນຊົນນະບົດໃໝ່ໄດ້ຂະຫຍາຍຕົວຢ່າງກວ້າງຂວາງກາຍເປັນຕົວເມືອງ;
3) ຈຳນວນຄອບຄົວສ່ວນໃຫຍ່ ມີ ທີ່ຢູ່ອາໄສແໜ້ນໜາປອດໄພ, ໄດ້ເຂົ້າເຖິງການບໍລິການສາທາລະນະຢ່າງທົ່ວເຖິງ;
4) ຊາວຊົນນະບົດ ມີເນື້ອທີ່ຜະລິດເປັນສິນຄ້າ ຫຼື ຜະລິດເປັນຟາມ ຊຶ່ງໄດ້ຮັບການຄໍ້າປະກັນກຳມະສິດທີ່ດິນຕາມກົດ ໝາຍ;
5) ໂຄງປະກອບອາຊີບຂອງຊາວຊົນນະບົດມີການປ່ຽນແປງ ໃຊ້ເຕັກນິກວິທະຍາສາດຂໍ້ມູນຂ່າວສານເພີ່ມຂຶ້ນ ຍົກສູງຜະລິດຕະພາບໃຫ້ມີຄວາມລຳບາກໜ້ອຍລົງ, ລາຍຮັບສູງຂຶ້ນ;
6) ເສດຖະກິດຮ່ວມມືປະຊາຊົນ ກຸ່ມ ແລະ ສະຫະກອນ, ຫົວໜ່ວຍ SME ແລະ " ໜຶ່ງຕາແສງ-ໜຶ່ງຜະລິດຕະພັນ" ໄດ້ຮັບການສົ່ງເສີມ, ໄດ້ເຕີບໃຫຍ່ຂະຫຍາຍຕົວ ຢູ່ຊົນນະບົດ;
7) ຄອບຄົວຊາວຊົນນະບົດໄດ້ມີພື້ນຖານການຜະລິດທີ່ເຂັ້ມແຂງໂດຍສະເພາະທາງດ້ານກະສິກຳ ກຸ້ມຕົນເອງທາງດ້ານສະບຽງອາຫານ ແລະສະໜອງສະບຽງອາຫານໃຫ້ຕົວເມືອງ, ວັດຖຸດິບ ໃຫ້ຂະແໜງອຸດສະຫະກຳ ແລະ ເປັນສິນຄ້າສົ່ງອອກ;
8) ໂຄງການພັດທະນາຕ່າງໆ ທີ່ດຳເນີນການຢູ່ຊົນນະບົດ ຕິດພັນ ແລະ ປະກອບສ່ວນເຂົ້າໃນການພັດທະນາທ້ອງຖິ່ນ, ອານຸລັກຮັກສາທຳມະຊາດ, ຊີວະນາໆພັນ, ແຫຼ່ງທ່ອງທ່ຽວປະຫວັດສາດ ແລະ ທຳມະຊາດ ໂດຍສະເພາະ ບ່ອນທີ່ໂຄງການໄດ້ຈັດຕັ້ງປະຕິບັດ ແລະ ສົ່ງຜົນກະທົບໃສ່;
9) ວັດທະນະທຳ ຢູ່ຊົນນະບົດ ໄດ້ຮັບການປົກປັກຮັກສາ ເສີມຂະຫຍາຍ;
10) ຄວາມແຕກໂຕນດ້ານການພັດທະນາ ລະຫວ່າງ ເຂດຊົນນະບົດ ແລະ ຕົວເມືອງ ໄດ້ຫຼຸດຜ່ອນລົງ;
11) ລະບົບ ການເມືອງ-ການປົກຄອງຂັ້ນຮາກຖານ ໄດ້ຮັບການປັບປຸງ ໃຫ້ເຂັ້ມແຂງ ມີຄວາມສາມາດ ຄຸ້ມຄອງບັງຄັບໃຊ້ກົດໝາຍ, ເຕົ້າໂຮມຄວາມສາມັກຄີ ແລະ ຮັບໃຊ້ປະຊາຊົນໄດ້ດີ;
12) ຊາວຊົນນະບົດໄດ້ຫັນປ່ຽນແບບແຜນດຳລົງຊີວິດ ແລະ ແບບແຜນທຳມາຫາກິນ ກ້າວໜ້າຂຶ້ນ.

### ຄາດໝາຍສູ້ຊົນ 2035

1) ອັດຕາສ່ວນຄອບຄົວທຸກຍາກ ຕ່ຳກວ່າ 10%;
2) ບັນດາບ້ານໄດ້ມີທາງທຽວໄດ້ ຕະຫຼອດປີ.

3) ບັນດາເມືອງຊົນນະບົດ ມີຊຸມຊົນຊົນນະບົດໃໝ່ປາກົດຂຶ້ນ;
4) ແຮງງານຊົນນະບົດໄດ້ກວມອັດຕາສ່ວນເພີ່ມຂຶ້ນ ໃນ ບັນດາໂຮງງານປຸງແຕ່ງ, ຟາມກະສິກຳ, ໂຄງການພັດທະນາ ທີ່ດຳເນີນກິດຈະກຳ ຢູ່ຊົນນະບົດ;
5) ບ້ານນ້ອຍກະແຈກກະຈາຍ ໝົດໄປ ແລະ ສະນໍ້າ ໝົດໄປໂດຍພື້ນຖານ;
6) ການເຄື່ອນຍ້າຍຊະຊາຍ ແລະ ການທຳມາຫາກິນເລື່ອນລອຍຂອງພົນລະເມືອງ ໄດ້ຍຸດຕິລົງ;
7) ທຸກໆຄອບຄົວມີທີ່ຢູ່ອາໄສທີ່ ແໜ້ນໜາປອດໄພ ມີທະບຽນ;
8) ທຸກໆຄອບຄົວມີໄຟຟ້າໃຊ້, ເຂົ້າເຖິງການໂທລະຄົມມະນາຄົມ ແລະ ການຂົນສົ່ງ, ນໍ້າສະອາດ, ໂຮງໝໍ, ໂຮງຮຽນ ແລະ ຕະຫຼາດ;
9) ຊາວກະສິກອນທຳມາຫາກິນຢູ່ດິນທີ່ມີທະບຽນຄໍ້າປະກັນກຳມະສິດ ຢ່າງຖືກຕ້ອງຕາມກົດໝາຍ;
10) ທຸກບ້ານມີກົດລະບຽບບ້ານ ທີ່ຜັນຂະຫຍາຍກົດໝາຍ; ມີຄວາມສະຫງົບປອດໄພໂດຍພື້ນຖານ;

ຂະບວນວິວັດການພັດທະນາຊົນນະບົດໃນສະຕະວັດທີ 21 ຂອງລາວ ຮຽກຮ້ອງໃຫ້ມີແນວທາງແບບປະສົມປະສານຫຼາຍລະດັບ, ທີ່ກ້າວຂ້າມກະສິກຳແບບດັ້ງເດີມ. ແຜນວາດ 1 ທີ່ສະເໜີປະກອບມີ 4 ອົງປະກອບດ້ານວິຊາການທີ່ສຳຄັນຄື: 1) ການພັດທະນາຊຸມຊົນ (Community Development /CD) ເພື່ອສົ່ງເສີມເສດຖະກິດທ້ອງຖິ່ນແບບຍືນຍົງ ແລະ ສ້າງແຫຼ່ງທຶນທາງສັງຄົມໂດຍຜ່ານການມີສ່ວນຮ່ວມຈາກລຸ່ມຂຶ້ນເທິງ 2) ການເສີມສ້າງຂີດຄວາມສາມາດ ແລະ ສົ່ງເສີມກະສິກຳ (Capacity Building and Agricultural Extension /AE) ເພື່ອໃຫ້ຊາວກະສິກອນມີການຝຶກອົບຮົມດ້ານວິຊາການ ແລະ ການສະໜັບສະໜູນນະວັດຕະກຳທີ່ເໝາະສົມ; 3) ການພັດທະນາກະສິກຳ (Capacity Building and Agricultural Extension/AD) ເພື່ອເພີ່ມຜົນຜະລິດດ້ວຍເຕັກໂນໂລຢີທີ່ທັນສະໄໝ ແລະ ການປັບປຸງພື້ນຖານໂຄງລ່າງ; ແລະ 4) ຊຸກຍູ້ສົ່ງເສີມສະຫະກອນກະສິກຳ (Agricultural Cooperatives /AC) ເພື່ອເສີມສ້າງການລວມພະລັງ ແລະ ການເຊື່ອມໂຍງສູ່ຕະຫຼາດ.

ກອບແນວຄວາມຄິດຮອບດ້ານນີ້ໄດ້ໄດ້ມີອົງປະກອບເສີມດ້ານຄຸ້ມຄອງບໍລິຫານເປັນອົງປະກອບທີ 5 ໂດຍ ການນຳເອົາວິທີການບໍລິຫານໂຄງການ ແລະ ການຈັດຕັ້ງການປະຕິບັດ (PM) ເພື່ອຮັບປະກັນຄວາມຍືນຍົງໃນໄລຍະຍາວເຖິງແມ່ນວ່າໂຄງການທີ່ໄດ້ຮັບການສະຫນັບສະຫນູນຈາກຜູ້ໃຫ້ທຶນໄດ້ສິ້ນສຸດລົງ. ສະນັ້ນ,ໂດຍອີງໃສ່ບັນດາປັດໄຈຜົນສຳເລັດຈາກປະສົບການຂອງ ແຊມາອຸດົງ (SMU) ຂອງ ສ.ເກົາຫຼີ, ໂປຣກຣາມພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (IIRD) ປະກອບດ້ວຍ 5 ອົງປະກອບດັ່ງລຸ່ມນີ້:




ແຜນວາດ 1. ໂປຣກຣາມ ພັດທະນາຊົນນະບົດແບບປະດົດສ້າງ ແລະ ເຊື່ອມໂຍງ (IIRD) ໃນ ສປປ ລາວ




- **ອົງປະກອບທີ 1:** ໂຄງການພັດທະນາຊຸມຊົນ (Community Development/ CD) ແມ່ນສຸມໃສ່ການພັດທະນາຊຸມຊົນ ແລະ ບ້ານ; ຄຽງຄູ່ກັບການປັບປຸງຊີວິດການເປັນຢູ່.

- **ອົງປະກອບທີ 2:** ໂຄງການພັທະນາ ແລະ ສ້າງຄວາມອາດສາມາດ ແລະ ການສົ່ງເສີມກະສິກຳ (Capacity Building and Agricultural Extension /AE) ແນໃສ່ເສີມຂະຫຍາຍການບໍລິການສົ່ງເສີມກະສິກຳ,

ພັດທະນາການເປັນຜູ້ນຳພາ ແລະ ທັກສະທາງດ້ານວິຊາການ ຂອງພະນັກງານລັດ, ການນຳບ້ານ, ຊາວໜຸ່ມ ແລະ ແມ່ຍິງໃນຊຶມນະບົດ ແລະ ກຸ່ມຊາວກະສິກອນເພື່ອການພັດທະນາຊົນນະບົດ.

- **ອົງປະກອບທີ 3 ແລະ 4:** ໂຄງການພັດທະນາກະສິກຳ (Agricultural Development/ AD) ແລະ ສະຫະກອນກະສິກຳ (Agricultural Cooperative) ສຸມໃສ່ການສ້າງລາຍຮັບໂດຍຜ່ານກິດຈະກຳກະສິກຳ ແລະ ກິດຈະກຳສະຫາກອນ.

- **ອົງປະກອບທີ 5:** ໂຄງການບໍລິຫານ ແລະ ການຈັດຕັ້ງປະຕິບັດໂຄງການ (Project and Performance Management /PM) ເປັນໂຄງການພື້ນຖານເພື່ອສະໜັບສະໜູນການບໍລິຫານຈັດການໂຄງການ, ການຕິດຕາມ ແລະ ການປະເມີນຜົນ, ໂດຍນຳໃຊ້ລະບົບປະສານງານຮ່ວມກັນ ລະຫວ່າງ (Co-PM) ຕະຫຼອດໄລຍະການຈັດຕັ້ງປະຕິບັດໂຄງການ.

ສະຫຼຸບລວມແລ້ວ, ແຜນວາດທີ 1 ໄດ້ສະແດງເຖິງ ໂປຣກຣາມ ພັດທະນາຊົນນະບົດແບບປະດິດສ້າງ ແລະ ປະສົມປະສານ (IIRD) ໃນ ສປປ ລາວ, ເຊິ່ງໄດ້ສັງລວມບັນດາປະເດັນທີ່ສຳຄັນ ທີ່ໄດ້ກ່າວມາກ່ອນໜ້ານີ້. ໂປຣກຣາມ IIRD ປະກອບມີ 5 ອົງປະກອບ.

## V. ແຜນຍຸດທະສາດການພັດທະນາຊົນນະບົດ (2026-2030)

ອີງຕາມການວິເຄາະກ່ອນໜ້ານີ້ ແລະ ກອບແນວຄິດ, ແຜນດຳເນີນງານໃນບົດລາຍງານນີ້ ແມ່ນການສະເໜີໃຫ້ແກ່ວຽກງານກໍ່ຄືໂຄງການພັດທະນາຊົນນະບົດໄລຍະປີ 2026-2030, ສອດຄ່ອງກັບ NSEDP ຄັ້ງທີ X. ແຜນດຳເນີນງານດັ່ງກ່າວມີຄວາມຍືດຫຍຸ່ນສຳລັບການຂະຫຍາຍໄລຍະຍາວ ແລະ ການປັບຕົວເປັນແຕ່ລະໄລຍະ, ແລະ ມັນໄດ້ຖືກອອກແບບມາເພື່ອເຊື່ອມໂຍງກັບຍຸດທະສາດຂອງ KOICA; ເພື່ອເຮັດໃຫ້ໂຄງການສ້າງລາຍໄດ້ຂະໜາດໃຫຍ່ໂດຍສະເພາະໃນດ້ານກະສິກຳ ແລະ ປ່າໄມ້ ເພື່ອຮັບປະກັນຄວາມຍືນຍົງ. ແຜນດັ່ງກ່າວໄດ້ໃຫ້ບຸລິມະສິດການເປັນເຈົ້າຂອງໃນລະດັບທ້ອງຖິ່ນ ແລະ ການສ້າງທຶນພາຍໃນ, ເຊິ່ງຮຽກຮ້ອງໃຫ້ມີການປັບປຸງການບໍລິຫານຄຸ້ມຄອງ, ການສ້າງຄວາມອາດສາມາດຂອງອົງກອນລັດ, ແລະ ການຈັດສັນກອງທຶນສົມທົບສະເພາະກິດຈາກກະຊວງກະສິກຳ ແລະ ປ່າໄມ້ (MAF) ສຳລັບການສົ່ງເສີມຊົນນະບົດ ແລະ ແລະ ການປະສານງານດ້ານການບໍລິຫານຈັດການ.

ສະນັ້ນ, ແຜນຍຸດທະສາດ 6 ແຜນ ແມ່ນໄດ້ສະເໜີໃຫ້ສ້າງກອບບູລິມະສິດໂຄງການພັດທະນາຊົນນະບົດໄລຍະຍາວ ແລະ ຫຼາຍມິຕິ, ລວມທັງການບໍລິຫານຈັດການການຈັດຕັ້ງປະຕິບັດ ແລະ ສະໜັບສະໜູນດ້ວຍການປັບປຸງການຈັດຕັ້ງທີ່ກ່ຽວຂ້ອງ:

- ການປັບປຸງນະໂຍບາຍ ແລະ ການຄຸ້ມຄອງວຽກງານພັດທະນາຊົນນະບົດ;
- ລະບົບ ແລະ ໜ້າທີ່ການຈັດຕັ້ງປະຕິບັດໂປຣກຣາມພັດທະນາຊົນນະບົດ
- ຮູບແບບຂອງໂປຣກຣາມພັດທະນາຊົນນະບົດ;
- ການສ້າງຂີດຄວາມສາມາດ ແລະ ວິທີການຝຶກອົບຮົມ;
- ການຮັບປະກັນ ແລະ ການບໍລິຫານຈັດການດ້ານການເງິນເພື່ອການພັດທະນາຊົນນະບົດ
- ການບໍລິຫານຈັດການປະສິດທິພາບ ແລະ ການຊຸກຍູ້ສົ່ງເສີມໂປຣກຣາມພັດທະນາຊົນນະບົດ.

## 5.1. ແຜນຍຸດທະສາດ 1 : ການປັບປຸງນະໂຍບາຍ ແລະ ການຄຸ້ມຄອງວຽກງານພັດທະນາຊົນນະບົດ

ລັດຖະບານລາວໃຫ້ຄວາມສຳຄັນຕໍ່ການພັດທະນາ ແລະ ຈັດຕັ້ງປະຕິບັດຍຸດທະສາດການພັດທະນາກະສິກຳ ແລະ ແຜນການລົງທຶນ ເພື່ອບັນລຸເປົ້າໝາຍຂອງແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ (NSEDP) ໃນຂົງເຂດກະສິກຳ, ຄຽງຄູ່ກັບການພັດທະນານະໂຍບາຍພັດທະນາຊົນນະບົດ. ແນວໃດກໍດີ, ອຸປະສັກທີ່ສຳຄັນທີ່ເກີດຂວາງການປະຕິບັດນະໂຍບາຍກະສິກຳຂອງລັດຖະບານລວມທັງການບັງໃຊ້ນະໂຍບາຍ "ສາມສ້າງ" ໃນດ້ານການເມືອງທີ່ເຂັ້ມງວດ, ຂາດສະຖາບັນ ຫຼື ການສື່ສານລວມເຖິງການຮ່ວມມືທີ່ບໍ່ພຽງພໍລະຫວ່າງໜ່ວຍງານດ້ານບໍລິຫານ. ມີຄວາມຈຳເປັນຫຼາຍຂຶ້ນໃນການປັບປຸງການປົກຄອງໂດຍການຂະຫຍາຍການຮ່ວມມືກັບພາກສ່ວນທີ່ກ່ຽວຂ້ອງຕ່າງໆ ແລະ ພາກເອກະຊົນທີ່ມີສ່ວນກ່ຽວຂ້ອງໃນການພັດທະນາຊົນນະບົດ ແລະ ການສະໜອງຂໍ້ມູນໃຫ້ທັນເວລາ.

- **ການດຳເນີນການທີ່ສຳຄັນ:**
  - ການພັດທະນາອຸດສາຫະກຳຂັ້ນ 6: ອຳນາດການປົກຄອງແຂວງ ຫຼື ເມືອງ ກຳນົດແຜນການ ແລະ ງົບປະມານເພື່ອພັດທະນາອຸດສາຫະກຳຂັ້ນ 6 ເພື່ອສ້າງມູນຄ່າດ້ານການທ່ອງທ່ຽວດ້ວຍການເຊື່ອມສານມໍລະດົກທີ່ເປັນຮູບປະທຳ ແລະ ນາມມະທຳ. ຊຸກຍູ້ສົ່ງເສີມອຸດສາຫະກຳທີ່ພັກ ແລະ ບໍລິການອາຫານເພື່ອດຶງດູດນັກທ່ອງທ່ຽວທັງພາຍໃນ ແລະ ຕ່າງປະເທດ. ໃນຂະນະດຽວກັນ, ລັດຖະບານທ້ອງຖິ່ນສະໜັບສະໜູນການສ້າງຄວາມສາມາດເພື່ອໃຫ້ຊາວບ້ານສາມາດກຳນົດແຫຼ່ງຊັບພະຍາກອນຂອງຕົນເອງ ແລະ ອອກແບບແຜນການດ້ານການຄ້າກຸ້ມຕົນເອງ. ສຳລັບວິທີການໃນການຈັດຕັ້ງປະຕິບັດໂຄງການນີ້, ໄດ້ມີການກຳນົດໂຄງການຍ່ອຍດ້ານການສົ່ງເສີມກະສິກຳ (AE) ຫຼືໂຄງການພັດທະນາຊຸມຊົນ/ບ້ານ (CD) ພາຍໃຕ້ໂຄງການການພັດທະນາຊົນນະບົດແບບປະດິດສ້າງ ແລະ ປະສົມປະສານ (IIRD) ທີ່ໄດ້ຮັບການສະໜັບສະໜູນຈາກ KOICA.
  - ການສະໜັບສະໜູນການຄ້າຂອງສະຫະກອນຊາວກະສິກອນທ້ອງຖິ່ນ: ເພື່ອຮັບປະກັນວ່າສະຫະກອນຜູ້ຜະລິດສາມາດເຂົ້າເຖິງແຫຼ່ງທຶນທີ່ຈຳເປັນ, ລັດຖະບານລາວ (MAF) ໃຫ້ການສະໜັບສະໜູນການເຂົ້າເຖິງໂຄງການຊ່ວຍເຫຼືອເພື່ອການພັດທະນາຢ່າງເປັນທາງການ ODA ດ້ານການພັດທະນາຊົນນະບົດ. ສຳລັບແນວທາງການຈັດຕັ້ງປະຕິບັດໂຄງການນີ້, ໄດ້ມີການກຳນົດໂຄງການຍ່ອຍດ້ານສະຫະກອນກະສິກຳ (AC) ພາຍໃຕ້ໂປຣກຣາມ IIRD ທີ່ໄດ້ຮັບການສະໜັບສະໜູນຈາກ KOICA (ອ້າງອີງໃສ່ເອກະສານຊ້ອນທ້າຍ 1. ແຜນພັດທະນາ 5 ປີສຳລັບການພັດທະນາສະຫະກອນກະສິກຳ).
  - ການລວມເອົາຄະນະກຳມະການຈັດການໄພພິບັດເຂົ້າໃນການຄຸ້ມຄອງໂຄງການພັດທະນາຊົນນະບົດ: ຄະນະກຳມະການຕ້ານໄພພິບັດ, ເຊິ່ງຢູ່ພາຍໃຕ້ການຊີ້ນຳຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ສ້າງຕັ້ງຂຶ້ນແລ້ວຢູ່ໃນ 177 ເມືອງ ແລະ 2,139 ບ້ານໃນທົ່ວປະເທດ. ສະນັ້ນ, ຈຶ່ງມີຄວາມຈຳເປັນທີ່ຈະຕ້ອງສົມທົບກັບຄະນະກຳມາທິການເຫຼົ່ານີ້ຈາກຂັ້ນຕອນການວາງແຜນໂຄງລ່າງພື້ນຖານລະດັບບ້ານ ແລະ ໂຄງການພັດທະນາຊົນນະບົດຢ່າງເປັນລະບົບ ເພື່ອປະເມີນຄວາມສ່ຽງຈາກໄພພິບັດ ແລະ ລວມເອົາແຜນການຮັບມືກັບໄພພິບັດເຂົ້າໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວ.

## 5.2. ແຜນຍຸດທະສາດ 2 : ລະບົບ ແລະ ໜ້າທີ່ໃນການຈັດຕັ້ງປະຕິບັດໂປຣກຣາມພັດທະນາຊົນນະບົດ

ແຜນຍຸດທະສາດ 2 ນີ້ໄດ້ສຸມໃສ່ໂຄງສ້າງຂອງພາກລັດໃນການຂັບເຄື່ອນການພັດທະນາຊົນນະບົດ ແລະ ການສ້າງນະວັດຕະກຳໃນການບໍລິການສົ່ງເສີມກະສິກຳ. ນອກນີ້ຍັງໄດ້ສະເໜີແນວທາງເພື່ອເສີມຂະຫຍາຍບົດບາດ ແລະ ການມີສ່ວນຮ່ວມຂອງບັນດາອົງການຈັດຕັ້ງບ້ານໃນທ້ອງຖິ່ນໃນຂະບວນການພັດທະນາໃຫ້ເຂັ້ມແຂງ.

ອີງຕາມບົດລາຍງານຂອງອົງການອາຫານ ແລະ ການກະເສດ (FAO, 2024) ທີ່ຜ່ານມາ, ສິ່ງທ້າທາຍທີ່ສຳຄັນອັນໜຶ່ງຂອງຂະແໜງກະສິກຳໃນລາວແມ່ນການຂາດການບໍລິການສົ່ງເສີມກະສິກຳໃນເຂດຊົນນະບົດ. ການບໍລິການສົ່ງເສີມກະສິກຳບໍ່ພຽງແຕ່ເປັນການແກ້ໄຂບັນຫາແບບຍືນຍົງຕໍ່ກັບບັນຫາຜະລິດຕະພາບຕ່ຳທີ່ເກີດຈາກຄວາມສາມາດທາງດ້ານກະສິກຳບໍ່ພຽງພໍຂອງຊາວກະສິກອນລາວເທົ່ານັ້ນ, ແຕ່ຍັງມີບົດບາດສຳຄັນໃນການພັດທະນາລະບົບຕ່ອງໂສ້ມູນຄ່າກະສິກຳດ້ານການຄ້າອີກດ້ວຍ.

- **ການດຳເນີນການທີ່ສຳຄັນ:**
  - **ກອບລວມໂປຣກຣາມການພັດທະນາຊົນນະບົດມພັດທະນາຊົນນະບົດ:** ໂດຍອີງໃສ່ຮູບແບບໂຄງການ **SMU** ຂອງ **KOICA,** ໂປຣກຣາມການພັດທະນາຊົນນະບົດແບບຫົວຄິດປະດິດສ້າງ ແລະ ເຊື່ອມໂຍງ **(IIRD)** ປະກອບດ້ວຍໂຄງການຍ່ອຍຕ່າງໆເຊັ່ນ: "ການສ້າງລາຍຮັບ **(AD** ແລະ **AC),", "**ການປັບປຸງພື້ນຖານໂຄງລ່າງເພື່ອພັດທະນາຊີວິດການເປັນຢູ່ຂອງຊົນນະບົດ **(CD)," "**ການສ້າງຄວາມອາດສາມາດ **(AE)",** ແລະ "ການຈັດບໍລິຫານຈັດການໂຄງການ ແລະ ການບໍລິຫານຈັດການປະສິດທິພາບ". ດັ່ງນັ້ນ, ໂຄງການຕ່າງໆໃນທົ່ວຂະແໜງການຕ່າງໆຈຶ່ງໄດ້ຖືກຈັດໃຫ້ຈັດຕັ້ງປະຕິບັດຄວບຄູ່ກັນ ແລະ ເຊື່ອມໂຍງເຖິງກັນພາຍໃນອົງປະກອບເຫຼົ່ານີ້.
  - **ການຫັນປ່ຽນສູນຝຶກອົບຮົມກະສິກຳສຳລັບໄວໜຸ່ມຊົນນະບົດ:** ລັດຖະບານ **(MAF)** ສະໜອງການໃຫ້ຄວາມຮູ້ດ້ານກະສິກຳ ແລະ ຝຶກອົບຮົມຫົວຂໍ້ທີ່ກ່ຽວຂ້ອງຜ່ານອົງການ **LKRDTC, SATC,** ແລະ ສູນຝຶກອົບຮົມວິຊາຊີບ/ສີມືແຮງງານອື່ນໆໃຫ້ແກ່ພະນັກງານສົ່ງເສີມກະສິກຳ/ຊົນນະບົດ,ຄະນະພັດທະນາບ້ານ **(VDC),** ຊາວກະສິກອນ, ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ ເພື່ອຖ່າຍທອດເຕັກໂນໂລຊີກະສິກຳດ້ານນະວັດຕະກຳ ແລະ ທັກສະ ທີ່ຈຳເປັນສຳລັບກິດຈະກຳສ້າງລາຍຮັບ. ພາລະບົດບາດຄວາມຮັບຜິດຊອບຂອງສູນຝຶກອົບຮົມຈຳເປັນຕ້ອງໄດ້ຮັບການປັບປຸງໃຫ້ສອດຄ່ອງກັບພາລະກິດແລະຫຼັກສູດການຝຶກອົບຮົມທີ່ຂະຫຍາຍອອກໄປ. ສຳລັບແນວທາງການຈັດຕັ້ງປະຕິບັດໂຄງການໃນຂົງເຂດນີ້, ໄດ້ມີການສ້າງໂຄງການອົງປະກອບສົ່ງເສີມກະສິກຳ **(AE)** ພາຍໃຕ້ໂປຣກຣາມ **IIRD** ໂດຍໄດ້ຮັບທຶນສະໜັບສະໜູນຈາກ **KOICA,** ໂດຍມີເງິນສົມທົບຈາກກະຊວງກະສິກຳ ແລະ ປ່າໄມ້ **(MAF)** ສຳລັບການຈັດຕັ້ງປະຕິບັດ ແລະ ການຈັດການຂັ້ນພື້ນຖານຂອງສູນຝຶກອົບຮົມ.
  - **ການພັດທະນາອຸດສາຫະກຳຂັ້ນ 6:** ການເຊື່ອມໂຍງກັບການຈັດຕັ້ງປະຕິບັດທີ່ສຳຄັນຂອງອົງປະກອບທີ 1, ດ້ານສົ່ງເສີມກະສິກຳ (AE) ສາມາດກຳນົດ ແລະ ສ້າງຄວາມເຂັ້ມແຂງການບໍລິການສົ່ງເສີມກະສິກຳ / ຊົນນະບົດ ເພື່ອສະໜັບສະໜູນການພັດທະນາອຸດສາຫະກຳຂັ້ນ 6 ພາຍໃຕ້ໂປຣກຣາມ IIRD, ທີ່ໄດ້ຮັບທຶນຈາກ KOICA. ຄະນະພັດທະນາບ້ານ (VDCs) ຈະມີບົດບາດສຳຄັນໃນການພັດທະນາແຫຼ່ງທ່ອງທ່ຽວລະດັບຊຸມຊົນ ແລະ

ການວາງແຜນຈັດກິດຈະກຳທາງວັດທະນະທຳ (ງານບຸນ, ງານຕະຫຼາດນັດ ແລະ ອື່ນໆ) ໂດຍຜ່ານການບໍລິການສົ່ງເສີມຊຸມຊົນນະບົດຂອງເມືອງ.

- **ຈັດຕັ້ງ ແລະ ຂະຫຍາຍການຜະລິດກະສິກຳເພື່ອເປັນສິນຄ້າ ແລະ ການມີສ່ວນຮ່ວມກັບການໂດຍກົງຈາກຕ່າງປະເທດ (FDI), ເຂດເສດຖະກິດພິເສດ (SEZs) ແລະ ຕະຫຼາດ:** ເພື່ອພັດທະນາການຜະລິດທາງກະສິກຳໃນລະດັບຂະໜາດໃຫຍ່ ແລະ ສູນກາງດ້ານການຂົນສົ່ງ. ລັດຖະບານໄດ້ສະໜອງການຝຶກອົບຮົມເສີມສ້າງຄວາມອາດສາມາດ, ການບໍລິການດ້ານການບໍລິຫານ, ການຂະຫຍາຍບໍລິການຕ່ອງໂສ້ມູນຄ່າ, ແລະ ການຝຶກອົບຮົມເຕັກນິກເພື່ອການຜະລິດທີ່ມີຄຸນນະພາບສູງ ເພື່ອຈັດລະບຽບໃຫ້ຊາວກະສິກອນລວມຕົວກັນເຂົ້າເປັນສະຫະກອນກະສິກຳ ດຳເນີນທຸລະກິດ ຫຼື ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs). ເພື່ອຮັກສາຊາວກະສິກອນຈາກຄວາມເສຍຫາຍທີ່ອາດເກີດຂຶ້ນໃນການເຮັດສັນຍາກະສິກຳກັບການລົງທຶນໂດຍກົງຈາກຕ່າງປະເທດ (FDI) ຫຼື ບໍລິສັດເອກະຊົນ, ລັດຖະບານຈຳເປັນຕ້ອງວາງມາດຕະການປ້ອງກັນ ເຊັ່ນ: ກຳນົດເງື່ອນໄຂມາດຕະຖານຂອງສັນຍາກະສິກຳ. ສຳລັບວິທີການປະຕິບັດໂຄງການໃນຂົງເຂດນີ້, ໄດ້ມີການກຳນົດໂຄງການອົງປະກອບດ້ານການສົ່ງເສີມກະສິກຳ (AE) ພາຍໃຕ້ໂປຣກຣາມ IIRD ທີ່ໄດ້ຮັບທຶນຈາກ KOICA (ເບິ່ງເອກະສານຊ້ອນທ້າຍ 2 ຂອງແຜນພັດທະນາ 5 ປີສຳລັບການພັດທະນາອັດສະລິຍະ ແລະ ການຝຶກອົບຮົມທັກສະສຳລັບໄວໜຸ່ມຊົນນະບົດ).
- **ການລວມເອົາຄະນະກຳການຕ້ານໄພພິບັດເຂົ້າໃນການບໍລິຫານໂຄງການພັດທະນາຊົນນະບົດ:** ຄະນະກຳມະການຕ້ານໄພພິບັດ, ເຊິ່ງຢູ່ພາຍໃຕ້ການຊີ້ນຳຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມ ໄດ້ຈັດຕັ້ງຂຶ້ນຢູ່ 177 ເມືອງ ແລະ 2,139 ບ້ານໃນທົ່ວປະເທດ. ຈຳເປັນຕ້ອງເພີ່ມທະວີການມີສ່ວນຮ່ວມຂອງຄະນະກຳມາທິການຕັ້ງແຕ່ຂັ້ນຕອນການວາງແຜນໂຄງລ່າງພື້ນຖານຂອງບ້ານ ແລະ ໂຄງການພັດທະນາຊົນນະບົດ ເພື່ອປະເມີນຄວາມສ່ຽງຈາກໄພພິບັດ ແລະ ເຊື່ອມໂຍງກັບແຜນການຮັບມືກັບໄພພິບັດເຂົ້າໃນການຈັດຕັ້ງປະຕິບັດໂຄງການດັ່ງກ່າວ.

## 5.3. ແຜນຍຸດທະສາດ 3: ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ

ໃນບັນດາອົງປະກອບ 5 ອົງປະກອບພາຍໃຕ້ກອບໂປຣກຣາມ IIRD ນັ້ນ, ມີສອງອົງປະກອບດ້ານການສ້າງລາຍຮັບ (AC ແລະ AD) ແລະ ໜຶ່ງອົງປະອບແມ່ນກ່ຽວຂ້ອງກັບການພັດທະນາຊຸມຊົນ/ ບ້ານ ແລະ ການປັບປຸງຊີວິດການເປັນຢູ່ (CD). ອົງປະກອບເຫຼົ່ານີ້ຮຽກຮ້ອງໃຫ້ມີການປັບໃຊ້ ໃນການອອກແບບ ແລະ ການຈັດຕັ້ງປະຕິບັດ ໃຫ້ເໝາະສົມຕາມແຕ່ລະທ້ອງຖິ່ນ, ທັງໃນການຄັດເລືອກພື້ນທີ່ / ບ້ານ, ການສຳຫຼວດເບື້ອງຕົ້ນໃນພື້ນທີ່ໂຄງການ, ແລະ ການກຳນົດຄວາມຕ້ອງການເລັ່ງດ່ວນຂອງປະຊາຊົນໃນໝູ່ບ້ານ, ລວມທັງກຸ່ມທີ່ມີຄວາມສ່ຽງ. ດັ່ງນັ້ນ, ດັ່ງນັ້ນ ໂປຣກຣາມ IIRD ຈະລວມເອົາບັນດາໂຄງການທີ່ມີທ່າແຮງຈາກແຜນດຳເນີນງານ (ການຜະລິດເຂົ້າ, ການປູກພືດຜັກ, ແລະ ການຜະລິດງົວ), ມາປະຍຸກໃຊ້ລວມທັງໂຄງການ CD, ທີ່ປະກອບດ້ວຍໂຄງການພັດທະນາບ້ານ, ເຊິ່ງແບ່ງອອກເປັນໂຄງການຍ່ອຍເພື່ອປັບປຸງພື້ນຖານໂຄງລ່າງດ້ານສິ່ງແວດລ້ອມ ແລະ ກິດຈະກຳທາງເສດຖະກິດສັງຄົມເຊັ່ນ: ສະໂມສອນບ້ານ, ເສັ້ນທາງຊົນນະບົດ, ລະບົບຊົນລະປະທານແລະ ສູນສຸຂະພາບ, ໂຮງຮຽນ, ກອງທຶນບ້ານ/ລະບົບສິນເຊື່ອຊຸມຊົນອື່ນໆ.

➢ **ການດຳເນີນການທີ່ສຳຄັນ:**

- ໂຄງການກິດຈະກຳສ້າງລາຍຮັບ: ແຜນດຳເນີນງານສຳລັບເຂົ້າ[2], ພືດຜັກ[3], ແລະ ການງົວ[4] ຈະຖືກນຳມາຈັດຕັ້ງປະຕິບັດໃນໂຄງການຍ່ອຍດ້ານການສ້າງລາຍຮັບ (AC ແລະ AD) ທີ່ເຊື່ອມໂຍງກັບໂຄງການ AE ພາຍໃຕ້ໂປຣກຣາມ IIRD. ບັນດາໂຄງການທີ່ມີທ່າແຮງເຫຼົ່ານີ້ຈະໄດ້ຮັບການຄັດເລືອກໂດຍອີງໃສ່ສະພາບການທ້ອງຖິ່ນ ແລະ ຜົນຂອງການສຳຫຼວດພື້ນຖານເບື້ອງຕົ້ນຂອງພື້ນທີ່ໂຄງການ. ນອກຈາກນັ້ນ, ລັດຖະບານລາວ (ກະຊວງກະສິກຳ ແລະ ປ່າໄມ້: MAF) ສາມາດລົງທຶນງົບປະມານຂອງຕົນເອງເຂົ້າໃນລາຍການໂຄງການສ້າງລາຍຮັບ ຫຼື ສະເໜີໂຄງການເຫຼົ່ານີ້ຕໍ່ອົງການຜູ້ໃຫ້ທຶນອື່ນໆເພື່ອສະໜອງທຶນ. ພາຍໃຕ້ກອບໂປຣກຣາມ IIRD, ໂຄງການກິດຈະກຳສ້າງລາຍຮັບຈະໄດ້ຮັບການວາງແຜນ, ປະຕິບັດ, ປະເມີນຜົນ ແລະ ສືບຕໍ່, ຕໍ່ຍອດດ້ວຍໂຄງການໄລຍະຖັດໄປຢ່າງຕໍ່ເນື່ອງໃນກຸ່ມໂຄງການຍ່ອຍ AC ແລະ AD, ດັ່ງນັ້ນຈຶ່ງສາມາດຈັດຕັ້ງປະຕິບັດກິດຈະກຳຂອງໂຄງການທີ່ຈຳເປັນໃນໄລຍະຍາວເພື່ອໃຫ້ບັນລຸຜົນໄດ້ຮັບຕາມເປົ້າໝາຍໄດ້.
- ໂຄງການພັດທະນາຊຸມຊົນ/ບ້ານ: ໂຄງການດ້ານການພັດທະນາຊຸມຊົນ/ບ້ານ ແລະ ການປັບປຸງຊີວິດການເປັນຢູ່ **(CD)** ຈະໄດ້ຮັບການວາງແຜນ**,** ຈັດຕັ້ງປະຕິບັດ**,** ປະເມີນຜົນ ແລະ ສືບຕໍ່ໂຄງການຕໍ່ໄປໃນກຸ່ມໂຄງການຍ່ອຍ **CD,** ຕິດພັນກັບໂຄງການ **AE** ພາຍໃຕ້ກອບໂປຣກຣາມ **IIRD,** ເພື່ອໃຫ້ກິດຈະກຳຂອງໂຄງການທີ່ຈຳເປັນສາມາດປະຕິບັດໄດ້ໃນໄລຍະຍາວເພື່ອໃຫ້ບັນລຸຕາມເປົ້າຫມາຍທີ່ວາງໄວ້.

## 5.4. ແຜນຍຸດທະສາດ 4: ການສ້າງຂີດຄວາມສາມາດ ແລະ ຮູບແບບການຝຶກອົບຮົມ

ການເພີ່ມທະວີປະສິດທິພາບ ແລະ ທ່າແຮງໃນການຈັດຕັ້ງປະຕິບັດຂອງ LKRDTC ໃນຖານະເປັນສູນຝຶກອົບຮົມເຕັກນິກກະສິກຳ ແລະ ພັດທະນາຊົນນະບົດຈະໄດ້ຮັບການພິຈາລະນາ, ພ້ອມທັງການກຳນົດຍຸດທະສາດເພື່ອຊຸກຍູ້ການສຶກສາພາກປະຕິບັດຢູ່ທ້ອງຖິ່ນ ແລະ ໃນຂົງເຂດສຳລັບຊາວກະສິກອນໃນພື້ນຖານ. ນອກຈາກນີ້, ຍັງຕ້ອງໄດ້ພັດທະນາການຝຶກອົບຮົມວິຊາຊີບ ແລະ ທັກສະໃຫ້ແກ່ໄວໜຸ່ມ ແລະ ແມ່ຍິງໃນຊົນນະບົດ, ດ້ວຍຫຼັກສູດ ແລະ ສື່ການຝຶກອົບຮົມທີ່ມີຄຸນນະພາບ, ໂດຍສູນຝຶກອົບຮົມພາຍໃຕ້ການຊີ້ນຳຂອງກະຊວງກະສິກຳ ແລະ ປ່າໄມ້ (ກປ) ຫຼື ໜ່ວຍງານການສຶກສາທີ່ກ່ຽວຂ້ອງ.

➢ **ການດຳເນີນການທີ່ສຳຄັນ:**

- ການຂະຫຍາຍໂອກາດການຝຶກອົບຮົມວິຊາຊີບດ້ານຄວາມເປັນຜູ້ນຳ ແລະ ຜູ້ປະກອບການສຳລັບໄວໜຸ່ມ ແລະ ແມ່ຍິງຊົນນະບົດ: ລັດຖະບານ (MAF) ສະຫນອງການສຶກສາທີ່ກ່ຽວຂ້ອງໂດຍຜ່ານ LKRDTC, SATC, ແລະ ໜ່ວຍງານຝຶກອົບຮົມວິຊາຊີບ ຫຼື ທັກສະອື່ນໆເພື່ອໃຫ້ສາມາດນຳໃຊ້ແຮງງານໄວໜຸ່ມໃນເຂດຊົນນະບົດໄດ້ຢ່າງມີປະສິດທິພາບ ແລະ ສະໜັບສະໜູນການເລີ່ມຕົ້ນທຸລະກິດໂດຍການສະເໜີໂຄງການແຂ່ງຂັນສຳລັບການສ້າງຕັ້ງວິສາຫະກິດຈຸລະພາກ ຫຼື ຂະຫນາດນ້ອຍ. ສຳລັບແນວທາງດ້ານຈັດຕັ້ງປະຕິບັດໂຄງການນີ້, ໄດ້ກຳນົດອົງປະກອບດ້ານການສົ່ງເສີມກະສິກຳ (AE) ພາຍໃຕ້ໂປຣກຣາມ IIRD) ທີ່ໄດ້ຮັບທຶນສະໜັບສະໜູນຈາກ KOICA ພ້ອມເງິນສົມທົບຈາກກະຊວງກະສິກຳແລະປ່າໄມ້ MAF ສຳລັບການດຳເນີນງານ ແລະ ການຈັດການພື້ນຖານຂອງສູນຝຶກອົບຮົມຕ່າງໆ.

---

[2] ແຜນດຳເນີນງານດ້ານນະໂຍບາຍເພື່ອພັດທະນາອຸດສະຫະກຳການຄ້າເຂົ້າ (2026-2030)

[3] ແຜນດຳເນີນງານດ້ານນະໂຍບາຍເພື່ອພັດທະນາອຸດສະຫະກຳການຄ້າພືດຜັກ (2026-2030)

[4] ແຜນດຳເນີນງານດ້ານນະໂຍບາຍເພື່ອພັດທະນາອຸດສະຫະກຳການຄ້າງົວ (2026-2030)

### 5.5. ແຜນຍຸດທະສາດ 5: ການຮັບປະກັນ ແລະ ການບໍລິຫານ ການພັດທະນາຊົນນະບົດ

ມີການຖົກຖຽງກັນວ່າ ການຂະຫຍາຍລະບົບການບໍລິການທາງດ້ານການເງິນຢູ່ເຂດຊົນນະບົດ ແລະ ການອຳນວຍຄວາມສະດວກໃນການເຂົ້າເຖິງການບໍລິການທາງການເງິນແມ່ນມີຄວາມຈຳເປັນໃນການຈັດຫາທຶນໃຫ້ແກ່ຊາວກະສິກອນຂະ ໜາດນ້ອຍ ແລະ ຜູ້ຢູ່ອາໃສຢູ່ຊົນນະບົດ ແລະ ເພື່ອແກ້ໄຂຄວາມສ່ຽງຈາກການປ່ຽນແປງຂອງດິນຟ້າອາກາດ. ຢ່າງໃດກໍ່ຕາມ, ການເຂົ້າເຖິງສະຖາບັນການເງິນຂອງລັດ ແລະ ໂອກາດໃນການໄດ້ຮັບຜົນປະໂຫຍດຈາກການບໍລິການທາງດ້ານການເງິນຍັງຄົງບໍ່ໄດ້ຮັບການປັບປຸງ. ໃນສະພາບການດັ່ງກ່າວ, ມີຄວາມຈຳເປັນອັນຮີບດ່ວນທີ່ຈະຕ້ອງດຳເນີນງານຢ່າງຮີບດ່ວນ; ສະໜັບສະໜູນອົງການຈັດຕັ້ງຊຸມຊົນ ເຊັ່ນ: ກຸ່ມສິນເຊື່ອ ແລະ ສະຫະກອນສິນເຊື່ອບ້ານ (VCCs) ຢ່າງເປັນລະບົບ, ເຊິ່ງສາມາດສົ່ງເສີມກຸ່ມເງິນຝາກປະຢັດເພື່ອການເພິ່ງຕົນເອງ ແລະ ການຮ່ວມມື, ເປັນຕົ້ນແມ່ນກິດຈະກຳການເງິນຈຸລະພາກໃຫ້ແກ່ຊາວບ້ານ.

➢ **ການດຳເນີນການທີ່ສຳຄັນ:**

- **ຈັດຕັ້ງ ແລະ ຂະຫຍາຍການຜະລິດກະສິກຳເພື່ອເປັນສິນຄ້າ ແລະ ການມີສ່ວນຮ່ວມກັບການລົງທຶນໂດຍກົງຈາກຕ່າງປະເທດ FDI, ເຂດເສດຖະກິດພິເສດ SEZs, ແລະຕະຫຼາດ:** ເພື່ອສະໜັບສະໜູນການພັດທະນາກະສິກຳດ້ານການຄ້າ, ກະຊວງກະສິກຳ ແລະ ປ່າໄມ້ (ກປ) ຈຳເປັນຕ້ອງການສະໜອງການບໍລິການທາງດ້ານການເງິນໃຫ້ແກ່ກຸ່ມຊາວກະສິກອນ ແລະ ວິສາຫະກິດຂະໜາດນ້ອຍ ແລະ ກາງ (SMEs) ໃນເຂດຊົນນະບົດ ໂດຍຜ່ານໂຄງການພັດທະນາ ແລະ ພັດທະນາບ້ານ (CD), ເຊິ່ງເປັນໜຶ່ງໃນໂຄງການພາຍໃຕ້ໂປຣກຣາມ IIRD ທີ່ໄດ້ຮັບທຶນສະໜັບສະໜູນຈາກ KOICA. ຢ່າງໃດກໍ່ຕາມ, ການສະໜັບສະໜູນທາງດ້ານການເງິນ ເຊັ່ນ: ກອງທຶນພັດທະນາບ້ານ (VDFs) ແມ່ນໄດ້ສະໜອງໃນຂະໜາດນ້ອຍ ເພື່ອເປັນເຄື່ອງມືເບື້ອງຕົ້ນໃນການລະດົມທຶນພາຍໃນບ້ານທີ່ມາຈາກເງິນຝາກປະຢັດຂອງຕົນເອງ, ເພື່ອເຮັດໃຫ້ເຂົາເຈົ້າມີຄວາມເປັນເຈົ້າຂອງ ແລະ ມີສ່ວນຮ່ວມຢ່າງຕັ້ງໜ້າ. ກິດຈະກຳເຫຼົ່ານີ້ຍັງຊ່ວຍສ້າງຄວາມໄວ້ວາງໃຈ ແລະທຶນທາງສັງຄົມລະຫວ່າງສະມາຊິກຊຸມຊົນອີກດ້ວຍ.ກິດຈະກຳເຫຼົ່ານີ້ຈະອຳນວຍຄວາມສະດວກໃຫ້ເຂົາເຈົ້າສ້າງຄວາມໄວ້ວາງໃຈແລະເປັນທຶນທາງສັງຄົມລະຫວ່າງກັນແລະກັນໃນຊຸມຊົນ. ເພື່ອປ້ອງກັນຄວາມຜິດພາດທາງບັນຊີ ຫຼື ການຄຸ້ມຄອງບັນຊີ VDF ຫຼືສິນເຊື່ອຊຸມຊົນ, , MAF ຈຳເປັນຕ້ອງສ້າງການປົກປ້ອງເຊັ່ນ: ມາດຕະຖານ, ການຕິດຕາມໄລຍະສັ້ນ, ແລະ ການສຶກສາ-ການກວດສອບກ່ຽວກັບຄວາມໂປ່ງໃສທາງບັນຊີ. ໂຄງການສ້າງຂີດຄວາມສາມາດທີ່ສະໜັບສະໜູນໂດຍສິນເຊື່ອຊຸມຊົນເກົາຫຼີ Saemaul ຈະເປັນແຫຼ່ງຄວາມຮູ້ທີ່ດີໃຫ້ແກ່ທັກສະການຄຸ້ມຄອງ VDFs ໂດຍປະຊາຊົນບ້ານດັ່ງກ່າວ.
- ການສະໜັບສະໜູນການຄ້າຂອງສະຫະກອນຊາວກະສິກອນທ້ອງຖິ່ນ ແລະ ການພັດທະນາພື້ນຖານໂຄງລ່າງດ້ານການຜະລິດ ແລະ ການຂົນສົ່ງຜ່ານການຊ່ວຍເຫຼືອການຈາກສາກົນ-ODA: ເພື່ອຮັບປະກັນໃຫ້ສະຫະກອນຜູ້ຜະລິດສາມາດເຂົ້າເຖິງແຫຼ່ງທຶນທີ່ຈຳເປັນ, ລັດຖະບານລາວ (ກະຊວງກະສິກຳ ແລະ ປ່າໄມ້: MAF) ຈຳເປັນຕ້ອງການສະໜັບສະໜູນສະຫະກອນໃນການເຂົ້າເຖິງໂຄງການພັດທະນາຊົນນະບົດພາຍໃຕ້ ODA.

### 5.6. ແຜນຍຸດທະສາດ 6: ການຄຸ້ມຄອງປະສິດທິພາບ ແລະ ສະໜັບສະໜູນການພັດທະນາຊົນນະບົດ

ໃນການຈັດຕັ້ງປະຕິບັດໂຄງການພັດທະນາຊົນນະບົດ ໄລຍະ 2 ຂອງ KOICA ຢູ່ພາກເໜືອ/ພາກກາງ ແລະ ພາກໃຕ້, ລະບົບການປະສານງານແບບ Co-PM ໄດ້ຖືກສ້າງຕັ້ງຂຶ້ນເພື່ອໃຫ້ການບໍລິຫານຈັດການໂຄງການ ແລະ ການຕິດຕາມປະເມີນຜົນມີປະສິດທິພາບຫຼາຍຂຶ້ນ ໂຄງການໄລຍະທີ 2, ພະນັກງານລາວໄດ້ຖືກມອບໝາຍໃຫ້ເປັນຜູ້ຄຸ້ມຄອງຈັດການໂຄງການຮ່ວມກັນຂອງແຕ່ລະໂຄງການ ເພື່ອຖ່າຍທອດຄວາມຮູ້ຊ່ຽວຊານດ້ານການບໍລິຫານຈັດການໂຄງການພັດທະນາຊົນນະບົດ (SMU) ຂອງໜ່ວຍງານຜູ້ຈັດຕັ້ງປະຕິບັດໂຄງການຂອງ ສ.ເກົາຫຼີ ໄປຍັງກົມພັດທະນາຊົນນະບົດ . ນອກຈາກນັ້ນ, ເຈົ້າໜ້າທີ່ PAFO ແລະ DAFO ຍັງໄດ້ເຂົ້າຮ່ວມເປັນຜູ້ປະສານງານເພື່ອການບໍລິຫານຈັດການ ແລະ ຕິດຕາມຜົນຂອງໂຄງການອີກດ້ວຍ. ແນວໃດກໍ່ຕາມ, ເຫັນວ່າໃນໄລຍະການຈັດຕັ້ງປະຕິບັດໂຄງການ, ພາລະບົດບາດ ແລະ ຄວາມຮັບຜິດຊອບຂອງເຈົ້າໜ້າທີ່ຜູ້ປະສານງານຈາກສູນກາງ (DRD) ໄປຈົນເຖິງຂັ້ນທ້ອງຖິ່ນ (PAFO/DAFO) ຍັງມີຄວາມບໍ່ຈະແຈ້ງ, ທັງໃນໄລຍະຈັດຕັ້ງປະຕິບັດ ແລະ ການຕິດຕາມປະເມີນຜົນຕາມປົກກະຕິ; ເຊິ່ງບາງຄັ້ງເຮັດໃຫ້ການບໍລິຫານຈັດການໂຄງການບໍ່ມີປະສິດທິພາບ. ສະນັ້ນ, ຕ້ອງກຳນົດພາລະບົດບາດ ແລະ ໜ້າທີ່ຮັບຜິດຊອບຂອງເຈົ້າໜ້າທີ່ຜູ້ປະສານງານແຕ່ລະຂັ້ນໃຫ້ຊັດເຈນ, ສອດຄ່ອງກັບໂຄງປະກອບບໍລິຫານທີ່ເຊື່ອມຕໍ່ DRD, PAFO, DAFO ແລະ ບ້ານ. ນອກຈາກນັ້ນ, ຄວນໃຫ້ການສະໜັບສະໜູນເພື່ອຮັບປະກັນການດຳເນີນງານຂອງລະບົບການລາຍງານການບໍລິຫານຈັດການໂຄງການຂອງຜູ້ປະສານງານເຫຼົ່ານີ້ໃຫ້ດຳເນີນໄປຢ່າງເປັນປົກກະຕິ ແລະ ອຳນວຍຄວາມສະດວກໃຫ້ແກ່ການແລກປ່ຽນຂໍ້ມູນຂ່າວສານ ແລະ ບັນຫາຂອງໂຄງການຢ່າງທັນການ.

➢ **ການດຳເນີນການທີ່ສຳຄັນ:**

- ລະບົບການບໍລິຫານຈັດການ ແລະ ປະສານງານ Co-PM ສຳລັບໂປຣກຣາມ IIRD ປະຕິບັດຕາມຮູບແບບໂຄງການ SMU ຂອງ KOICA, ໂປຣກຣາມ IIRD ມີອົງປະກອບດ້ວຍ, AD, AC, CD, AE, ແລະ ອົງປະກອບດ້ານການບໍລິຫານຈັດການ ແລະ ການປະສານງານ Co-PM. ໂດຍ Co-PM ນີ້ເຮັດໜ້າທີເປັນພື້ນຖານສຳລັບການປະຕິບັດໂຄງການທັງຝ່າຍເກົາຫຼີ ແລະ ຝ່າຍກະຊວງກະສິກຳ ແລະ ປ່າໄມ້. ນອກຈາກນັ້ນ, ຄ່າໃຊ້ຈ່າຍໃນການດຳເນີນງານຂອງລະບົບ Co-PM ຍັງຈະຖືກຈັດສັນເຂົ້າໃນງົບປະມານໂຄງການສຳລັບອົງການປົກຄອງທີ່ຮັບຜິດຊອບ ທຸກລະດັບໄດ້ແກ່ MAF/DRD-PAFO-DAFO-ບ້ານ. ໂດຍຜ່ານລະບົບ Co-PM, ຂໍ້ມູນ ແລະ ຜົນຂອງການຕິດຕາມຜົນຢ່າງເປັນປົກກະຕິຈະຖືກລາຍງານຈາກຂັ້ນບ້ານ ແລະ ຂັ້ນເມືອງ ໄປໃຫ້ກະຊວງກະສິກຳ ແລະ ປ່າໄມ້ (ກປ) ຢ່າງວ່ອງໄວ ແລະ ແບ່ງປັນກັບອົງການຈັດຕັ້ງປະຕິບັດໂຄງການຂອງ ສ.ເກົາຫຼີ ແລະ ຫ້ອງການ KOICA ອີກດ້ວຍ.

## VI. ການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (IIRD) (2026-2030)

ພາຍໃຕ້ຂອບວິໄສທັດການພັດທະນາຊົນນະບົດ, ແຜນຍຸດທະສາດ 6 ດ້ານ ທີ່ໄດ້ສະເໜີໃນບົດກ່ອນໜ້ານີ້ ໄດ້ລວມເຂົ້າເປັນຮູບແບບການພັດທະນາຊົນນະບົດແບບໃໝ່ທີ່ເອີ້ນວ່າ: ໂປຣກຣາມການພັດທະນາຊົນນະບົດຫົວຄິດປະດິດສ້າງ ແລະ ເຊື່ອມໂຍງ (IIRD) ເຊິ່ງຖືກອອກແບບມາ
ເພື່ອໃຫ້ສາມາດຈັດຕັ້ງປະຕິບັດນະໂຍບາຍດ້ານການພັດທະນາຊົນນະບົດໄດ້ຢ່າງມີປະສິດທິຜົນ.

| | | |
|---|---|---|
| ເຫດຜົນ ແລະ ຄວາມຈຳເປັນ | ແຜນດຳເນີນງານເພື່ອການພັດທະນາຊົນນະບົດໄດ້ສະເໜີເພື່ອປະຕິບັດໂຄງການພັດທະນາຊົນນະບົດໃນໄລຍະ 2026-2030. ໂດຍໄລຍະຈັດຕັ້ງປະຕິບັດ 5 ປີນີ້ໄດ້ຖືກກຳນົດໃຫ້ສອດຄ່ອງກັບແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ 10 (2026-2030) ແລະ ສາມາດຂະຫຍາຍໄລຍະເວລາໄດ້ໂດຍລັດຖະບານລາວເພື່ອເຮັດໃຫ້ເປັນແຜນງານໄລຍະຍາວ. ຂອບແຜນງານນີ້ຍັງສອດຄ່ອງ ແລະ ເຊື່ອມໂຍງຢ່າງມີປະສິດທິພາບກັບນະໂຍບາຍສ້າງສາມສ້າງ ລວມເຖິງໂຄງການພັດທະນາຊົນນະບົດດ້ານນະວັດຕະກຳຂອງ KOICA, ເຊິ່ງອີງໃສ່ແນວທາງ Saemaul Undong (SMU) ຂອງ ສ.ເກົາຫຼີ. | |
| ຈຸດປະສົງ | ແຜນດຳເນີນງານນີ້ແມ່ນສຸມໃສ່ການພັດທະນາຊັບພະຍາກອນມະນຸດທີ່ມີສີມືທາງດ້ານເຕັກນິກເພື່ອຊ່ວຍໜູນບັນດາຂະແໜງອຸດສາຫະກຳຕົ້ນຕໍໂດຍອີງໃສ່ຊັບພະຍາກອນທຳມະຊາດ ແລະ ຊຸມຊົນຊົນນະບົດ; ເປັນການຍົກລະດັບຄວາມຢືດຢຸ່ນຂອງເສດຖະກິດແຫ່ງຊາດ ແລະ ຊີວິດການເປັນຢູ່ຂອງຊົນນະບົດ. ນອກນີ້ຍັງໄດ້ຈັດຕັ້ງປະຕິບັດແບບປະສົມປະສານ, ມີນະວັດຕະກຳ ແລະ ຄວາມຍືນຍົງດ້ານສິ່ງແວດລ້ອມ ເພື່ອຮັບມືກັບໄພພິບັດທີ່ກ່ຽວຂ້ອງກັບສະພາບດິນຟ້າອາກາດຢ່າງມີປະສິດທິຜົນ. | |
| ກອບບູລິມະສິດ | ແຜນຍຸດທະສາດ | |
| | 1. ການປັບປຸງນະໂຍບາຍ ແລະ ການຄຸ້ມຄອງວຽກງານການພັດທະນາຊົນນະບົດ | |
| | 2. ລະບົບ ແລະ ໜ້າທີ່ ການຈັດຕັ້ງປະຕິບັດຂອງ ໂປຣກຣາມພັດທະນາຊົນນະບົດ | |
| | 3. ຮູບແບບການຈັດຕັ້ງປະຕິບັດໂປຣກຣາມພັດທະນາຊົນນະບົດ | |
| | 4. ການສ້າງຂີດຄວາມສາມາດ ແລະ ວິທີການຝຶກອົບຮົມ | |
| | 5. ການຮັບປະກັນ ແລະ ການບໍລິການທາງດ້ານການເງິນເພື່ອ ການພັດທະນາຊົນນະບົດ | |
| | 6. ປະສິດທິພາບ ການບໍລິຫານຈັດການ ແລະ ການສະໜັບສະໜູນ ໂປຣກຣາມການພັດທະນາຊົນນະບົດ | |
| ໂປຣກຣາມພັດທະນາຊົນນະບົດແບບໃໝ່ | ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ **(IIRD)** (2026-2030) | 5 ອົງປະກອບ<br>25 ໂຄງການ |
| ຜົນປະໂຫຍດທາງດ້ານເສດຖະກິດ-ສັງຄົມ | ຄາດວ່າຈະໄດ້ຮັບຜົນປະໂຫຍດທັງໝົດ 17 ແຂວງ ແລະ 148 ເມືອງ ຈາກການຂະຫຍາຍການປະຕິບັດໂຄງການທີ່ດີທີ່ສຸດພາຍໃຕ້ກອບ **IIRD,** ເຊິ່ງສອດຄ່ອງກັບແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ 10 (2026-2030). | |

| ໂປຣກຣາມ IIRD: 5 ອົງປະກອບ – ຈັດຕັ້ງປະຕິບັດໃນໄລຍະ 5 ປີ ດ້ວຍງົບປະມານທັງໝົດປະມານ 24,250,000 ໂດລາສະຫະລັດ (ຄາດຄະເນ). | | | | | | |
|---|---|---|---|---|---|---|
| ລາຍລະອຽດຂອງ **25** ໂຄງການ ໃນ **5** ອົງປະກອບຂອງ **IIRD** | | ໄລຍະເວລາ | ຂະໜາດ/ ສະຖານທີ່ | ຜູ້ຮັບຜິດຊອບຫຼັກ | ຜູ້ສະໜັບສະໜູນ | ງົບປະມານທີ່ຕ້ອງການ (2026-2030) |
| **ອົງປະກອບທີ 1: ການພັດທະນາຊຸມຊົນ (CD) – ງົບປະມານທັງໝົດ: 6,180,000 ໂດລາສະຫະລັດ; ມີ 5 ໂຄງການ** | | | | | | |
| 1.1* | ໂຄງການສ້າງຕັ້ງຄະນະພັດທະນາບ້ານ (Village Development Committees /VDCs) | 5Years | 3 Pilot provinces (Village level) | DRD, PAFO, DAFO, Village authority | Provincial/ District governor | 30,000 |
| 1.2 | ໂຄງການກອງທຶນພັດທະນາບ້ານ (Village Development Funds /VDFs) | 5Years | 3 Pilot provinces (Village level) | DRD, PAFO, DAFO, Village authority | Provincial/ District governor | 270,000 |
| 1.3 | ໂຄງການປັບປຸງສະພາບແວດລ້ອມຊີວິດການເປັນຢູ່ຂອງບ້ານ: ການວາງແຜນ, ການຈັດຕັ້ງປະຕິບັດ ແລະ ການບໍລິຫານຈັດການພື້ນຖານໂຄງລ່າງໂດຍ VDCs (ເສັ້ນທາງໃນບ້ານ, ຊົນລະປະທານ ແລະ ນ້ຳເພື່ອການອຸປະໂພກແລະ ບໍລິໂພກ ສາລາບ້ານ, ຕະຫຼາດບ້ານ ແລະ ອື່ນໆ) * ໂດຍຢ່າງໜ້ອຍ 30% ຂອງຄ່າໃຊ້ຈ່າຍລວມຈາກປະຊາຊົນໃນໝູ່ບ້ານ | 5Years | 3 Pilot provinces (Village level) | DRD, PAFO, DAFO, Village authority | Provincial governor | 3,000,000 |
| 1.4 | ໂຄງການສ້າງໂຄງລ່າງພື້ນຖານການຂາຍຜະລິດຕະພັນກະສິກຳທີ່ນຳພາໂດຍລັດຖະບານ (ໂຄງການທົດລອງທີ່ກ່ຽວຂ້ອງກັບການພັດທະນາອຸດສາຫະກຳກາຄ້າພືດຜັກ: ແຜນດຳເນີນງານ 5) ພັດທະນາພື້ນຖານໂຄງລ່າງຕາມເຂດເສດຖະກິດພິເສດ/ກຸ່ມ ຫຼື ເທດສະບານ. | 5 Years | Provincial/Township level | DRD, PAFO | Provincial governor DoA NAFRI | 1,580,000 |
| 1.5 | ໂຄງການປັບປຸງສະຖານທີ່ອົບແຫ້ງ, ເກັບມ້ຽນ ແລະ ໂຮງສີ (ໂຄງການທົດລອງທີ່ຕິດພັນກັບການພັດທະນາອຸດສາຫະກຳການຄ້າເຂົ້າ, ແຜນດຳເນີນງານ 4) * ສ້າງຕັ້ງໃນຮູບແບບໂຄງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP). | 5 Years | Provincial/Township level | DAEC, DoA, PAFO, DAFO, LFN, SME Fund, Private sector | DPs, DoPC, DRD | 1,300,000 |
| **ອົງປະກອບທີ 2: ການສ້າງຂີດຄວາມສາມາດ ແລະ ການສົ່ງເສີມດ້ານກະສິກຳ (AE) – ງົບປະມານທັງໝົດ: 5,990,000 ໂດລາສະຫະລັດ (ຄາດຄະເນ); ມີ 10 ໂຄງການ** | | | | | | |
| 2.1* | ໂຄງການສ້າງຂີດຄວາມສາມາດ/ ການຝຶກອົບຮົມທີ່ຈັດຕັ້ງປະຕິບັດໃນ LKRDTC ແລະ SATC ສຳລັບພະນັກງານລັດ (ການຝຶກອົບຮົມຄູຝຶກ - ToT) | 2 Years | Nation wide | DRD, DAEC, LKRDTC, SATC | Provincial governor DoA NAFRI | 200,000 |

| | | | | | | |
|---|---|---|---|---|---|---|
| 2.2* | ໂຄງການສ້າງຂີດຄວາມສາມາດ/ ໂຄງການຝຶກອົບຮົມພະນັກງານລັດຖະບານ / ພະນັກງານສົ່ງເສີມກະສິກໍາ ກ່ຽວກັບການເປັນຜູ້ນໍາ ແລະ ການອໍານວຍຄວາມສະດວກສໍາລັບພະນັກງານ/ ຜູ້ຈັດຕັ້ງປະຕິບັດ / ຜູ້ປະສານງານດ້ານການພັດທະນາຊົນນະບົດ | 5 Years | Nation wide | DRD, DAEC, LKRDTC, SATC and PAFO | | 300,000 |
| 2.3 | ໂຄງການຝຶກອົບຮົມສໍາລັບຜູ້ນໍາ VDC (ລວມທັງຜູ້ນໍາຄະນະຄຸ້ມຄອງໄພພິບັດ) ໃນ LKRDTC, SATC, ຫຼືສູນຝຶກອົບຮົມລະດັບ ພະແນກກະສິກໍາ ແລະ ປ່າໄມ້ແຂວງ. | 5 Years | Pilot provinces | DRD, LKRDTC, SATC | Provincial governor | 500,000 |
| 2.4* | ໂຄງການຝຶກອົບຮົມດ້ານຜູ້ປະກອບການ / ທັກສະອາຊີບສໍາລັບໄວໜຸ່ມ ແລະ ແມ່ຍິງໃນຊົນນະບົດ (ລວມທັງການພັດທະນາຄວາມສາມາດດ້ານອຸດສາຫະກໍາໃນຂັ້ນ 6) | 5 Years | Pilot provinces | DAEC, DRD, PAFO | Provincial governor DoA NAFRI | 500,000 |
| 2.5 | ໂຄງການໂຮງຮຽນຊາວນາ, ທີ່ບໍລິຫານຈັດການໂດຍ ພະແນກກະສິກໍາ ແລະ ປ່າໄມ້ແຂວງ ແລະ ຫ້ອງການກະສິກໍາ ແລະປ່າໄມ້ເມືອງ | 5 Years | Pilot provinces | DAEC, PAFO, DAFO | NAFRI Provincial governor | 500,000 |
| 2.6 | ໂຄງການສ້າງຂີດຄວາມສາມາດແລະ ການຈັດຕັ້ງປະຕິບັດຂອງເຄືອຂ່າຍການຜະລິດເຂົ້າເພື່ອສົ່ງອອກ (RPNE)<br>(ໂຄງການທົດລອງກ່ຽວກັບແຜນດໍາເນີນງານພັດທະນາອຸດສາຫະກໍາການຄ້າເຂົ້າ: ແຜນດໍາເນີນງານ 2)<br>* ການພັດທະນາພື້ນທີ່ສະເພາະເພື່ອສົ່ງອອກເຂົ້າ. | 5 Years | Pilot province (Savanakhet, Champasak, or Khammouane | DAEC, DoA, MoIC, PAFO, DAFO, LFA, THPD | Vice minister, DoPC, Cabinet office, MAF, MoIC, LKRDTC | 430,000 |
| 2.7 | ໂຄງການສົ່ງເສີມການນໍາໃຊ້ການປະສົມພັນທຽມເພື່ອເພີ່ມການຜະລິດງົວຊີ້ນ ພາຍໃຕ້ໂຄງການຮ່ວມມືລະຫວ່າງພາກລັດ ແລະ ເອກະຊົນ (PPP) (ໂຄງການທົດລອງກ່ຽວກັບການພັດທະນາອຸດສາຫະກໍາການຄ້າລ້ຽງ, ໂຄງການທົດລອງທີ່ກ່ຽວຂ້ອງກັບແຜນດໍາເນີນງານ 1) | 5 Years | Vientiane, Oudomxay, Luang Namtha, Xiengkhouang | DLF, NAFRI, PAFO, DAFO, Village authority | | 1,830,000 |
| 2.8 | ໂຄງການການຜະລິດອາຫານງົວໂດຍນໍາໃຊ້ອັດຕາສ່ວນປະສົມ (TMR) (ແຜນດໍາເນີນງານການພັດທະນາອຸດສາຫະກໍາການຄ້າງົວ: ໂຄງການທົດລອງທີ່ກ່ຽວຂ້ອງກັບແຜນດໍາເນີນງານ 2) | 5 Years<br>5 ປີ | Huaphan, Oudomxay, Luang Namtha, Xiengkhouang | DLF, PAFO, DAFO | NAFRI, NOUL | 1,430,000 |
| 2.9 | ໂຄງການຄົ້ນຄວ້າ ແລະ ພັດທະນາແນວພັນພືດຜັກທີ່ເໝາະສົມກັບສະພາບເຮືອນຫົ່ມ (ໂຄງການທົດລອງທີ່ກ່ຽວຂ້ອງກັບການພັດທະນາອຸດສາຫະກໍາການຄ້າພືດຜັກ: ແຜນດໍາເນີງງານທີ 2) | 5 Years | Vientiane Capital, Vientiane, and Bolikhamxay | NAFRI, NUOL | DoA, DAEC, KOPIA, Seed private company | 300,000 |
| 2.10 | ໂຄງການຍົກລະດັບຫ້ອງການກະສິກໍາທີ່ມີຢູ່ ແລະ ເພີ່ມທະວີຄວາມອາດສາມາດໃນການບໍລິການສົ່ງເສີມກະສິກໍາ | 5 Years | Nationwide | MAF | Department of Personal | N/A |

| | | | | | | |
|---|---|---|---|---|---|---|
| | | | | | and organization | |
| **ອົງປກອບທີ 3: ການພັດທະນາກະສິກຳ (AD) – ງົບປະມານທັງໝົດ: 7,155,000 ໂດລາສະຫະລັດ (ຄາດຄະເນ); ມີ 4 ໂຄງການ** | | | | | | |
| 3.1* | ໂຄງການຂະຫຍາຍການເຮັດກະສິກຳແບບປະຢັດຕົ້ນທຶນ (ການພັດທະນາອຸດສາຫະກຳການຄ້າເຂົ້າ/ Rice PAP: ໂຄງການທົດລອງ 3 ທີ່ກ່ຽວຂ້ອງກັບແຜນດຳເນີນງານ) (ລວມທັງໂຄງການທົດລອງການໃຫ້ບໍລິການເຊົ່າເຄື່ອງຈັກກະສິກຳໃນຮູບແບບ PPP ໃນ 3 ເມືອງ) | 5 Years | Pilot provinces (Savannakhet, Champasak, and Khammouane) | DAEC, DoA, DAFO, LFN, Village authority | Cabinet office, DoPC of MAF, PAFO, Lao SME fund, etc. | 2,350,000 |
| 3.2 | ໂຄງການການສົ່ງເສີມການລວມກຸ່ມສະມາຄົມຊາວກະສິກອນກັບໂຮງສີເຂົ້າ ແລະ ເພີ່ມທະວີການຈັດການຄຸນນະພາບ ແລະ ການຈັດການຫຼັງການເກັບກ່ຽວ (ໂຄງການທົດລອງຕິດພັນກັບແຜນດຳເນີນງານພັດທະນາອຸດສາຫະກຳການຄ້າເຂົ້າ/ Rice PAP: ແຜນດຳເນີນງານ 4). | 5 Years | Pilot provinces | PAFO, DAFO, IPD | DAEC, DoA | 50,000 |
| 3.3* | ໂຄງການການສົ່ງເສີມພື້ນທີ່ຜະລິດພືດຜັກ: ເພີ່ມປະສິດທິພາບການຜະລິດໃນເຮືອນຮົ່ມໃນລະດູຝົນ (ໂຄງການທົດລອງຕິດພັນກັບແຜນດຳເນີນງານການພັດທະນາອຸດສາຫະກຳການຄ້າພືດຜັກ/ Horticulture PAP: ແຜນດຳເນີນງານ 1) *ການສະໜັບສະໜູນທາງດ້ານການເງິນໃຫ້ແກ່ຊາວກະສິກອນທີ່ສ້າງເຮືອນຮົ່ມປະມານ 50% ຂອງມູນຄ່າ. | 5 Years | Vientiane Capital, Vientiane and Bolikhamxay | DALaM, DAEC, PAFO, DAFO, NAFRI, NUOL, SPRI | Private sector, Ministry of Finance | 2,655,000 |
| 3.4* | ໂຄງການສິນເຊື່ອຈູງໃຈເພື່ອການຜະລິດງົວຊີ້ນ (ໂຄງການທົດລອງທີ່ກ່ຽວຂ້ອງກັບແຜນດຳເນີນງານການພັດທະນາອຸດສາຫະກຳການຄ້າງົວ Cattle PAP: ແຜນດຳເນີນງານ 3) | 5 Years | Huaphan, Oudomxay, Luang Namtha, Xiengkhouang | DLF, DAEC, PAFO, DAFO, APB | | 2,100,000 |
| **ອົງປະກອບທີ 4: ຊຸກຍູ້ສົ່ງເສີມສະຫະກອນກະສິກຳ (ໂຄງການ AC) - ງົບປະມານທັງໝົດ: 2,125,000 ໂດລາສະຫະລັດ; ມີ 2 ໂຄງການ** | | | | | | |
| 4.1* | ໂຄງການຊຸກຍູ້ສົ່ງເສີມສະຫະກອນຊາວກະສິກອນ (ໂຄງການທົດລອງກ່ຽວກັບແຜນການພັດທະນາອຸດສາຫະກຳການຄ້າເຂົ້າ: ແຜນດຳເນີນງານທີ 1) | 5 Years | Savannakhet, Champassak, and Khammouane | DAEC, DoA, PAFO, DAFO, Lao SME Fund pilot cooperatives | MAF Vice minister, DOPC, LKRDTC, NAFRI | 550,000 |
| 4.2* | ໂຄງການສ້າງຕັ້ງ ແລະ ການດຳເນີນງານຂອງສະຫະກອນຕາມຜະລິດຕະພັນ ແລະ ບ້ານ, ລວມທັງການສ້າງລະບົບການຂົນສົ່ງຮ່ວມກັນ (ໂຄງການທົດລອງຕິດພັນກັບແຜນດຳເນີນງານການພັດທະນາອຸດສາຫະກຳການຄ້າພືດຜັກ: ແຜນດຳເນີນງານ 3) | 5 Years | Vientiane Capital, Vientiane, and Bolikhamxay | DAEC | DoA, NAFRI, UNOL, | 1,575,000 |

| | | | | | | |
|---|---|---|---|---|---|---|
| | | | | | Ministry of Industry and Commerce, Ministry of Finance | |
| **ອົງປະກອບທີ 5: ການບໍລິຫານໂຄງການ ແລະ ປະສິດທິພາບຂອງໂຄງການ (PM) - ງົບປະມານທັງໝົດ: 2,800,000 ໂດລາສະຫະລັດ; ມີ 4 ໂຄງການ** | | | | | | |
| 5.1 | ໂຄງການສ້າງນະໂຍບາຍຊຸກຍູ້ ຫຼື ນະໂຍບາຍເພື່ອປົດລັອກຂໍ້ຈຳກັດ ແລະ ການສະໜັບສະໜູນສິ່ງຈຳເປັນສຳລັບການປະຕິບັດໂປຣກຣາມ / ໂຄງການພັດທະນາຊົນນະບົດ. | 5 Years | | DOPC, DRD, DAEC, DoA, DLF, DoLM, PAFO, PSO, SPRI | MAF Vice minister, Cabinet office, NAFRI | 150,000 |
| 5.2 | ໂຄງການການຕິດຕາມ ແລະ ການປະເມີນຜົນໂດຍໃຊ້ລະບົບການປະສານງານແບບມີສ່ວນຮ່ວມ Co-PM | 5 Years | | DRD, PAFO, DAFO, Donor agencies | MAF Vice minister, DOPC, SPRI, Provincial/ District governor, Donor agencies | 1,000,000 |
| 5.3 | ໂຄງການສ້າງຕັ້ງ ແລະ ການປະຕິບັດງານຂອງຄອງໂປຣກຣາມ / ໂຄງຮ່າງການຄຸ້ມຄອງ ແລະ ປະສານງານ ໂຄງການ | 5 Years | | MAF Vice minister, DOPC, DRD, DAEC, DoA, DLF, DoLM, PAFO, DAFO | Donor agencies, Private sector | 500,000 |
| 5.4 | ໂຄງການຄັງເງິນສຳຮອງສຸກເສີນ (ຢ່າງໜ້ອຍ 5% ຂອງງົບປະມານການຈັດຕັ້ງປະຕິບັດ) | 5 Years | | MAF, Donor agencies | | 1,150,000 |

**ໝາຍເຫດ:** ໂຄງການທີ່ມີໝາຍດາວ* ແມ່ນມີລາຍລະອຽດຂອງແຜນດຳເນີນງານຢູ່ພາກທີ XIII ຂອງບົດລາຍງານນີ້

## VII. ສະຫຼຸບ ແລະ ຄໍາແນະນໍາ

ບົດລາຍງານສະບັບນີ້ໄດ້ນໍາສະເໜີຜົນການວິເຄາະດ້ານຕ່າງໆຂອງການພັດທະນາຊົນນະບົດໃນລາວຢ່າງເປັນລະບົບ ແລະ ໄດ້ສະເໜີແນວທາງທີ່ສາມາດປະຕິບັດໄດ້ໃນໄລຍະ 2026-2030. ໂດຍບົດລາຍງານໄດ້ແນະນໍາແຜນດ້ານຍຸດທະສາດ 6 ແຜນ, ເຊິ່ງໄດ້ເອົາເຊື່ອມເຂົ້າກັບໂປຣກຣາມທີ່ເອີ້ນວ່າ: ໂປຣກຣາມການພັດທະນາຊົນນະບົດແບບປະດິດສ້າງ ແລະ ເຊື່ອມໂຍງ (IIRD Programme), ທີ່ອອກແບບມາເພື່ອການຈັດຕັ້ງປະຕິບັດທີ່ມີປະສິດທິພາບຕອບສະໜອງແນວທາງນະໂຍບາຍການພັດທະນາຊົນນະບົດ.

ພື້ນຖານຂອງແຜນດໍາເນີນງານເຫຼົ່ານີ້ແມ່ນໄດ້ມາຈາກກອບນະໂຍບາຍຫຼາຍດ້ານ, ລວມທັງນະໂຍບາຍຂອງລັດຖະບານລາວ (ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ຄັ້ງທີ IX ແລະ ຮ່າງແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ ສະບັບທີ X), ຍຸດທະສາດການພັດທະນາກະສິກໍາ ແລະ ປ່າໄມ້ (ADS) ຂອງກະຊວງກະສິກໍາ ແລະ ປ່າໄມ້ ແລະ (ຮ່າງ) ແຜນພັດທະນາ 5 ປີ ຄັ້ງທີ 10 ຂອງກະຊວງກະສິກໍາ ແລະ ປ່າໄມ້, ແລະ ການວິເຄາະ SWOT ກ່ຽວກັບການພັດທະນາຊົນນະບົດໃນລາວ, ຖອດຖອນບົດຮຽນຈາກໂຄງການ Saemaul Undong (SMU) ຂອງ ສ.ເກົາຫຼີ ແລະ ນະໂຍບາຍ ສາມສ້າງ ຂອງລັດຖະບານລາວ. ການວິເຄາະທີ່ສົມບູນແບບນີ້ເຮັດໃຫ້ສາມາດສ້າງຍຸດທະສາດທີ່ເໝາະສົມ ແລະ ການອອກແບບ ໂຄງການເປົ້າໝາຍສໍາລັບການພັດທະນາກະສິກໍາ ແລະ ຊົນນະບົດໄດ້ຢ່າງເໝາະສົມກັບສະພາບ ສປປ ລາວ.

ແທນທີ່ຈະກວມເອົາທຸກດ້ານຂອງການພັດທະນາຊົນນະບົດ ແລະ ກະສິກໍາ, ໂປຣກຣາມ IIRD ແມ່ນສຸມໃສ່ຢ່າງມີຍຸດທະສາດໄປທີ່ບັນຫາສໍາຄັນທີ່ມີຄວາມຮີບດ່ວນສູງ ແລະ ມີຜົນກະທົບຢ່າງກວ້າງຂວາງ. ອົງປະກອບຫຼັກທັງສີ່ອົງປະກອບ (ດ້ານວິຊາການ) ຖືກເຊື່ອມຕໍ່ກັນເພື່ອຮັບປະກັນວ່າຜົນໄດ້ຮັບແມ່ນການເສີມສ້າງເຊິ່ງກັນ ແລະ ກັນ ແລະ ມີຄວາມຍືນຍົງພາຍໃຕ້ກອບການຈັດຕັ້ງປະຕິບັດຂອງອົງປະກອບທີ 5 (ດ້ານບໍລິຫານຈັດການ) ຂອງ ໂປຣກຣາມ IIRD:

1) ການພັດທະນາຊຸມຊົນ (Community Development /CD): ສ້າງຄວາມເຂັ້ມແຂງໃຫ້ແກ່ປະຊາຊົນໂດຍຜ່ານວິທີການພັດທະນາທີ່ຊຸມຊົນເປັນຜູ້ຂັບເຄື່ອນ (community-led development /CDD) ເພື່ອປັບປຸງຊີວິດການເປັນຢູ່ ແລະ ສົ່ງເສີມການຊ່ວຍເຫລືອຕົນເອງ ແລະ ໂຄງການເງິນຝາກເງິນປະຢັດຂອງບ້ານ.

2) ການສ້າງຂີດຄວາມສາມາດ ແລະ ການສົ່ງເສີມກະສິກໍາ (Capacity Building and Agricultural Extension /AE): ຝຶກອົບຮົມພະນັກງານລັດ, ຜູ້ນໍາບ້ານ, ຊາວໜຸ່ມ ແລະ ແມ່ຍິງໃນຊົນນະບົດ, ແລະ ຊາວກະສິກອນໃນດ້ານທັກສະການນໍາພາ ແລະ ການພັດທະນາກະສິກໍາ/ຊົນນະບົດ.

3) ການພັດທະນາກະສິກໍາ (Agricultural Development/AD): ເພີ່ມທະວີການຜະລິດເຂົ້າ, ພືດສວນ (ພືດຜັກ) ແລະ ສັດລ້ຽງ (ງົວ), ພ້ອມທັງຊຸກຍູ້ກຸ່ມຊາວກະສິກອນດ້ານການຄ້າ ແລະ ການທົດລອງສະຫະກອນກະສິກໍາ.

4) ສະຫະກອນກະສິກໍາ (Agricultural Cooperative /AC): ສ້າງຕັ້ງສະຫະກອນ ແລະ ສ້າງຄວາມເຂັ້ມແຂງໃຫ້ຕ່ອງໂສ້ມູນຄ່າ ເພື່ອເພີ່ມລາຍຮັບ ແລະ ຊຸກຍູ້ການເຕີບໂຕທາງດ້ານກະສິກໍາ

5) ປະສິດທິພາບວຽກງານການຄຸ້ມຄອງໂຄງການ ແລະ (Project and Performance Management /PM): ອີງປະກອບທີ 5 ຂອງການດຳເນີນງານຫຼັກຂອງໂຄງການ/ໂຄງການເຮັດໜ້າທີ່ຊື່ອມໂຍງໂຄງການຕ່າງໆເພື່ອເສີມຂະຫຍາຍຜົນກະທົບຕໍ່ການພັດທະນາທີ່ສອດຄ່ອງ ແລະ ຍືນຍົງ.

ບົດລາຍງານສະບັບນີ້ໄດ້ນຳເອົາຫຼັກການ SMU ຂອງ ສ. ເກົາຫຼີ ມາປັບໃຊ້ໃຫ້ເໝາະສົມກັບສະພາບການຂອງລາວ ພ້ອມທັງສະເໜີແນວທາງການປັບປຸງມາດຕະການຄຸ້ມຄອງ ໂດຍຜ່ານການເພີ່ມທະວີການຮ່ວມມືທີ່ເຂັ້ມແຂງລະຫວ່າງລັດຖະບານລາວ ແລະ ປະຊາຊົນໃນບ້ານ, ຮັບປະກັນຄວາມເປັນເຈົ້າການ, ການມີສ່ວນຮ່ວມ ແລະ ເຄືອຂ່າຍການຮ່ວມມືກັບພາກສ່ວນຕ່າງໆ.

ເນື່ອງຈາກ (ຮ່າງ) ແຜນພັດທະນາກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ ຄັ້ງທີ X ຍັງຢູ່ໃນຂະບວນການປັບປຸງ, ຍັງມີຂໍ້ຈຳກັດບາງດ້ານໃນການກຳນົດງົບປະມານໂຄງການ ແລະ ແຫຼ່ງທຶນ. ເຖິງແມ່ນວ່າບົດລາຍງານນີ້ໄດ້ ລະບຸລາຍລະອຽດຍຸດທະສາດ ແລະ ແຜນດຳເນີນງານ (ເອກະສານຊ້ອນທ້າຍ) ກໍ່ຕາມ, ມັນຍັງຮຽກຮ້ອງໃຫ້ມີການພັດທະນາກອບໜ້າວຽກຢ່າງຄົບຖ້ວນທັງລະບົບຕື່ມ ເພື່ອການວາງແຜນ ແລະ ການຈັດຕັ້ງທີ່ເປັນລະບົບ ແລະ ການຈັດສັນງົບປະມານທີ່ສອດຄ່ອງກັບແຜນດຳເນີນງານທີ່ໄດ້ນຳສະເໜີເຫຼົ່ານີ້.

ທີມງານຜູ້ເຮັດການສຶກສາ ແລະ ຂຽນບົດລາຍງານນີ້ ໝັກວ່າ ຄຳແນະນຳດັ່ງກ່າວໃນບົດ ຖືກອອກແບບມາເພື່ອຕອບສະໜອງທັງລັດຖະບານລາວ ແລະ ອົງການ KOICA ໃນຖານະເປັນໜ່ວຍງານຜູ້ໃຫ້ທຶນຊ່ວຍເຫຼືອໂຄງການພັດທະນາຊົນນະບົດ. ການປະຕິບັດກອບແນວຄວາມຄິດໂປຣກຣາມ IIRD ຈຳເປັນຕ້ອງອາໃສຄວາມຕັດສິນໃຈສູງດ້ວຍຄວາມຮັບຜິດຊອບຈາກຜູ່ທີ່ມີສ່ວນກ່ຽວຂອງທຸກຝ່າຍໃນການປັບປຸງ ແລະ ປະຕິບັດຕາມຍຸດທະສາດ ແລະ ແຜນປະຕິບັດງານທີ່ໄດ້ນຳສະເໜີມານີ້ ຕາມຄວາມເໝາະສົມ.

## VIII. ແຜນດຳເນີນງານຂອງໂຄງການໃນອົງປະກອບພາຍໃຕ້ໂປຣກຣາມ IIRD

### 8.1 ແຜນດຳເນີນງານໂຄງການ ພັດທະນາຊຸມຊົນ-ອົງປະກອບທີ 1: CD

| | |
|---|---|
| ຫົວຂໍ້ໂຄງການ | ສ້າງຕັ້ງ ແລະ ດຳເນີນງານຂອງຄະນະພັດທະນາຂັ້ນບ້ານ (Village Development Committees/ VDCs) ເພື່ອການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (Community-driven Development /CD-VDC) |
| ແຜນດຳເນີນງານພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ແຜນດຳເນີນງານພັດທະນາຊົນນະບົດ-ອົງປະກອບທີ 1 CD- ໂຄງການ 1.1 |
| ຂະໜາດ/ຂົງເຂດບູລິມະສິດຕົ້ນຕໍ | ສາມແຂວງທົດລອງ (ຈັດຕັ້ງຢູ່ຂັ້ນບ້ານ) |
| ຂະແໜງການບຸລິມະສິດທີ່ສຳຄັນ (ຫຼາຍຂະແໜງການ) | □ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>☑ ການພັດທະນາຊັບພະຍາກອນມະນຸດ: VDCs<br>☑ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>□ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>☑ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>□ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກຳ<br>□ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>□ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>☑ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ (VDF), ທະນາຄານບ້ານ, ຫຼືສິນເຊື່ອຊຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>□ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>☑ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 30,000 (ສະເພາະໂຄງການ 1.1)<br>* 3 ລ້ານ USD ສຳລັບໂຄງການ CD-1.2 ແມ່ນແຍກຕ່າງຫາກ. |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈຳເປັນຂອງໂຄງການ | ອົງປະກອບເປັນຫຼັກທາງການ ແລະ ສຳຄັນສຳລັບການພັດທະນາບ້ານແມ່ນອົງການປົກຄອງບ້ານ (VA) ແລະ ຄະນະພັດທະນາບ້ານ (VDC). ອົງການປົກຄອງທີ່ຮັບຜິດຊອບວຽກງານບໍລິຫານ ແລະ ກິດຈະກຳຕ່າງໆຂອງບ້ານ ລວມເຖິງການເຜີຍແຜ່ ແລະ ປະຕິບັດນະໂຍບາຍຂອງລັດຖະບານ ແລະ ການລາຍງານຜົນຂອງໂຄງການຕ່າງໆທີ່ມີໃນບ້ນ. ອົງການປກຄອງບ້ານ (VA) ໄດ້ຖືກສ້າງຕັ້ງຂຶ້ນ ແລະ ຈັດຕັ້ງປະຕິບັດຢູ່ໃນທຸກບ້ານ. ຄຽງຄູ່ກັນນັ້ນ, ໝູ່ບ້ານສ່ວນໃຫຍ່ທີ່ບໍ່ໄດ້ຮັບການຄັດເລືອກຈາກອົງການສະໜັບສະໜູນພາຍນອກແມ່ນບໍ່ມີ VDC. ສະນັ້ນ, ເມື່ອ |

| | |
|---|---|
| | ບ້ານໃດໜຶ່ງລິເລີ່ມໂຄງການພັດທະນາຊຸມຊົນ (CD) ໃໝ່, ຈຶ່ງຈຳເປັນຕ້ອງສ້າງຕັ້ງ ແລະ ຈັດຕັ້ງປະຕິບັດອົງກອນສະເພາະຂຶ້ນສຳລັບການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການດັ່ງກ່າວ.<br>ອົງການຈັດຕັ້ງດັ່ງກ່າວສາມາດວາງແຜນ, ຈັດຕັ້ງປະຕິບັດ, ປະເມີນຜົນໂຄງການພັດທະນາບ້ານ, ນຳພາການມີສ່ວນຮ່ວມຂອງປະຊາຊົນ ແລະ ສາມາດກາຍເປັນອົງການຈັດຕັ້ງຕົ້ນຕໍຂອງກອງທຶນພັດທະນາບ້ານທີ່ຈຳເປັນສຳລັບການສົ່ງເສີມໂຄງການບ້ານ. ຄວາມສາມາດການພັດທະນາບ້ານ ແລະ ລະດັບການນຳພາຂອງສະມາຊິກ VDC ຈະເປັນພື້ນຖານດ້ານຊັບພະຍາກອນມະນຸດ ແລະ ວັດຖຸສຳລັບການພັດທະນາຊຸມຊົນທີ່ຂັບເຄື່ອນໂດຍປະຊາຊົນ.<br>ນອກຈາກນັ້ນ, ດ້ວຍການຊຸກຍູ້ປະຊາຊົນໃນໝູ່ບ້ານໃຫ້ມີສ່ວນຮ່ວມເຂົ້າໃນໂຄງການ ແລະ ກິດຈະກຳຕ່າງໆ, ການສະແດງຄວາມຮູ້ສຶກຂອງຊຸມຊົນ ແລະ ການເປັນເຈົ້າຕົນເອງຂອງບ້ານ, ການສ້າງ ແລະ ການບໍລິຫານກອງທຶນພັດທະນາບ້ານ (VDF) ຢ່າງມີປະສິດທິພາບ, ຈະເຮັດໃຫ້ເກີດ ຄວາມເປັນເອກະລາດຂອງປະຊາຊົນ ແລະ ການພັດທະນາບ້ານທີ່ຂັບເຂື່ອນໂດຍປະຊາຊົນ. |
| ຈຸດປະສົງ | ສ້າງຕັ້ງອົງການທີ່ເປັນທາງການທີ່ສາມາດສົ່ງເສີມໂຄງການພັດທະນາຊຸມຊົນຕ່າງໆໃນລະດັບບ້ານຢ່າງເປັນລະບົບ ແລະ ເສີມສ້າງທ່າແຮງໃນການພັດທະນາຕົນເອງຂອງສະມາຊິກ ເຊັ່ນ: ຄວາມຮູ້, ເຕັກໂນໂລຊີ, ການນຳພາຕິດພັນກັບການພັດທະນາຂອງທ້ອງຖິ່ນ, ເພື່ອສ້າງປະສິດທິຜົນ ແລະ ຄວາມຍືນຍົງຂອງການພັດທະນາບ້ານ/ທ້ອງຖິ່ນ. |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | **ຜົນກະທົບ:** ເສີມຂະຫຍາຍຄວາມຍືນຍົງຂອງໂຄງການພັດທະນາຢູ່ພື້ນຖານໂດຍການຂະຫຍາຍບ້ານຕົວແບບທີ່ລວມເອົາວິທີການພັດທະນາທີ່ຂັບເຄື່ອນໂດຍຊຸມຊົນ (CDD) ໃນລະດັບບ້ານ.<br>**ຜົນໄດ້ຮັບ**: ເພີ່ມທະວີການພັດທະນາບ້ານ ແລະ ຄວາມສາມາດດ້ານການເງິນເພື່ອພັດທະນາຊຸມຊົນ, ໃນນັ້ນມີການກໍ່ສ້າງພື້ນຖານໂຄງລ່າງ (ເສັ້ນທາງ, ນ້ຳເພື່ອກະສິກຳ ແລະ ອື່ນໆ) ແລະ ປັບປຸງຊີວິດການເປັນຢູ່. |
| ກິດຈະກຳ ແລະ ວິທີການທີ່ມີນະວັດຕະກຳ | **ຜົນໄດ້ຮັບທີ 1:** ສ້າງຕັ້ງຄະນະພັດທະນາບ້ານ (VDC) ໂດຍຄັດເລືອກສະມາຊິກຈາກຊາວບ້ານ.<br><br>**ກິດຈະກຳ 1.1:** ຈັດຕັ້ງກອງປະຊຸມບ້ານ ເພື່ອສ້າງຈິດສຳນຶກກ່ຽວກັບຄະນະພັດທະນາບ້ານ (VDC) ແລະ ການຄັດເລືອກຜູ້ນຳບ້ານເຂົ້າເປັນສະມາຊິກ VDC (ປີທີ 1-2 ຂອງໂຄງການ).<br><br>- ພະນັກງານ ພະແນກກະສິກຳ ແລະ ປ່າໄມ້ ແຂວງ ແລະ ພະນັກງານຫ້ອງການກະສິກຳ ແລະ ປ່າໄມ້ເມືອງ (ຜູ້ປະສານງານ) ໄດ້ລົງສະໜາມຢ້ຽມຢາມບ້ານທົດລອງ/ເຂດທີ່ຄັດເລືອກຈາກ (Project & Performance Management /PM) ເພື່ອຈັດກອງປະຊຸມຂັ້ນບ້ານ ແລະ ອະທິບາຍໃຫ້ປະຊາຊົນໃນບ້ານເຂົ້າໃຈວິທີການຈັດຕັ້ງ ແລະ ບໍລິຫານຄະນະພັດທະນາບ້ານ (VDCs) ສຳລັບການວາງແຜນ ແລະ ຈັດຕັ້ງປະຕິບັດໂຄງການພັດທະນາບ້ານທົດລອງຂອງຕົນເອງ.<br>- ອີງຕາມຂະບວນການຕັດສິນໃຈຂອງຊາວບ້ານ, ເຂົາເຈົ້າໄດ້ຄັດເລືອກເອົາຜູ້ນຳແຕ່ລະຄົນ/ສະມາຊິກບ້ານເຂົ້າຮ່ວມເປັນຄະນະພັດທະນາບ້ານ VDC (ເຊັ່ນ: ຄະນະກ□ມະການປັບປຸງສະພາບແວດລ້ອມທີ່ຢູ່ອາໃສ, ຄະນະກຳມະການກອງທຶນພັດທະນາບ້ານ (VDF) ແລະ ຄະນະກຳມະການຄຸ້ມຄອງໄພພິບັດເປັນຕົ້ນ).<br>- ສະມາຊິກ VDC ທີ່ຖືກຄັດເລືອກຈະຖືກເຊີນເຂົ້າຮ່ວມຊຸດຝຶກອົບຮົມໃນຫຼັກສູດຜູ້ນຳບ້ານຂອງ LKRDTC/SATC (ໂຄງການ AE; ອົງປະກອບໂຄງການທີ 2 RD PAP , ໂຄງການ 2.3). |

| | |
|---|---|
| | **ຜົນໄດ້ຮັບທີ 2**: ແຜນໂຄງການພັດທະນາຊຸມຊົນ/ໝູ່ບ້ານ ໂດຍຄະນະພັດທະນາບ້ານ VDCs (ການປັບປຸງສະພາບແວດລ້ອມທີ່ຢູ່ອາໃສ, ການຄຸ້ມຄອງໄພພິບັດທາງດິນຟ້າອາກາດ ແລະ ອື່ນໆ).<br><br>**ກິດຈະກໍາ 2.1.** ການຄັດເລືອກ ແລະ ວາງແຜນໂຄງການພັດທະນາບ້ານ ໂດຍຜ່ານກອງປະຊຸມຂັ້ນບ້ານ (ປີໂທີ 1-2 ຖງການ)<br><br>- ກອງປະຊຸມຂັ້ນບ້ານທີ່ຈັດໂດຍຄະນະພັດທະນາບ້ານ VDCs ເປັນເຄື່ອງມືສໍາຄັນໃນການກໍານົດລາຍການໂຄງການພັດທະນາບ້ານ ແລະ ການຄັດເລືອກເອົາໂຄງການທີ່ສໍາຄັນທີ່ເປັນບູລິມະສິດສູງເພື່ອຈັດຕັ້ງປະຕິບັດພາຍໃນກອງທຶນການພັດທະນາບ້ານ, ເຊິ່ງໄດ້ຮັບການສະໜັບສະໜູນຈາກລັດຖະບານ / ອົງການຈັດຕັ້ງຜູ້ໃຫ້ທຶນ (70%) ແລະ ຈາກປະຊາຊົນພາຍໃນບ້ານ (ກອງທຶນສົມທົບຢ່າງຕໍ່າ 30% ຂອງມູນຄ່າໃຊ້ຈ່າຍທັງໝົດ). ສະນັ້ນ, ຊາວບ້ານຕ້ອງຕົກລົງຮ່ວມກັນໃນການມີສ່ວນຮ່ວມໂດຍການສະໜອງແຮງງານ ແລະ ທີ່ດິນ/ສິ່ງອໍານວຍຄວາມສະດວກ (ໃນລັກສະນະການສະໜັບສະໜູນເປັນວັດຖຸ ຫຼື ການຊ່ວຍເຫຼືອດ້ານແຮງງານ) ຫຼື ກອງທຶນຂອງບ້ານເພື່ອໃຊ້ໃນການຈັດຕັ້ງປະຕິບັດໂຄງການພັດທະນາບ້ານ, ແລະ ຂໍ້ສະເໜີດັ່ງກ່າວຄວນຖືກບັນທຶກເປັນລາຍລັກອັກສອນຢ່າງເປັນທາງການ ແລະ ສົ່ງສະເໜີຫາອໍານາດການປົກຄອງທ້ອງຖິ່ນ (ຂັ້ນເມືອງ).<br><br>**ຜົນໄດ້ຮັບທີ 3:** ການບໍລິຫານຈັດການໂຄງການພັດທະນາບ້ານແບບມີສ່ວນຮ່ວມໂດຍຄະນະພັດທະນາບ້ານ VDCs<br><br>**ກິດຈະກໍາ 3.1.** ການມີສ່ວນຮ່ວມໃນການຈັດຕັ້ງປະຕິບັດໂຄງການພັດທະນາບ້ານ (ປີທີ 2-5 ຂອງໂຄງການ)<br><br>- ຄະນະພັດທະນາບ້ານ (VDC) ຂອງແຕ່ລະບ້ານມີພາລະບົດບາດ ແລະ ຄວາມຮັບຜິດຊອບໃນການສະເໜີໂຄງການພັດທະນາບ້ານ, ແລະ ເຂົ້າຮ່ວມການຈັດຕັ້ງປະຕິບັດໂຄງການ (ແບບມີສ່ວນຮ່ວມ) ເກັບບັນຊີ ແລະ ລາຍງານໃຫ້ບ້ານ ແລະ ອົງການປົກຄອງທ້ອງຖິ່ນ (ອົງການປົກຄອງບ້ານ ແລະ ຫ້ອງການກະສິກໍາ ແລະ ປ່າໄມ້ເມືອງ/ ນາຍບ້ານ ແລະ ອື່ນໆ). ເພື່ອຮັບປະກັນຄວາມໂປ່ງໃສໃນການດໍາເນີນງານ ແລະ ການລາຍງານ, ຄະນະພັດທະນາບ້ານ ຈະໄດ້ຈັດກອງປະຊຸມບ້ານເປັນປະຈໍາ.<br><br>- ເມື່ອອໍານາດການປົກຄອງທ້ອງຖິ່ນເຫັນດີ ແລະ ກະຊວງກະສິກໍາ ແລະ ປ່າໄມ້ /ກົມພັດທະນາຊົນນະບົດອະນຸມັດໃຫ້ກອງທຶນພັດທະນາບ້ານທີ່ຈັດໄວ້ພາຍໃຕ້ໂຄງການ CD (RD PAP Project ອົງປະກອບ 1, ໂຄງການ1.3), ຄະນະກໍາມະການພັດທະນາບ້ານ (VDCs) ຈະປະຕິບັດຕາມພາລະບົດບາດຂອງຕົນ ແລະ ລະດົມຊາວບ້ານເພື່ອເຂົ້າຮ່ວມການຈັດຕັ້ງປະຕິບັດໂຄງການຢ່າງມີສ່ວນຮ່ວມ. |
| ໂຄງການທົດລອງ/ພື້ນທີ່ໂຄງການ | ຈັດຕັ້ງປະຕິບັດຢູ່ບັນດາບ້ານເປົ້າໝາຍທີ່ຖືກຄັດເລືອກເປັນເຂດໂຄງການ (ເມືອງ/ແຂວງ) ເພື່ອໂຄງການການພັດທະນາຊຸມຊົນ (CD) . |

### 8.2 ແຜນດຳເນີນງານໂຄງການພັດທະນາຂີດຄວາມສາມາດຂອງ LKRDTC-ອົງປະກອບທີ 2: AE

| | |
|---|---|
| ຫົວຂໍ້ໂຄງການ | ໂຄງການສົ່ງເສີມຄວາມອາດສາມາດ/ການຝຶກອົບຮົມຂອງ LKRDTC ແລະ SATC ສຳລັບ ພະນັກງານພາກລັດ ແລະ ພະນັກງານສົ່ງເສີມກະສິກຳ |
| ແຜນດຳເນີນງານ ພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາ ຊົນນະບົດທີ່ກ່ຽວຂ້ອງ | ແຜນດຳເນີນງານພັດທະນາຊົນນະບົດ-ອົງປະກອບທີ 2 AE:<br>ໂຄງການ 2.1 ແລະ 2.2 |
| ຂະໜາດ/ຂົງເຂດບູລິມະ ສິດຕົ້ນຕໍ | ທົ່ວປະເທດ/ MAF-DAEC/DRD/LKRDTC/SATC |
| ຂະແໜງການບູລິມະ ສິດທີ່ສຳຄັນ (ຫຼາຍຂະແໜງການ) | ☑ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>□ ການພັດທະນາຊັບພະຍາກອນມະນຸດ: VDCs<br>□ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>□ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>□ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>☑ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກຳ<br>□ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>□ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>□ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ, ທະນາຄານບ້ານ, ຫຼືສິນເຊື່ອຊຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>☑ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>□ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນ ຄວາມຮູ້ |
| ຄາດຄະເນ ງົບປະມານ ໂຄງການທັງໝົດ (ໂດລາສະຫະລັດ) | 500,000 |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈຳເປັນ ຂອງໂຄງການ | ປັດຈຸບັນຄວາມສຳຄັນຂອງການສຶກສາ ແລະ ການຝຶກອົບຮົມ ແມ່ນຍອມຮັບຢ່າງກ້ວາງຂວາງທັງໃນ ລະດັບອົງກອນ ແລະ ລະດັບຊາດ. ການພັດທະນາຊັບພະຍາກອນມະນຸດ (HRD) ແລະ ການ ສຶກສາມັບເປັນເປົ້າໝາຍສຳຄັນດ້ານການພັດທະນາທີ່ຖືກກຳນົດໄວ້ ເປົ້າໝາຍການພັດທະນາແບບ ຍືນຍົງທີ 4 (SDG4) . ປັດໄຈຄວາມສຳເລັດຂອງໂຄງການ Saemaul Undong (SMU) |

| | |
|---|---|
| | ແມ່ນຢູ່ທີ່ການເສີມສ້າງການສຶກສາຮຽນຮູ້ຕະຫຼອດຊີວິດທາງດ້ານຈິດສໍານຶກ ແລະ ຄວາມເປັນຜູ້ນໍາ, ແລະ ການສຶກສາເພື່ອການເປັນຜູ້ນໍາ ແລະ ການປັບປ່ຽນຈິດສໍານຶກໃນການພັດທະນາຊົນນະບົດ ສາມາດເວົ້າໄດ້ວ່າເປັນເງື່ອນໄຂເບື້ອງຕົ້ນສໍາລັບການຫັນເປັນທັນສະໄໝຂອງພື້ນທີ່ຊົນນະບົດ. ດັ່ງນັ້ນ, KOICA ຈຶ່ງສະໜັບສະໜູນເພື່ອສ້າງຕັ້ງສູນຝຶກອົບຮົມການພັດທະນາຊົນນະບົດ ລາວ-ເກົາຫຼີ (LKRDTC) ໃຫ້ເປັນສະຖາບັນຫຼັກສໍາລັບການສຶກສາດ້ານຈິດສໍານຶກ ແລະ ພາວະການເປັນຜູ້ນໍາດ້ານການພັດທະນາຊົນນະບົດ.<br><br>ເພື່ອຕອບສະໜອງຄວາມຕ້ອງການດ້ານການພັດທະນາວິຊາຊີບແບບໃໝ່ຂອງພະນັກງານລັດຖະກອນ ໃນກະຊວງກະສິກໍາ ແລະ ສິ່ງແວດລ້ອມ ທີ່ໄດ້ລວມເຂົ້າກັນໃໝ່ນັ້ນ, ຈຶ່ງມີຄວາມຮຽກຮ້ອງຕ້ອງການທີ່ນັບມື້ນັບເພີ່ມຂຶ້ນຂອງສູນຝຶກອົບຮົມເພື່ອຫັນເປັນສະຖາບັນຝຶກອົບຮົມພະນັກງານລັດຖະກອນສະເພາະພາຍໃນກະຊວງກະສິກໍາ ແລະ ສິ່ງແວດລ້ອມ. ນອກຈາກນັ້ນ, ຫຼັກສູດຍັງຕ້ອງໄດ້ຮັບການພັດທະນາໃຫ້ກວມເອົາເປົ້າໝາຍການຝຶກອົບຮົມທີ່ຫຼາກຫຼາຍເຊັ່ນ: ຜູ້ນໍາຊຸມຊົນເພື່ອການພັດທະນາຊົນນະບົດ, ອົງການຈັດຕັ້ງຊາວກະສິກອນ, ຜູ້ນໍາຊາວໜຸ່ມ ເປັນຕົ້ນ, ລວມທັງສາຂາຫຼັກທີ່ກ່ຽວຂ້ອງກັບການພັດທະນາຊົນນະບົດເຊັ່ນ: ກະສິກໍາ / ການພັດທະນາຊົນນະບົດ, ສະຫະກອນ, ພະນັກງານສົ່ງເສີມກະສິກໍາ.<br><br>ເພື່ອໃຫ້ບັນລຸເປົ້າໝາຍດັ່ງກ່າວ, ຈຶ່ງຕ້ອງສ້າງລະບົບການສຶກສາທີ່ເຊື່ອມໂຍງກັບເປົ້າໝາຍການຝຶກອົບຮົມ ແລະ ຫຼັກສູດແຕ່ລະປະເພດ ແລະ ຂະຫຍາຍຊັບພະຍາກອນບຸກຄະລາກອນ ແລະ ສິ່ງອໍານວຍຄວາມສະດວກທາງການສຶກສາທີ່ສາມາດຍົກລະດັບເປັນມືອາຊີບ ດ້ານການສຶກສາ ແລະ ຄຸນນະພາບຂອງການບໍລິການທາງດ້ານ ແລະ ຄວນກໍານົດແລະຈັດຕັ້ງປະຕິບັດທິດທາງການພັດທະນາໃນໄລຍະກາງ-ໄລຍະຍາວຢ່າງເປັນຄວາມປະທໍາ. |
| ຈຸດປະສົງ | ເພື່ອເສີມສ້າງທັດສະນະຄະຕິ ແລະ ການພັດທະນາພາວະການເປັນຜູ້ນໍາຂອງພະນັກງານລັດ ໂດຍຜ່ານການສ້າງຄວາມເຂັ້ມແຂງໃຫ້ແກ່ບົດບາດ/ໜ້າທີ່ຂອງ LKRDTC ໃນຖານະເປັນສະຖາບັນສູນກາງການສຶກສາພາວະຜູ້ນໍາເພື່ອການພັດທະນາຊົນນະບົດ. |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | **ຜົນກະທົບ:** ສ້າງຫຼັກການ ແລະ ຮູບແບບການພັດທະນາຊົນນະບົດແບບລາວ, ໂດຍອີງໃສ່ການພັດທະນາທ່າແຮງພາວະຄວາມເປັນຜູ້ນໍາຂອງພະນັກງານລັດດ້ານພັດທະນາຊົນນະບົດ.<br><br>**ຜົນໄດ້ຮັບ:** ການພັດທະນາພະນັກງານລັດຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອພັດທະນາຊົນນະບົດ. |
| ກິດຈະກໍາ ແລະ ວິທີການແບບຫົວຄິດປະດິດສ້າງ | **ຜົນໄດ້ຮັບ 1. ແຜນພັດທະນາຂອງ LKRDTC ໃນຖານະເປັນສະຖາບັນສູນກາງດ້ານການສຶກສາພາວະຜູ້ນໍາເພື່ອການພັດທະນາຊົນນະບົດ**<br><br>**ກິດຈະກໍາ 1.1: ການວິເຄາະທ່າແຮງ ແລະ ບົດບາດໜ້າທີ່ຂອງ LKRDTC (ປີທໍາອິດຂອງໂຄງການ)**<br><br>- ການວິເຄາະສະຖານະການໃນປະຈຸບັນ ແລະ ພາລະບົດບາດໜ້າທີ່ຂອງ LKRDTC ໃນຖານະສະຖາບັນການສຶກສາກະສິກໍາໂດຍລວມ |

- ການວິເຄາະຄວາມອາດສາມາດຂອງໜ່ວຍງານໃນການຮັບຮອງພາລະບົດບາດ ແລະ ຄວາມຮັບຜິດຊອບໃໝ່ທີ່ຈຳເປັນຕໍ່ການເປັນສູນກາງໃນການສຶກສາພາວະຄວາມເປັນຜູ້ນໍາພາຂອງພະນັກງານລັດ ເພື່ອການພັດທະນາຊົນນະບົດ.

- ບົດລາຍງານຜົນການວິເຄາະຈະກວມເອົາແຜນການປັບປຸງຫຼັກສູດ ແລະ ສິ່ງອຳນວຍຄວາມສະດວກຂອງ LKRDTC ສໍາລັບການຝຶກອົບຮົມຄວາມເປັນຜູ້ນໍາ ເພື່ອການພັດທະນາຊົນນະບົດ.

**ຜົນໄດ້ຮັບທີ 2: ການປັບປຸງຫຼັກສູດ ແລະສິ່ງອໍານວຍຄວາມສະດວກຂອງ LKRDTC ສໍາລັບການສຶກສາຄວາມເປັນຜູ້ນໍາເພື່ອການພັດທະນາຊົນນະບົດ**

**ກິດຈະກໍາ 2.1: ການປັບປຸງຫຼັກສູດຂອງ LKRDTC ສໍາລັບການຝຶກອົບຮົມຄວາມເປັນຜູ້ນໍາ (ການຝຶກອົບຮົມຄູຝຶກ: ToT) (ປີ 1-2 ຂອງໂຄງການ)**

- ຄູສອນ/ວິທະຍາກອນປະຈໍາ, ເຊິ່ງເປັນພະນັກງານປະຈໍາຂອງ LKRDTC, ຈະໄດ້ຮັບການສົ່ງເສີມການພັດທະນາ ແລະ ການປະຕິບັດຂອງຫຼັກສູດຝຶກອົບົຮົມການເປັນຜູ້ນໍາໃໝ່. ຫຼັກສູດການເປັນຜູ້ນໍານີ້ແມ່ນຈະຖືກຈັດຝຶກອົບຮົມສໍາລັບພະນັກງານລັດໃນໜ່ວຍງານຂັ້ນສູນກາງ ແລະ ແຂວງ / ເມືອງ (PAFO, DAFO, ແລະອື່ນໆ) ເຊັ່ນດຽວກັນກັບຜູ້ນໍາບ້ານ (VDCs).

- ຫຼັກສູດການຝຶກອົບຮົມຄວາມເປັນຜູ້ນໍາ ແລະ ອຸປະກອນການສອນຈະຖືກພັດທະນາໂດຍຄູສອນ / ວິທະຍາກອນປະຈໍາ ແລະ ພະນັກງານຂອງ LKRDTC ຮ່ວມມືກັບສະຖາບັນຄົ້ນຄວ້ານະໂຍບາຍລະດັບປະເທດ (ເຊັ່ນ: SPRI, NAFRI, ແລະ ອື່ນໆ) ແລະ ອົງການ / ທີ່ປຶກສາສາກົນ, ສຸມໃສ່ການພັດທະນາຄວາມສາມາດດ້ານການເປັນຜູ້ນໍາໃນລະດັບນະໂຍບາຍ ແລະ ການບໍລິຫານໂຄງການໃນຂົງເຂດການພັດທະນາພາກພື້ນ / ຊົນນະບົດ, ການພັດທະນາກະສິກໍາ ແລະ ອຸດສາຫະກໍາ, ແລະການຮ່ວມມືສາກົນ. ສະນັ້ນ, ຈຶ່ງຈໍາເປັນຕ້ອງນໍາໃຊ້ປະສົບການ ແລະ ຫຼັກສູດການຝຶກອົບຮົມກ່ຽວກັບທັດສະນະຄະຕິ ແລະ ແນວຄິດການເປັນຜູ້ນໍາຂອງ SMU ຂອງ ສ.ເກົາຫຼີ ເປັນແບບຢ່າງ.

**ກິດຈະກໍາ 2.2 ການປັບປຸງສິ່ງອໍານວຍຄວາມສະດວກຂອງ LKRDTC (ປີ 2-3 ຂອງໂຄງການ)**

ອີງຕາມຜົນຂອງການວິເຄາະຂອງ LKRDTC, ຖ້າຈໍາເປັນ, ສິ່ງອໍານວຍຄວາມສະດວກຂອງ LKRDTC ຈະຖືກປັບປຸງ ແລະ ພັດທະນາໂດຍສະເພາະເພື່ອຮອງຮັບຈໍານວນຜູ້ເຂົ້າຮ່ວມຝຶກອົບຮົມ (ເຊັ່ນ: ຫ້ອງຮຽນ, ອາຄານທໍາພັກ, ເຮືອນຄົວ ແລະ ຫ້ອງຮັບປະທານອາຫານ, ແລະ ອື່ນໆ).

**ຜົນໄດ້ຮັບທີ 3: ການຈັດຕັ້ງປະຕິບັດໂຄງການຝຶກອົບຮົມພະນັກງານລັດຂັ້ນສູນກາງ ແລະ ພາກພື້ນ ເພື່ອການພັດທະນາຊົນນະບົດ**

**ກິດຈະກໍາ 3.1: ການຝຶກອົບຮົມ/ກອງປະຊຸມຜູ້ນໍາລະດັບນະໂຍບາຍ (ປີ 1-3 ຂອງໂຄງການ)**

| | |
|---|---|
| | - ຈັດກອງປະຊຸມວິຊາການ 1-2 ຄັ້ງຕໍ່ປີ ໂດຍມີພະນັກງານ-ລັດຖະກອນ ລະດັບນະໂຍບາຍເຂົ້າຮ່ວມ ແລະ ລວມແຖງຢູ່ພາຍໃຕ້ການຊີ້ນໍາຂອງທ່ານຮອງລັດຖະມົນຕີກະຊວງກະສິກໍາ ແລະ ປ່າໄມ້ ເພື່ອປັບປຸງນະໂຍບາຍ ຫຼື ການພັດທະນາໂຄງການດ້ານການພັດທະນາຊົນນະບົດ<br><br>- ພະນັກງານ-ລັດຖະກອນ ຂັ້ນການນໍາ ຈາກບັນດາກົມ ພາຍໃຕ້ກະຊວງກະສິກໍາ ແລະ ປ່າໄມ້ ແລະ ບັນດາກະຊວງທີ່ກ່ຽວຂ້ອງ ຈະໄດ້ຮັບເຊີນໃຫ້ເຂົ້າຮ່ວມເປັນຜູ້ຮັບຝຶກອົບຮົມ ແລະ ເຂົ້າຮ່ວມກິດຈະກໍາ. ໂດຍຜູ້ເຂົ້າຮ່ວມຈະດໍາເນີນການສົນທະນາເປັນກຸ່ມ ແລະ ນໍາສະເໜີຂໍ້ສະເໜີດ້ານນະໂຍບາຍເພື່ອຫຼຸດຜ່ອນຂໍ້ຈໍາກັດ ຫຼື ການສະໜອງສິ່ງຈູງໃຈ (ຕົວຢ່າງ: ໂຄງການກູ້ຢືມເງິນນະໂຍບາຍໃຫ້ສະຫະກອນກະສິກໍາ ຫຼື ການສະໜັບສະໜູນການເລີ່ມດໍາເນີນທຸລະກິດຂອງຊາວໜຸ່ມ/ແມ່ຍິງຢູ່ເຂດຊົນນະບົດເປັນຕົ້ນ).<br><br>**ກິດຈະກໍາ 3.2 ການຝຶກອົບຮົມການເປັນຜູ້ນໍາໃນລະດັບໂຄງການສໍາລັບພະນັກງານລັດ DRD/DAEC ແລະ PAFO/DAFO (ປີທີ 2 -~4 ຂອງໂຄງການ)**<br><br>- ການຝຶກອົບຮົມຄວາມເປັນຜູ້ນໍາປີລະ 2 ~ 3 ຄັ້ງສໍາລັບພະນັກງານ DRD/DAEC ແລະ PAFO/DAFO ໂດຍ LKRDTC: 30 ຄົນຕໍ່ຫຼັກສູດ, ສູງສຸດ 90 ຄົນ/ປີ.<br><br>- ການຝຶກອົບຮົມນີ້ ຈະຊ່ວຍເພີ່ມຂີດຄວາມສາມາດຂອງພະນັກງານລັດໃນການປະສານງານຮ່ວມ (Co-PM coordination) ແລະ ການບໍລິຫານຈັດການໂຄງການໃນລະດັບຈັດຕັ້ງປະຕິບັດ, ດັ່ງນັ້ນ, ຜູ້ປະສານງານ/Co-PM ຂອງ DRD/DAEC ຈໍາເປັນຕ້ອງມີສ່ວນຮ່ວມເປັນວິທະຍາກອນໃນຫຼັກສູດນີ້.<br><br>**ກິດຈະກໍາ 3.3. ການຝຶກອົບຮົມຄວາມເປັນຜູ້ນໍາລະດັບວິຊາການສໍາລັບພະນັກງານສົ່ງເສີມກະສິກໍາຂອງ PAFO/DAFO (ປີທີ 2-5 ໂຄງການ)**<br><br>- ພື້ນທີ່ສາທິດ ແລະ ສິ່ງອໍານວຍຄວາມສະດວກທາງດ້ານກະສິກໍາ ຈະຖືກນໍາໄປໃຊ້ໃນການຝຶກອົບຮົມຄວາມເປັນຜູ້ນໍາທາງດ້ານວິຊາການ ໃຫ້ແກ່ພະນັກງານສົ່ງເສີມກະສິກໍາ /ຜູ້ຊ່ຽວຊານສະເພາະດ້ານຂອງ PAFO ແລະ DAFO.<br><br>- ໃນແຕ່ລະປີ, ມີຫຼັກສູດຝຶກອົບຮົມການຈັດຕັ້ງປະຕິບັດທາງດ້ານກະສິກໍາ 4-6 ຫຼັກສູດແມ່ນດໍາເນີນໂດຍ LKRDTC ອາຈານ / ຜູ້ຊ່ຽວຊານ ແລະ ພະນັກງານ DAEC / NAFRI: 10 ~ 30 ຄົນ / ຫຼັກສູດ, ສູງສຸດ 180 ຄົນ / ປີ.<br><br>- ການຝຶກອົບຮົມລະດັບວິຊາການຍັງຈັດໃຫ້ມີ ດ້ານທັດສະນະຄະຕິ ແລະ ຄວາມເປັນຜູ້ນໍາໃຫ້ແກ່ກຸ່ມຊາວກະສິກອນ ຫຼື ໂຄງການພັດທະນາບ້ານດ້ອຍ. |
| ໂຄງການທົດລອງ/ພື້ນທີ່ | ທົ່ວປະເທດ; ພະນັກງານລະດັບສູງຂອງອົງການປົກຄອງສູນກາງ / ພາກພື້ນ, ພະນັກງານທີ່ກະຊວງກະສິກໍາ (ກປ), ພະນັກງານທີ PAFO / DAFO ແລະ ພະນັກງານເສີມກະສິກໍາ. |

## 8.3 ແຜນດຳເນີນງານໂຄງການພັດທະນາຫຼັກສູດຝຶກອົບຮົມສີມືແຮງງານ ແລະ ທັກສະສາລັບໄວໜຸ່ມ ແລະ ແມ່ຍິງຊົນນະບົດ-ອົງປະກອບທີ 2: AE

| | |
|---|---|
| ຫົວຂໍ້ໂຄງການ | ໂຄງການຝຶກອົບຮົມ ຜູ້ປະກອບການ ແລະ ສີມືແຮງງານສໍາລັບໄວໜຸ່ມ ແລະ ແມ່ຍິງຊົນນະບົດ |
| ແຜນດໍາເນີນງານພັດທະນາກະສິກໍາ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ແຜນດໍາເນີນງານພັດທະນາຊົນນະບົດ (RD PAP) - ອົງປະກອບ 2: AE- ໂຄງການ 2.4 |
| ຂະໜາດ/ຂົງເຂດບູລິມະສິດຕົ້ນຕໍ | ເຂດຊົນນະບົດ/ແຂວງ ຫຼື ຂັ້ນເມືອງ |
| ຂະແໜງການບຸລິມະສິດທີ່ສໍາຄັນ<br>(ຫຼາຍຂະແໜງການ) | ☑ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກໍາ<br>☐ ການພັດທະນາຊັບພະຍາກອນມະນຸດ: VDCs<br>☑ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>☑ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>☐ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>☐ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>☐ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກໍາ<br>☐ ພື້ນຖານໂຄງລ່າງ: ການພັດທະນາກະສິກໍາ/ອຸດສາຫະກໍາ/ຕະຫຼາດ<br>☐ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກໍາແບບປະສົມປະສານ<br>☐ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>☐ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ, ທະນາຄານບ້ານ, ຫຼືສິນເຊື່ອຊຸມຊົນ SMU<br>☐ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>☐ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກໍານິເວດວິທະຍາ, ການອະນຸລັກ<br>☐ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>☐ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>☐ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 500,000 |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈໍາເປັນຂອງໂຄງການ | ຂະແໜງກະສິກໍາ ແລະ ປ່າໄມ້ ທີ່ຈະກວມເອົາ 19.76% ຂອງ GDP ຂອງລາວ ໃນປີ 2023 ແມ່ນການສົ່ງອອກໄປຫາວຽດນາມ, ຈີນ ແລະ ໄທ ເປັນສ່ວນໃຫຍ່. ສະຖານະການດັ່ງກ່າວຮຽກຮ້ອງໃຫ້ມີການປັບປ່ຽນການຜະລິດພືດໃນຊົນນະບົດເພື່ອຕອບສະໜອງກັບຄວາມຕ້ອງການທີ່ມີການປ່ຽນແປງຂອງປະເທດເຫຼົ່ານີ້, ລວມທັງຄວາມຕ້ອງການຜະລິດຕະພັນກະສິກໍາທີ່ມີຄຸນນະພາບສູງ ແລະ ຊີ້ນທີ່ເພີ່ມຂຶ້ນໃນຕະຫຼາດຕົວເມືອງພາຍໃນປະເທດ. ແນວໃດກໍ່ຕາມ, ປະເທດລາວຍັງຂາດຄວາມສາມາດດ້ານເຕັກໂນໂລຊີໃນການຜະລິດ ແລະ ການແປຮູບ ເພື່ອຕອບສະໜອງຕໍ່ການປ່ຽນແປງເຫຼົ່ານີ້, ແລະ ຂາດໂຄງລ່າງທີ່ສໍາຄັນສໍາລັບການພັດທະນາຊົນນະບົດ, ເຊັ່ນ: ພື້ນຖານໂຄງລ່າງການແປຮູບ ແລະ ການຈໍາໜ່າຍສິນຄ້າທີ່ທັນສະໄໝທີ່ຂັບເຄື່ອນໂດຍອົງການຈັດຕັ້ງລະດັບທ້ອງຖິ່ນ ແລະ ກຸ່ມຊາວກະສິກອນ. |

| | |
|---|---|
| | ເມື່ອປຽບທຽບກັບປະເທດເພື່ອນບ້ານ, ສປປ ລາວ ເຫັນວ່າເປັນປະເທດທີ່ມີຄ່າຄອງຊີບຕໍ່າ; ແລະ ປະຊາກອນໃນເກນອາຍຸເຮັດວຽກ (15-64 ປີ) ຄາດວ່າຈະເພີ່ມຂຶ້ນຢ່າງຕໍ່ເນື່ອງຈາກ 64 ເປີເຊັນ ໃນປີ 2020 ເປັນ 69 ເປີເຊັນ ໃນປີ 2030 ເຊິ່ງສາມາດຮອງຮັບທຸລະກິດທີ່ໃຊ້ແຮງງານໄດ້. ເຖິງຢ່າງໃດກໍຕາມ, ການມີສ່ວນຮ່ວມຂອງຜູ້ປະກອບການ ແລະ ຂະແໜງການທີ່ກ່ຽວຂ້ອງໃນການພັດທະນາກຳລັງແຮງງານຍັງບໍ່ກວ້າງຂວາງ, ເຮັດໃຫ້ຜູ້ຮຽນຈົບການສຶກສາມີຄຸນນະພາບບໍ່ສູງ. ພ້ອມກັນນັ້ນ, ຍັງຂາດຕະຫຼາດແຮງງານເພື່ອຮອງຮັບນັກສຶກສາທີ່ຮຽນຈົບອາຊີວະສຶກສາ.ໃນເຂດຊົນນະບົດ, ການເຮັດໄຮ່ນາຂະໜາດນ້ອຍທີ່ເພິ່ງພາອາໃສນ້ຳຝົນຍັງຄົງເປັນວິທີການຫຼັກ ແລະ ອັດຕາການນຳໃຊ້ກົນຈັກທາງດ້ານກະສິກຳຍັງຢູ່ໃນລະດັບຕໍ່າ, ສິ່ງຜົນໃຫ້ຜົນຜະລິດຕໍ່າ ແລະ ຊີວິດການເປັນຢູ່ທຸກຍາກຢ່າງຕໍ່ເນື່ອງ. ສະນັ້ນ, ໄວໜຸ່ມນັບມື້ນັບບໍ່ມີຄວາມສົນໃຈໃນການໃຊ້ຊີວິດຊົນນະບົດ. ນອກຈາກນັ້ນ, ການຂາດໂອກາດໃນການສຶກສາດ້ານວິຊາຊີບເຮັດໃຫ້ມີຄວາມຫຍຸ້ງຍາກໃນການສ້າງວຽກເຮັດງານທຳທີ່ດີໃຫ້ແກ່ໄວໜຸ່ມໃນຕົວເມືອງເຊັ່ນດຽວກັນ.<br><br>ສະນັ້ນ, ຈິ່ງຈຳເປັນຕ້ອງຈັດໃຫ້ມີໂຄງການຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານໃຫ້ມີຄຸນນະພາບໃຫ້ແກ່ໄວໜຸ່ມ, ແມ່ຍິງ ແລະ ກຸ່ມດ້ອຍໂອກາດໃນຊົນນະບົດ ເພື່ອສ້າງວຽກເຮັດງານທຳ ແລະ ຮັບປະກັນຊີວິດການເປັນຢູ່ໃນເຂດຊົນນະບົດ ຜ່ານການສ້າງລາຍຮັບ ແລະ ພັດທະນາທຸລະກິດ. |
| ຈຸດປະສົງ | ພັດທະນາລະບົບການຝຶກອົບຮົມວິຊາຊີບ ແລະ ທັກສະໃຫ້ແກ່ໄວໜຸ່ມ, ແມ່ຍິງ ແລະ ກຸ່ມທີ່ດ້ອຍໂອກາດໃນຊົນນະບົດ ເພື່ອຍົກສູງຄວາມສາມາດດ້ານຜູ້ປະກອບການ, ຄວາມເປັນຜູ້ນຳ ແລະ ທັກສະດ້ານວິຊາການ, ພ້ອມທັງພັດທະນາທຸລະກິດອຸດສາຫະກຳຂັ້ນ 6 |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | **ຜົນໄດ້ຮັບ:** ການສ້າງລະບົບການຝຶກອົບຮົມວິຊາຊີບ ແລະ ພັດທະນາສີມືແຮງງານ -ສົ່ງເສີມໄວໜຸ່ມຊົນນະບົດໃຫ້ມີທັກສະການປະກອບການ ແລະ ຄວາມຊ່ຽວຊານດ້ານວິຊາການ, ການສ້າງຕັ້ງວິສາຫະກິດອິດສະລິຍະ ແລະ ຈຸລະພາກແບບຍືນຍົງ, ແລະ ເສີມສ້າງຄວາມເຂັ້ມແຂງທາງດ້ານເສດຖະກິດໃນຊົນນະບົດຜ່ານໂຄງການຝຶກອົບຮົມດ້ານນະວັດຕະກຳຕ່າງໆ. |
| ກິດຈະກຳ ແລະ ວິທີການທີ່ມີນະວັດຕະກຳ | **ຜົນໄດ້ຮັບທີ 1:** ການພັດທະນາຫຼັກສູດການຝຶກອົບຮົມ<br><br>**ກິດຈະກຳ 1.1.** ການກະກຽມສະຖານທີ່ຝຶກອົບຮົມ ແລະ ບຸກຄະລາກອນໃຫ້ສອດຄ່ອງກັບໂຄງການ ToT (ປີທີ 1-2 ຂອງໂຄງການ)<br><br>- ສະຖາບັນການຝຶກອົບຮົມເຊັ່ນ: LKRDTC, SATC, ສູນຝຶກອົບຮົມວິຊາຊີບ, ຫຼື ມະຫາວິທະຍາໄລ / ວິທະຍາໄລກະສິກຳແມ່ນຖືກກຳນົດເປັນອົງການຈັດຕັ້ງປະຕິບັດໂຄງການ ToT (Training of Trainers).<br><br>- ສະຖາບັນທີ່ຖືກມອບໝາຍໃຫ້ຈັດຕັ້ງຈະກະກຽມ ແລະ ດຳເນີນໂຄງການ ToT ສຳລັບພະນັກງານ/ ວິທະຍາກອນເພື່ອບໍລິຫານຈັດການ ແລະ ຈັດຕັ້ງປະຕິບັດໂຄງການຝຶກອົບຮົມຜູ້ປະກອບການ ແລະ ທັກສະຢ່າງສະໝ່ຳສະເໝີ ດັ່ງນັ້ນຜູ້ເຂົ້າຮ່ວມຫຼັກຂອງໂຄງການ ToT ຈະແມ່ນຜູ້ຈັດການ, ພະນັກງານ, ວິທະຍາກອນ ແລະ ຜູ້ຊ່ຽວຊານດ້ານເຕັກນິກຈາກ LKRDTC, SATC, DAEC/DRD, PAFO ເປັນຕົ້ນ. |

- ຈຳນວນຜູ້ເຂົ້າຮ່ວມທັງຫມົດ 15-20 ຈະໄດ້ຮັບການຝຶກອົບຮົມເປັນໄລຍະເວລາ 3 ຫາ 6 ເດືອນ ໃນໂຄງການ ToT. ໂຄງການ ToT ນີ້ຈະຖືກຈັດຕັ້ງປະຕິບັດໃນໄລຍະເບື້ອງຕົ້ນຂອງໂຄງການ ພັດທະນາຊົນນະບົດ (1-2 ປີ).

- ໃນໄລຍະການຝຶກອົບຮົມToT, ຜູ້ເຂົ້າຮ່ວມຈະໄດ້ພັດທະນາຄູ່ມືການຈັດຕັ້ງປະຕິບັດຫຼັກສູດ, ຫຼັກສູດ ແລະ ເນື້ອໃນການບັນຍາຍ, ການຝຶກອົບຮົມພາກປະຕິບັດດ້ານວິຊາການ, ແຜນການລົງປັ້ງມຢາມພາກສະໜາມ ແລະ ອື່ນໆ, ລວມທັງແຜນງົບປະມານດຳເນີນງານ, ໃຫ້ແກ່ໂຄງການຝຶກອົບຮົມຜູ້ປະກອບການ ແລະ ທັກສະຊາວໜຸ່ມ ແລະ ແມ່ຍິງຊົນນະບົດ.

**ກິດຈະກຳ 1.2** ການກະກຽມຄວາມພ້ອມຂອງສະຖານທີ່ຝຶກອົບຮົມ (ປີທີ 1-~2 ຂອງໂຄງການ)

- ໂດຍອ້າງອີງຕາມບົດຮຽນ/ຄູ່ມືຂອງຜູ້ເຂົ້າຮ່ວມຝຶກອົບຮົມ ToT, ສະຖາບັນທີ່ຈັດຝຶກອົບຮົມກະກຽມໂຄງການຝຶກອົບຮົມໃຫ້ແກ່ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ ປົກກະຕິ. ອຸປະກອນການຝຶກອົບຮົມ ແລະ ສິ່ງອຳນວຍຄວາມສະດວກສຳລັບການປະຕິບັດງານດ້ານວິຊາການຈະຖືກຈັດຊື້ກ່ອນທີ່ຈະດຳເນີນການຝຶກອົບຮົມເປັນປົກກະຕິ. ຜູ້ເຂົ້າຮ່ວມຝຶກ ToT ຄວນໄດ້ຮັບການຝຶກອົບຮົມກ່ຽວກັບການບໍລິຫານຈັດການສະຖານທີ່ ແລະ ທັກສະການປະຕິບັດການກ່ອນການຝຶກອົບຮົມຂອງເຂົາເຈົ້າ.

**ຜົນໄດ້ຮັບ 2. ການຈັດຕັ້ງປະຕິບັດຫຼັກສູດສະເພາະເພື່ອສົ່ງເສີມຜູ້ປະກອບການໄວໜຸ່ມ**
**ກິດຈະກຳ 2.1:** ການຈັດຕັ້ງປະຕິບັດທົດລອງໂຄງການຝຶກອົບຮົມ (ປີທີ 3 ຂອງໂຄງການ)

- ສະຖາບັນການຝຶກອົບຮົມ: LKRDTC, SATC, ມະຫາວິທະຍາໄລກະສິກຳ/ວິທະຍາໄລ
- ວິທະຍາກອນ: ການຝຶກປະຕິບັດສຳລັບການເລີ່ມຕົ້ນທຸລະກິດ / SME, ຜູ້ຊ່ຽວຊານດ້ານເຕັກໂນໂລຢີ / ທັກສະ, ແລະ ອື່ນໆ.
- ຄູຝຶກຈາກ DAEC/DRD/PAFO, ທີ່ໄດ້ຮັບການຢັ້ງຢືນໂດຍ ToT, ຈະມີສ່ວນຮ່ວມເປັນວິທະຍາກອນ, ເປັນຜູ້ອຳນວຍຄວາມສະດວກ, ແລະ ຜູ້ປະເມີນໂຄງການຝຶກອົບຮົມ.
- ໄລຍະເວລາການຝຶກອົບຮົມ: 2 ອາທິດຕໍ່ຫຼັກສູດ, ທັງໝົດ 3 ຫຼັກສູດ.
- ການປະຕິບັດຫຼັກສູດທົດລອງ: ຄັດເລືອກຜູ້ເຂົ້າຮ່ວມ 10-20 ຄົນຕໍ່ຫຼັກສູດ ຄັດເລືອກຈາກຊາວໜຸ່ມ, ແມ່ຍິງ, ແລະ ກຸ່ມທີ່ດ້ອຍໂອກາດ ໃນພື້ນທີ່ໂຄງການພັດທະນາຊຸມຊົນ (CD). ຜູ້ເຂົ້າຮ່ວມແມ່ນຈຳເປັນຕ້ອງມີຄວາມສາມາດຂັ້ນພື້ນຖານ, ໂດຍສະເພາະແມ່ນການຮູ້ໜັງສື, ຮູ້ໃຊ້ເຄື່ອງມືດິຈິຕອນ, ແລະ ທັກສະເລກຄະນິດສາດ.
- ເນື້ອໃນຕົ້ນຕໍ: ຜູ້ປະກອບການ, ແນວຄວາມຄິດດ້ານອຸດສາຫະກຳກະສິກຳ ຂັ້ນ 6 ແລະ ກໍລະນີສຶກສາພາກປະຕິບັດ, ການຝຶກອົບຮົມພາກສະໜາມ, ການຝຶກອົບຮົມທັກສະ, ການຝຶກອົບຮົມບັນຊີ, ແລະ ອື່ນໆ.
- ການແນະນຳກໍລະນີອຸດສາຫະກຳກະສິກຳຂັ້ນ 6 ຈາກປະເທດອື່ນໆ (ເກົາຫຼີໃຕ້, ຍີ່ປຸ່ນ, ຫຼືຈີນ), ເຊັ່ນປະຫວັດການພັດທະນາ, ການທົດລອງ ແລະ ຄວາມຜິດພາດ, ການບໍລິຫານຈັດການ / ທຸລະກິດໃນປະຈຸບັນ, ແລະອື່ນໆ.

| | |
|---|---|
| | - ພາຍຫຼັງການຈັດຕັ້ງປະຕິບັດແຕ່ລະຫຼັກສູດ, ວິທະຍາກອນ ແລະ ຜູ້ອຳນວຍຄວາມສະດວກ ຫຼັກສູດຈະໄດ້ມີການປະກອບຄຳຄິດຄຳເຫັນ ແລະ ປະເມີນຜົນການຝຶກອົບຮົມ ເພື່ອພັດທະນາ ເນື້ອໃນການຝຶກອົບຮົມໃຫ້ດີຂຶ້ນ, ສອດຄ່ອງກັບລະບົບການສຶກສາແບບໝູນວຽນລະດັບແຂວງ (PAFO) ແລະ ນະໂຍບາຍທີ່ກ່ຽວຂ້ອງຕ່າງໆ.<br><br>**ກິດຈະກຳ 2.2 ການສ້າງລະບົບການສຶກສາແບບໝູນວຽນຂັ້ນແຂວງ (ປີ 4-5 ຂອງ ໂຄງການ)**<br><br>- ການຍື່ນສະໝັກເຂົ້າຮ່ວມການຝຶກອົບຮົມຕາມລະດັບເມືອງ (DAFO → PAFO → SATC & LKRDTC)<br>- ການວາງແຜນຕາຕະລາງການຝຶກອົບຮົມຂັ້ນເມືອງ (SATC & LKRDTC)<br>- ການຈັດສົ່ງຜູ້ຊ່ຽວຊານໄປເຂດການຝຶກອົບຮົມ (PAFO, SATC & LKRDTC)<br>- ການຄັດເລືອກກຸ່ມຜູ້ເຂົ້າຮ່ວມ: 3-5 ຄົນ/ກຸ່ມ (1-2 ກຸ່ມ) ຕໍ່ເມືອງ, ມີຜູ້ເຂົ້າຮ່ວມທັງໝົດ 9-25 ຄົນ ( 3-10 ກຸ່ມ)/ແຂວງ. ເຂົ້າຮ່ວມໂຄງການຝຶກອົບຮົມປະຈຳປີ ລະດັບ PAFO. ຜູ້ເຂົ້າຮ່ວມທີ່ໄດ້ຮັບໃບຢັ້ງຢືນຈາກໂຄງການຝຶກອົບຮົມຜູ້ປະກອບການທົດລອງ (ການຝຶກອົບຮົມ LKRDTC) ແມ່ນບູລິມະສິດໃຫ້ເຂົ້າຮ່ວມຝຶກອົບຮົມໃນໂຄງການຝຶກອົບຮົມລະດັບ PAFO.<br>- ໃນແຕ່ລະປີ, ມີການຈັດໂຄງການຝຶກອົບຮົມ ແລະ ສະໜັບສະໜູນນະໂຍບາຍເງິນກູ້ເພື່ອເລີ່ມທຸລະກິດໃນສາມແຂວງ.<br>- ໄລຍະເວລາການຝຶກອົບຮົມ: 2 ມື້/ ພະແນກ<br>- ບັນດາກຸ່ມຜູ້ເຂົ້າຮ່ວມຈະພັດທະນາບົດສະເໜີໂຄງການທຸລະກິດຂະໜາດນ້ອຍ ຫຼື SMEs ສຳລັບການສະໜອງທຶນເລີ່ມຕົ້ນ (ເງິນກູ້ນະໂຍບາຍ). ແຕ່ລະກຸ່ມຈະຍື່ນຂໍ້ສະເໜີພຽງແຕ່ໜຶ່ງຂໍ້. ຂໍ້ສະເໜີນີ້ຕ້ອງອະທິບາຍແຜນທຸລະກິດທີ່ລະອຽດດ້ວຍການຮ່ວມມືຂອງສະມາຊິກທຸກຄົນໃນກຸ່ມ ແລະ ຕົວແທນໜຶ່ງຄົນ (ຫົວໜ້າກຸ່ມ).<br><br>**ກິດຈະກຳ 2.3 ໂຄງການຈູງໃຈດ້ວຍເງິນກູ້ນະໂຍບາຍ (ປີທີ 4-5 ຂອງໂຄງການ)**<br><br>- ຈາກບົດສະເໜີຂອງກຸ່ມຜູ້ເຂົ້າຮ່ວມຝຶກອົບຮົມໃນລະດັບທ້ອງຖິ່ນ, ໄດ້ຮັບຄັດເລືອກເອົາ 4-5 ບົດສະເໜີ (1~2 ບົດສະເໜີ/ແຂວງ).ເປັນຜູ້ຊະນະ<br><br>- ຄະນະກຳມະການຄັດເລືອກປະກອບດ້ວຍວິທະຍາກອນທີ່ໄດ້ຮັບການຮັບຮອງ ToT ແລະ ພະນັກງານ DAEC/DRD. ມາດຖານການຄັດເລືອກຕ້ອງສະທ້ອນເຖິງຍຸດທະສາດ/ແຜນພັດທະນາກະສິກຳ ແລະ ອຸດສາຫະກຳຂອງແຂວງ, ແຜນພັດທະນາເມືອງ, ແລະ ແຜນພັດທະນາບ້ານທີ່ສະເໜີໂດຍ VDCs ໃນໂຄງການພັດທະນາຊຸມຊົນ (CD).<br><br>- ແຮງຈູງໃຈ: ກຸ່ມຜູ້ເຂົ້າຮ່ວມການຝຶກອົບຮົມທີ່ໄດ້ຮັບຊະນະເລີດ (4-5 ກຸ່ມຕໍ່ປີ) ຈະໄດ້ຮັບການສະໜັບສະໜູນເງິນກູ້ນະໂຍບາຍ (ເງິນກູ້ດອກເບ້ຍຕ່ຳທີ່ມີໄລຍະເວລາຊຳລະຄືນ ຍາວ) ເປັນທຶນເລີ່ມຕົ້ນສຳລັບການສ້າງຕັ້ງທຸລະກິດ. |
| ໂຄງການທົດລອງ/ພື້ນທີ່ໂຄງການ | ຈັດຕັ້ງປະຕິບັດຄຽງຄູ່ກັບບັນດາແຂວງທີ່ມີການຈັດຕັ້ງປະຕິບັດໂຄງການພັດທະນາຊຸມຊົນ (CD) |

## 8.4 ແຜນດຳເນີນງານໂຄງການບໍລິການໃຫ້ເຊົ່າເຄື່ອງຈັກກະສິກຳ-ອີງປະກອບທີ 3: AD

| | |
|---|---|
| ຫົວຂໍ້ໂຄງການ | ການພັດທະນາກະສິກຳ: ໂຄງການບໍລິການໃຫ້ເຊົ່າເຄື່ອງຈັກກະສິກຳ |
| ແຜນດຳເນີນງານພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ໂຄງການບໍລິການໃຫ້ເຊົ່າເຄື່ອງຈັກກະສິກຳ; ອົງປະກອບທີ 3 AD - ໂຄງການ 3.1 ນີ້ແມ່ນນຳໃຊ້ລາຍລະອຽດຈາກແຜນດຳເນີນງານດ້ານນະໂຍບາຍພັດທະນາອຸດສະຫະກຳການຄ້າເຂົ້າ; ໂຄງການທົດລອງ 3.8 ~ 3.10 |
| ຂະໜາດ/ຂົງເຂດບູລິມະສິດຕົ້ນຕໍ | ໂຄງການທົດລອງເມືອງ/ແຂວງ (ຈຳປາສັກ, ຄຳມ່ວນ ແລະ ສະຫວັນນະເຂດ) ສຳລັບເຂົ້າ; ໜຶ່ງເມືອງໃນແຕ່ລະແຂວງທີ່ຜະລິດເຂົ້າຕົ້ນຕໍ (ທັງໝົດ 3 ແຫ່ງ) |
| ຂະແໜງການບູລິມະສິດທີ່ສຳຄັນ (ຫຼາຍຂະແໜງການ) | □ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>□ ການພັດທະນາຊັບພະຍາກອນມະນຸດ: VDCs<br>□ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>☑ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>□ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>☑ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກຳ<br>☑ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>☑ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>□ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ (VDF), ທະນາຄານບ້ານ, ຫຼືສິນເຊື່ອຂຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>☑ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>□ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 2,350,000 |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈຳເປັນຂອງໂຄງການ | ຂອດຕົ້ນທຶນການຜະລິດເຂົ້າແມ່ນກວມເອົາອັດຕາສ່ວນສູງສຸດໃນຕ່ອງໂສ້ມູນຄ່າເຂົ້າ, ກວມເອົາ 34% ຂອງລາຄາຂາຍຍ່ອຍສຸດທ້າຍ ແລະ 55% ຂອງມູນຄ່າຕົ້ນທຶນທັງໝົດໃນຕ່ອງໂສ້ມູນຄ່າ (ທະນາຄານໂລກ, 2018). ນີ້ແມ່ນປັດໄຈທີ່ເຮັດໃຫ້ຜົນກຳໄລຂອງຊາວກະສິກອນຕໍ່າ ແລະ ລາຄາເຂົ້າສູງ. ສຳລັບເຂົ້າໜຽວ, ຜົນກຳໄລສຸດທິຂອງຊາວກະສິກອນກວມພຽງ 12% ຂອງລາຍຮັບທັງໝົດຈາກການປູກເຂົ້າລະດູຝົນ ເຊິ່ງຕໍ່າກວ່າປະເທດເພື່ອນບ້ານເຊັ່ນ: ຈີນ, ໄທ, ຫວຽດນາມ ແລະ ອິນເດຍ. ຕົ້ນທຶນການຜະລິດເຂົ້າທີ່ສູງເຊິ່ງເກີດມາຈາກການເຮັດກະສິກຳທີ່ໃຊ້ແຮງງານຫຼາຍ, ລະດັບການໃຊ້ເຄື່ອງກົນຈັກຕໍ່າ, ພື້ນຖານໂຄງລ່າງບໍ່ພຽງພໍ, ແລະ ຜົນຜະລິດທີ່ຕໍ່າແມ່ນປັດໃຈຫຼັກທີ່ເຮັດໃຫ້ລາຄາເຂົ້າຂອງລາວສູງຂຶ້ນກ່ວາປະເທດອື່ນໆ. ສະນັ້ນ ການຫຼຸດຜ່ອນຕົ້ນທຶນການຜະລິດແມ່ນມີຄວາມສຳຄັນຕໍ່ການເສີມຂະຫຍາຍທ່າແຮງດ້ານການຄ້າ ແລະ ຄວາມສາມາດໃນການແຂ່ງຂັນຂອງອຸດສາຫະກຳເຂົ້າຂອງລາວ. |

| | |
|---|---|
| | ຕົ້ນທຶນການຜະລິດເຂົ້າແມ່ນແຕກຕ່າງກັນໄປຕາມແຕ່ລະຂົງເຂດຍ້ອນປັດໃຈຕ່າງໆເຊັ່ນ: ດິນ, ສະພາບອາກາດ, ສັດຕູພືດ, ແຮງງານ, ທຶນຮອນ ແລະ ເຕັກໂນໂລຊີ. ເພື່ອແກ້ໄຂບັນຫາດັ່ງກ່າວ, ແຜນດໍາເນີນງານແມ່ນແນໃສ່ພັດທະນາວິທີການເຮັດກະສິກໍາທີ່ມີປະສິດທິພາບ ແລະ ຄຸ້ມຄ່າຕົ້ນທຶນໃຫ້ເໝາະສົມກັບລັກສະນະສະເພາະຂອງແຕ່ລະເຂດ ແລະ ຜັນຂະຫຍາຍໄປທົ່ວປະເທດໂດຍຜ່ານການຝຶກອົບຮົມຊາວກະສິກອນຂັ້ນເມືອງ ແລະ ການເຜີຍແຜ່ຂໍ້ມູນຂ່າວສານຜ່ານລະບົບໂທລະສັບມືຖື. ລະດັບການໃຊ້ເຄື່ອງຈັກທີ່ຕໍ່າໂດຍສະເພາະແມ່ນການນໍາໃຊ້ລົດໄຖນາສີ່ລໍ້ (ພຽງແຕ່ 11% ໃນປີ 2020), ເປັນອີກສາເຫດສໍາຄັນອັນໜຶ່ງທີ່ເຮັດໃຫ້ຕົ້ນທຶນການຜະລິດສູງ. ການເພີ່ມທະວີການໃຊ້ເຄື່ອງກົນຈັກກະສິກໍາແມ່ນສິ່ງທ້າທາຍທີ່ສໍາຄັນຂອງໂຄງການ, ເຊິ່ງລວມທັງການຊຸກຍູ້ການສ້າງຕັ້ງອົງກອນການໃຊ້ເຄື່ອງຈັກຮ່ວມກັນ ແລະ ການຈັດຕັ້ງປະຕິບັດໂຄງການທົດລອງບໍລິການໃຫ້ເຊົ່າກົນຈັກກະສິກໍາ. |
| ຈຸດປະສົງ | ຂະຫຍາຍການເຮັດກະສິກໍາທີ່ປະຢັດຕົ້ນທຶນ ລວມທັງການສ້າງຕັ້ງອົງກອນໃຊ້ເຄື່ອງກົນຈັກກະສິກໍາຮ່ວມກັນ ຜ່ານການຈັດຕັ້ງປະຕິບັດໂຄງການໃຫ້ເຊົ່າເຄື່ອງຈັກກະສິກໍາໃນພື້ນທີ່ທົດລອງ 3 ແຂວງ |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | **ຜົນໄດ້ຮັບ:** ຈັດຕັ້ງໂຄງການບໍລິການໃຫ້ເຊົ່າເຄື່ອງຈັກກະສິກໍາຢູ່ຂັ້ນເມືອງ ແລະ ການຈັດຕັ້ງອົງກອນການນໍາໃຊ້ເຄື່ອງຈັກກະສິກໍາຮ່ວມກັນຢູ່ຂັ້ນບ້ານ ເພື່ອການຜະລິດເຂົ້າໃຫ້ມີປະສິດທິພາບ. |
| ກິດຈະກໍາ ແລະ ວິທີການທີ່ມີນະວັດຕະກໍາ | **ຜົນໄດ້ຮັບທີ 1:** ການເຜີຍແຜ່ວິທີການເຮັດກະສິກໍາແບບປະຢັດຕົ້ນທຶນທີ່ເໝາະສົມກັບແຕ່ລະຂົງເຂດ<br>**ກິດຈະກໍາ 1.1: ການກະກຽມສະຖານທີ່ຝຶກອົບຮົມ ແລະ ບຸກຄະລາກອນດ້ວຍໂຄງການ ToT (ປີທີ 1 ຂອງໂຄງການ )**<br>- ການສໍາຫຼວດຕົ້ນທຶນການຜະລິດເຂົ້າຕາມແຕ່ລະແຂວງ: ລາຍການຕົ້ນຕໍ - ຕົ້ນທຶນປັດໄຈການຜະລິດ, ຄ່າແຮງງານ, ຜົນຜະລິດ, ລາຄາຂາຍ, ລາຍຮັບ ແລະ ອື່ນໆ<br>- ການວິເຄາະ: ຜົນຜະລິດຕໍ່ຫນ່ວຍ, ປະສິດທິພາບດ້ານຕົ້ນທຶນ, ແລະ ຄວາມສາມາດໃນການສ້າງກໍາໄລ<br>- ພັດທະນາ ແລະ ເຜີຍແຜ່ວິທີການເຮັດກະສິກໍາແບບປະຢັດຕົ້ນທຶນສະເພາະໃນພາກພື້ນທີ່, ໂດຍຄໍານຶງເຖິງສະພາບກະສິກໍາໃນແຕ່ລະທ້ອງຖິ່ນ (ສະພາບອາກາດ, ປະເພດດິນ, ສະພາບລະບົບຊົນລະປະທານ, ພະຍາດ ແລະ ແມງໄມ້ສັດຕູພືດ, ຫຍ້າ, ແຮງງານ ແລະ ອັດຕາການໃຊ້ເຄື່ອງຈັກ)<br>- ເນື້ອໃນການຝຶກອົບຮົມ: ການຄັດເລືອກເມັດພັນ, ເວລາທີ່ເໝາະສົມໃນການປັກດໍາ ຫຼື ຫວ່ານກ້າ, ການໃຊ້ປຸ໋ຍທີ່ເໝາະສົມ, ວິທີການເຮັດຝຸ່ນທໍາມະຊາດແບບໝັກ , ການຈັດການນໍ້າຊົນລະປະທານຢ່າງມີປະສິດທິພາບ, ແລະ ໄລຍະເວລາເກັບກ່ຽວທີ່ເໝາະສົມ.<br><br>**ກິດຈະກໍາ 1.2 ແຮງຈູງໃຈສໍາລັບບ້ານມີຜົນການຈັດຕັ້ງປະຕິບັດດີເດັ່ນ (ປີທີ 2-5 ຂອງໂຄງການ)**<br>- ການແຂ່ງຂັນ ແລະ ລາງວັນ: ຈັດການແຂ່ງຂັນ 1 ຄັ້ງຕໍ່ປີ; ໃນແຕ່ລະແຂວງ, ເລືອກເອົາໜຶ່ງບ້ານ, ສະແດງໃຫ້ເຫັນເຖິງການປັບປຸງທີ່ສາມາດວັດແທກໄດ້ໃນດ້ານຜົນຜະລິດ ແລະ ປະສິດທິພາບດ້ານຕົ້ນທຶນ. ການສະໜອງແຮງຈູງໃຈທາງດ້ານການເງິນ ຫຼື ເງິນກູ້ດອກເບ້ຍຕໍ່າເພື່ອຊື້; ຕົວຢ່າງ: ເຄື່ອງຈັກທາງກະສິກໍາເພື່ອຊຸກຍູ້ໃຫ້ມີຜົນຜະລິດຫຼືກໍາໄລທີ່ສູງຂຶ້ນ.<br><br>**ຜົນໄດ້ຮັບທີ 2:** ຊຸກຍູ້ການສ້າງຕັ້ງອົງກອນການໃຊ້ກົນຈັກກະສິກໍາຮ່ວມກັນໃນຂັ້ນບ້ານ<br>**ກິດຈະກໍາ 2.1:** ສ້າງຕັ້ງຄະນະກໍາມະການເພື່ອສົ່ງເສີມການນໍາໃຊ້ກົນຈັກເຂົ້າໃນການປູກເຂົ້າ (ປີທີ 1 ຂອງໂຄງການ) |

| | |
|---|---|
| | - ການຕັດສິນໃຈກ່ຽວກັບບັນຫາສຳຄັນໃນການປັບປຸງການນຳໃຊ້ເຄື່ອງຈັກໃນການເຮັດກະສິກຳແມ່ນຜ່ານຄະນະກຳມະການສົ່ງເສີມການໃຊ້ເຄື່ອງຈັກໃນການເຮັດກະສິກຳລະດັບແຂວງ (Farming Mechanization Committee (FMC)<br>- ປະທານຄະນະກຳມະການ: ເຈົ້າແຂວງ<br>- ຫົວໜ້າພະແນກກະສິກຳ ແລະ ປ່າໄມ້, ເຈົ້າເມືອງ, ແລະ ຜູ້ຕາງຫນ້າຂອງສະຫະກອນຊາວກະສິກອນໃນເມືອງ/ ແຂວງທົດລອງ ຈະໄດ້ຮັບການເຊື້ອເຊີນໃຫ້ເປັນຄະນະກຳມະການ.<br><br>**ກິດຈະກຳ 2.2 ການຄັດເລືອກອົງກອນການໃຊ້ເຄື່ອງກົນຈັກຮ່ວມກັນລະດັບບ້ານ (ປີທີ 2-3 ຂອງໂຄງການ)**<br>- ຄັດເລືອກອົງກອນ 1 ແຫ່ງ (1 ໝູ່ບ້ານ) ຕໍ່ແຂວງຕໍ່ປີ ແຕ່ສຳລັບພື້ນທີ່ການຜະລິດຫຼັກຈະເລືອກ 2 ອົງກອນ (2 ໝູ່ບ້ານ) ຕໍ່ແຂວງ<br>- ຂັ້ນຕອນການຄັດເລືອກ: ສ້າງແຜນການຈັດຕັ້ງປະຕິບັດວຽກກຸ່ມຂອງອົງກອນໃນລະດັບບ້ານ ຍື່ນໃບສະໝັກຕໍ່ຄະນະກຳມະການ FMC ລະດັບແຂວງຜ່ານ DAFO/PAFO, ຄະນະກຳມະການພິຈາລະນາ ແລະ ການຄັດເລືອກອົງກອນຕາມມາດຕະຖານ/ ເກນທີ່ກຳນົດ ດຳເນີນການຄັດເລືອກ, ອະນຸມັດ, ເຮັດຂໍ້ຕົກລົງແລະ ສະໜັບສະໜູນດ້ານການເງິນແກ່ອົງກອນທີ່ໄດ້ຮັບການເລືອກ<br><br>- ສິ່ງຈູງໃຈແກ່ອົງກອນທີ່ໄດ້ຮັບການເລືອກ: ໄດ້ຮັບເງິນກູ້ດອກເບ້ຍຕໍ່າ ໄລຍະຍາວ ຫຼື ເງິນອຸດໜູນ (ເຊັ່ນ: 30%) ເມື່ອອົງກອນທີ່ໄດ້ຮັບເລືອກ ຊື້ເຄື່ອງກົນຈັກທາງການກະເສດ (ເຊັ່ນ: ລົດແທັກເຕີ້ ເຄື່ອງຈັກເກັບກ່ຽວ ແລະ ອື່ນໆ) ແລະ ສະມາຊິກກະສິກອນໃນອົງກອນສາມາດນຳໃຊ້ເຄື່ອງຈັກເຫຼົ່ານັ້ນໄດ້<br><br>**ກິດຈະກຳ 2.3 ການຈັດຕັ້ງປະຕິບັດໂຄງການການນຳໃຊ້ເຄື່ອງຈັກຮ່ວມກັນ (ປີທີ 3-5 ຂອງໂຄງການ)**<br>- ສ້າງລະບຽບຫຼັກການ ແລະ ສັນຍາຊັດເຈນລະຫວ່າງຜູ້ໃຫ້ເຊົ່າ ແລະ ຜູ້ເຊົ່າ ແລະ ປະຕິບັດຢ່າງເຄັ່ງຄັດ<br>- ຈັດການຝຶກອົບຮົມກ່ຽວກັບການນຳໃຊ້ ແລະ ການບຳລຸງຮັກສາເຄື່ອງໂດຍອົງກອນ.<br><br>- ຄ່າໃຊ້ຈ່າຍໃນການຈັດຕັ້ງປະຕິບັດ ແລະ ບຳລຸງຮັກສາເຄື່ອງຈັກແມ່ນຈະຕ້ອງຈ່າຍໂດຍສະມາຊິກຊາວກະສິກອນຂອງອົງກອນ. ສຳລັບຄ່າໃຊ້ຈ່າຍເຫຼົ່ານີ້, ອົງກອນສາມາດຝາກເງິນຈາກຄ່າບໍລິການໃຫ້ເຊົ່າເຂົ້າໄປໃນບັນຊີທະນາຄານທຸລະກິດຂອງຕົນ, ພາຍໃຕ້ການເບິ່ງແຍງຂອງ FMC ລະດັບແຂວງ.<br><br>**ຜົນໄດ້ຮັບທີ 3:** ໂຄງການທົດລອງສຳລັບການບໍລິການໃຫ້ເຊົ່າເຄື່ອງຈັກກະສິກຳ (ຖ້າເປັນໄປໄດ້, ປະຕິບັດບົນພື້ນຖານຮູບແບບ PPP ພາຍໃຕ້ການຊີ້ນຳຂອງ DoPC)<br><br>**ກິດຈະກຳ 3.1 ການຄັດເລືອກພື້ນທີ່ທົດລອງ (ປີທີ 1 ຂອງໂຄງການ)**<br><br>- ກົມແຜນການ ແລະ ການຮ່ວມມື, ກົມສົ່ງເສີມກະສິກຳ ແລະ ສະຫະກອນ/ກົມປູກຝັງ ແລະ FMCs ລະດັບແຂວງໃນພື້ນທີ່ໂຄງການທົດລອງປູກເຂົ້າໄດ້ເລືອກເອົາ 1 ເມືອງຕໍ່ແຂວງສຳລັບການຜະລິດເຂົ້າ, ລວມທັງໝົດ 3 ແຫ່ງ. |

| | |
|---|---|
| | **ກິດຈະກຳ 3.2 ການອອກແບບໂຄງການບໍລິການ ແລະ ການສະໜັບສະໜູນອຸປະກອນໃຫ້ DAFO ສໍາລັບການບໍລິການໃຫ້ເຊົ່າເຄື່ອງຈັກກະສິກໍາ (ປີທີ 1-2 ຂອງໂຄງການ).**<br><br>- ການກະກຽມນະໂຍບາຍ/ໂຄງການໃຫ້ເຊົ່າເຄື່ອງຈັກກະສິກໍາ ສໍາລັບການເຮັດນາ ແລະ ການຈັດຊື້ອຸປະກອນ (ດັ່ງເຄື່ອງຈັກການກະສິກໍາ, ສະຖານທີ່ຝຶກອົບຮົມ ແລະ ເຄື່ອງຈັກອື່ນໆ) ໃຫ້ກັບ DAFO ໃນເຂດເມືອງທີ່ໄດ້ຮັບການຄັດເລືອກ<br><br>**ກິດຈະກຳ 3.3 ການຈັດຕັ້ງປະຕິບັດໃຫ້ບໍລິການເຊົ່າເຄື່ອງຈັກກະສິກໍາສໍາລັບການຜະລິດເຂົ້າ (ປີທີ 3-5 ຂອງໂຄງການ)**<br>- ຜູ້ໃຫ້ເຊົ່າ: DAFO ຂອງເມືອງທົດລອງທີ່ເລືອກ<br>- ຜູ້ເຊົ່າ: ຊາວກະສິກອນ, ກຸ່ມຊາວກະສິກອນ, ແລະ ສະຫະກອນໃນເມືອງທີ່ເລືອກ<br>- ເຄື່ອງຈັກໃຫ້ເຊົ່າ: ເຄື່ອງຫວ່ານ/ປັກດໍາ, ລົດໄຖນາ, ເຄື່ອງເກັບກ່ຽວ, ເຄື່ອງຕັດຫຍ້າ, ເຄື່ອງອົບແຫ້ງ, ເຄື່ອງປັ່ນ, ແລະ ອື່ນໆ.<br><br>**ກິດຈະກຳ 3.4. ການຈັດຕັ້ງປະຕິບັດໂຄງການຝຶກອົບຮົມການນໍາໃຊ້ເຄື່ອງຈັກກະສິກໍາຢ່າງປອດໄພສໍາລັບຊາວກະສິກອນ (ປີທີ 3-5 ປີໂຄງການ)**<br>- ການຝຶກອົບຮົມປະຈໍາປີກ່ຽວກັບຄວາມປອດໄພໃນການນໍາໃຊ້ເຄື່ອງຈັກກະສິກໍາເພື່ອປ້ອງກັນອຸປະຕິເຫດ ແລະ ການເຮັດວຽກທີ່ຜິດປົກກະຕິຂອງເຄື່ອງຈັກ: ການຝຶກອົບຮົມກ່ຽວກັບການໃຊ້ງານແລະ ການບໍາລຸງຮັກສາເຄື່ອງຈັກກະສິກໍາຢູ່ ຫ້ອງການກະສິກໍາແລະປ່າໄມ້.<br>- ການຝຶກອົບຮົມແບບໝູນວຽນໂດຍພະນັກງານສົ່ງເສີມກະສິກໍາຂອງ DAFO: ໃນຊ່ວງລະດູການປູກ ແລະ ການເກັບກ່ຽວ, ພະນັກງານສົ່ງເສີມກະສິກໍາຈະລົງຢ້ຽມຢາມບ້ານ/ຟາມຂອງຊາວກະສິກອນ ເພື່ອຈັດການຝຶກອົບຮົມພາກສະໜາມ. |
| ໂຄງການທົດລອງ/ພື້ນທີ່ໂຄງການ | ທັງໝົດ 3 ເມືອງ (1 ເມືອງ/ແຂວງ) ແຂວງຈໍາປາສັກ, ຄໍາມ່ວນ ແລະ ສະຫວັນນະເຂດ. |

## 8.5 ແຜນດຳເນີນງານໂຄງການພັດທະນາພື້ນທີ່ການຜະລິດພືດຜັກ-ອີງປະກອບທີ 3: AD

| ຫົວຂໍ້ໂຄງການ | ການພັດທະນາກະສິກຳ: ການສົ່ງເສີມປະສິດທິພາບການຜະລິດຜັກໃນເຮືອນຮົ່ມໃນລະດູຝົນ |
|---|---|
| ແຜນດຳເນີນງານ ພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ແຜນດຳເນີນງານໂຄງການກະສິກຳດ້ານພື້ນທີ່ການຜະລິດພືດຜັກນີ້ແມ່ນ ນຳໃຊ້ ລາຍລະອຽດການເພີ່ມປະສິດທິພາບການຜະລິດໃນເຮືອນຮົ່ມໃນຊ່ວງລະດູຝົນ ແມ່ນຢູ່ໃນແຜນດຳເນີນງານ ການພັດທະນາການປູກພືດຜັກເພື່ອເປັນສິນຄ້າ; ໂຄງການທົດລອງ 1.1, 1.2, 1.4, 1.5, ແລະ 1.10 |
| ຂະໜາດ/ຂີງເຂດບູລິມະສິດຕົ້ນຕໍ | ທົດລອງພື້ນທີ່/ແຂວງ (ນະຄອນຫຼວງວຽງຈັນ, ວຽງຈັນ ແລະ ບໍລິຄຳໄຊ) ເປັນເຂດປູກຜັກ; 1 ພື້ນທີ່ຕໍ່ເຂດຜະລິດຜັກຕົ້ນຕໍ (ທັງໝົດ 3 ເຂດ) |
| ຂະແໜງການບູລິມະສິດທີ່ສຳຄັນ (ຫຼາຍຂະແໜງການ) | □ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>□ ການພັດທະນາຊັບພະຍາກອນມະນຸດ: VDCs<br>□ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>□ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>□ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>□ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກ□າ<br>☑ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>☑ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>□ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ (VDF), ທະນາຄານບ້ານ, ຫຼືສິນເຊື່ອຂຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>☑ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>☑ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 2,655,000 |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈຳເປັນຂອງໂຄງການ | ປັດໃຈຫຼາຍຢ່າງສົ່ງຜົນກະທົບຕໍ່ປະລິມານ ແລະ ຄຸນນະພາບຂອງການຜະລິດຜັກບົ່ວໃນລາວ. ປັດໃຈເຫຼົ່ານີ້ລວມເຖິງຜົນຜະລິດທີ່ຕໍ່າ ແລະ ຄຸນນະພາບທີ່ບໍ່ດີໃນລະດູຝົນ, ຕົ້ນທຶນການຜະລິດສູງເນື່ອງຈາກການນຳເຂົ້າວັດສະດຸເຮືອນຮົ່ມ, ແລະ ຄວາມຮູ້ທີ່ຈຳກັດກ່ຽວກັບເຕັກນິກການຜະລິດຫົວຜັກບົ່ວ. ສະພາບດິນຟ້າອາກາດທີ່ບໍ່ສະຖຽນລະພາບຍ້ອນການປ່ຽນແປງຂອງດິນຟ້າອາກາດເຮັດໃຫ້ບັນຫາເຫຼົ່ານີ້ຮ້າຍແຮງຂຶ້ນ, ເຮັດໃຫ້ຜົນຜະລິດຕໍ່າ, ກຳໄລຫຼຸດລົງ, ແລະ ມີການເພິ່ງພາອາໄສຜັກທີ່ນຳເຂົ້າຈາກຕ່າງປະເທດໃນລະດັບສູງ.<br>ເນື່ອງຈາກການບໍລິໂພກພືດຜັກ ແລະ ພືດສວນໄດ້ເພີ່ມຂຶ້ນຢ່າງໄວວາ, ພື້ນທີ່ກະສິກຳສຳລັບການປູກພືດໃນເຮືອນຮົ່ມຈຶ່ງໄດ້ຂະຫຍາຍຕົວ, ມີຫຼາຍຢູ່ເຂດນອກຕົວເມືອງໃຫຍ່ ການປູກພືດຜັກຫຼັກຫຼາກຫຼາຍຊະນິດເຊັ່ນ: ຫົວຜັກກາດຂາວ, ຜັກກະລໍ່າ, ສະຫຼັດ ແລະ ໝາກເຜັດ, ລວມທັງພືດເຂດຮ້ອນ |

| | |
|---|---|
| | ເຊັ່ນ: ໝາກກ້ອຍ ແລະ ໝາກນາວ, ລວມທັງຕົ້ນໄມ້ປະດັບ ແລະ ດອກໄມ້ຕ່າງໆ, ລ້ວນໄດ້ຮັບການປູກໂດຍຜ່ານການປູກໃນເຮືອນຮົ່ມ.<br><br>ໃນປະເທດລາວ, ມີຄວາມແຕກຕ່າງຂອງຜົນຜະລິດລະຫວ່າງລະດູຝົນ ແລະ ລະດູແລ້ງຢ່າງຊັດເຈນ ເຊິ່ງມັກຈະເຮັດໃຫ້ລາຄາເພີ່ມຂຶ້ນສູງໃນຊ່ວງລະດູຝົນ. ຜັກສະຫຼັດ, ຜັກກາດ, ຜັກຊີ, ໝາກກູຍຊາຍ ແລະ ຜັກກາດນາ ມັກຈະຖືກຊື້ຂາຍໃນລາຄາທີ່ສູງກວ່າລະດູແລ້ງ 3-4 ເທົ່າ ເນື່ອງຈາກປະລິມານການຜະລິດທີ່ຂາດແຄນ. ລັດຖະບານລາວ ໄດ້ແນະນຳໃຫ້ມີການປູກພືດຜັກໃນເຮືອນຮົ່ມ ເພື່ອຮັບປະກັນການສະໜອງພືດຜັກໃຫ້ໝັ້ນຄົງໃນລະດູຝົນ. ການປຸກເຮືອນຫົ່ມໂດຍທົ່ວໄປແລ້ວແມ່ນເຂົ້າໃຈວ່າມີທ່າແຮງສູງສຳລັບຂະແໜງກະສິກຳ; ແລະ ເຊື່ອວ່າສາມາດເພີ່ມລາຍຮັບແກ່ຊາວກະສິກອນຈາກສ່ວນຕ່າງຂອງລາຄາລະຫວ່າງລະດູແລ້ງ ແລະ ລະດູຝົນ. ພ້ອມທັງຍັງມີທ່າແຮງທີ່ຈະຂະຫຍາຍອອກໄປຢ່າງໄວວາ, ໂດຍສະເພາະໃນເຂດທີ່ມີປະສົບການຕົວຈິງໃນການເພີ່ມລາຍໄດ້. ຢ່າງໃດກໍຕາມ, ໃນຂະນະທີ່ກະສິກຳຈຳນວນຫຼາຍຫວັງວ່າຈະເພີ່ມລາຍຮັບຂອງເຂົາເຈົ້າຈາກການປູກໃນເຮືອນຮົ່ມ, ແຕ່ພາວະຄ່າໃຊ້ຈ່າຍສູງຂອງວັດສະດຸ, ເຊັ່ນ: ພາດສະຕິກປົກຫຸ້ມໂຮງເຮືອນ ແລະ ໂຄງເຫຼັກ, ຍັງເປັນສິ່ງທ້າທາຍທີ່ສຳຄັນ. ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງໄດ້ຮັບການສະໜູບສະໜູນຈາກພາກລັດຖະບານເພື່ອແກ້ໄຂບັນຫານີ້. |
| ຈຸດປະສົງ | ສະໜັບສະໜູນວັດສະດຸທີ່ມີລາຄາແພງ ແລະ ເງິນລົງທຶນສູງໃຫ້ແກ່ຊາວກະສິກອນຜູ້ປູກຜັກຂະໜາດນ້ອຍ |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | ຜົນໄດ້ຮັບ: ຊາວກະສິກອນຜູ້ປູກຜັກເຮືອນຮົ່ມທັງໝົດ 1,700 ຄົນ ໄດ້ຮັບຜົນປະໂຫຍດຈາກໂຄງການເງິນອຸດໜູນຂອງລັດຖະບານ (ສະໜັບສະໜູນ 50% ຂອງຄ່າໃຊ້ຈ່າຍໃນການກໍ່ສ້າງເຮືອນຮົ່ມ) ໃນພື້ນທີ່ປູກຜັກ. |
| ກິດຈະກຳ ແລະ ວິທີການທີ່ມີນະວັດຕະກຳ | **ຜົນໄດ້ຮັບທີ 1: ຈັດເຂດປູກພືດຜັກ ແລະ ການຈັດປະເພດການນຳໃຊ້ທີ່ດິນເພື່ອການຜະລິດພືດຜັກ**<br>**ກິດຈະກຳ 1.1: ການກຳນົດເຂດພື້ນທີ່ປູກຜັກ ແລະ ການຄັດເລືອກພື້ນທີ່ໂຄງການທົດລອງຕາມເຂດການຜະລິດພືດຜັກ (ປີທີ 1 ຂອງໂຄງການ)**<br><br>- ອົງກອນຄົ້ນຄ້ວາ: NAFRI, NUOL, ແລະ -DoA<br>- ການກຳນົດພື້ນທີ່ປູກຜັກໃນລະດັບຊຸມຊົນ, ເມືອງ, ແລະ ແຂວງ<br>- ການປະເມີນ ແລະ ວິເຄາະຄວາມເໝາະສົມຂອງດິນ ແລະ ພື້ນທີ່ເພື່ອໃຫ້ໄດ້ຜົນຕອບແທນຈາກການຜະລິດ<br>- ການພັດທະນາ ແລະ ສະໜັບສະໜູນຜູ້ໃຫ້ບໍລິການດ້ານວັດສະດຸກະສິກຳໃນເຂດພື້ນທີ່ປູກຜັກເພື່ອອຳນວຍຄວາມສະດວກໃຫ້ແກ່ຜູ້ຜະລິດ<br><br>**ຜົນໄດ້ຮັບທີ 2:** ເຄື່ອງມືດ້ານນະໂຍບາຍຊຸກຍູ້ເພື່ອເພີ່ມການຜະລິດພືດຜັກໃນເຮືອນຮົ່ມ<br>**ກິດຈະກຳ 2.1: ການພັດທະນາ ແລະ ການອອກກົດໝາຍໂຄງການສິນເຊື່ອດ້ານນະໂຍບາຍແບບຈູງໃຈ ແລະ ນະໂຍບາຍພາສີຕ່ຳ (ປີ 1-2 ຂອງໂຄງການ)**<br><br>- ອົງກອນພັດທະນານະໂຍບາຍ: ກົມແຜນການ ແລະການຮ່ວມມື (MAF-DoPC) ແລະ (SPRI) |

| | |
|---|---|
| | - ອີງກອນເຫຼົ່ານີ້ຈະວິເຄາະກຸ່ມເປົ້າໝາຍ, ຂອບເຂດ, ຂັ້ນຕອນ, ແລະ ແນວທາງປະຕິບັດລາຍລະອຽດຂອງໂຄງການນະໂຍບາຍແຮງຈູງໃຈ.<br>- ກອງທຶນຊ່ວຍເຫຼືອຈະໄດ້ຮັບການສ້າງຕັ້ງຂຶ້ນໂດຍນໍາໃຊ້ງົບປະມານຂອງລັດຖະບານ ຫຼື ຊັບພະຍາກອນຈາກໂຄງການ ODA, ໂດຍການບໍລິຫານຈັດການແລະຈັດຕັ້ງປະຕິບັດຢູ່ພາຍໃຕ້ການຊີ້ນໍາຂອງທະນາຄານສົ່ງເສີມການກະສິກໍາ (APB), ໃນຂະນະທີ່ການຈັດຕັ້ງປະຕິບັດພາກສະໜາມ, ລວມທັງການຍື່ນຄໍາຮ້ອງຂໍເງິນອຸດໜູນ, ການອະນຸມັດ ແລະ ການຄັດເລືອກຜູ້ໄດ້ຮັບຜົນປະໂຫຍດຈະດໍາເນີນການໂດຍ PAFO / DAFO ພາຍໃຕ້ການຄວບຄຸມແລະຊີ້ນໍາຂອງກະຊວງກະສິກໍາແລະປ່າໄມ້ (MAF).<br><br>**ຜົນໄດ້ຮັບທີ 3:** ການປະຕິບັດນະໂຍບາຍຈູງໃຈເພື່ອເພີ່ມການຜະລິດພືດຜັກໃນເຮືອນຮົ່ມ<br><br>**ກິດຈະກໍາ 3.1: ການຈັດຕັ້ງປະຕິບັດນະໂຍບາຍພາສີຕໍ່າໃນຂະບວນການແບ່ງເຂດປູກຝັງ (ປີທີ 3-5 ຂອງໂຄງການ)**<br><br>- ໃຫ້ການສະໜັບສະໜູນ ແລະ ອໍານວຍຄວາມສະດວກໃຫ້ແກ່ນັກລົງທຶນໃນການກໍ່ສ້າງ ແລະ ຈັດຕັ້ງປະຕິບັດ ໂດຍການຍົກເວັ້ນພາສີ.<br>- ການເກັບອັດຕາພາສີຕໍ່າສໍາລັບການນໍາເຂົ້າວັດສະດຸ ແລະ ອຸປະກອນທີ່ກ່ຽວຂ້ອງກັບການກໍ່ສ້າງພື້ນຖານໂຄງລ່າງເຮືອນຮົ່ມ, ເຮືອນຮົ່ມອັດສະລິຍະ, ແລະ ລະບົບການປູກຝັງໄຮໂດຣໂປນິກ, ແລະ ອື່ນໆ.<br><br>**ກິດຈະກໍາ 3.2: ການຈັດຕັ້ງປະຕິບັດໂຄງການເງິນອຸດໜູນ: ການສະໜັບສະໜູນທາງດ້ານການເງິນໃຫ້ແກ່ຊາວກະສິກອນທີ່ຕ້ອງການກໍ່ສ້າງເຮືອນຮົ່ມ, ປະມານ 50% ຂອງມູນຄ່າ (ປີທີ 3-5 ຂອງໂຄງການ).**<br><br>- ເປົ້າໝາຍຂອງໂຄງການເງິນອຸດໜູນ: ຊາວກະສິກອນຂະໜາດນ້ອຍທີ່ຢາກປູກຜັກໃນເຮືອນຮົ່ມພາຍໃນພື້ນທີ່ຜະລິດຜັກ.<br>- ຊາວກະສິກອນຜູ້ປູກຜັກຕ້ອງໄດ້ຮັບການຝຶກອົບຮົມ ແລະ ຈັດເປັນກຸ່ມຜູ້ຜະລິດ ເພື່ອໃຫ້ສາມາດຜະລິດໄດ້ຕະຫຼອດງປີ.<br>- ຂອບເຂດຂອງການອຸດໜູນ: 50% ຂອງມູນຄ່າການກໍ່ສ້າງເຮືອນຮົ່ມ (ລວມທັງຄ່າວັດສະດຸ ແລະ ຄ່າກໍ່ສ້າງ) |
| ໂຄງການທົດລອງ/ພື້ນທີ່ໂຄງການ | ຊາວກະສິກອນ/ກຸ່ມຜະລິດພືດຜັກ ປະມານ 1,700 ຄົນ ໃນເຂດແຂວງໂຄງການທົດລອງ (ນະຄອນຫຼວງວຽງຈັນ, ວຽງຈັນ, ແລະ ບໍລິຄໍາໄຊ) |

## 8.6 ແຜນດຳເນີນງານໂຄງການສິນເຊື່ອຈູງໃຈເພື່ອການລ້ຽງງົວທອມ-ອີງປະກອບທີ 3: AD

| | |
|---|---|
| ຫົວຂໍ້ໂຄງການ | ການພັດທະນາດ້ານກະສິກຳ: ສິນເຊື່ອຈູງໃຈເພື່ອການລ້ຽງງົວທອມ |
| ແຜນດຳເນີນງານພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ແຜນດຳເນີນງານໂຄງການ ການພັດທະນາດ້ານກະສິກຳ: ສິນເຊື່ອຈູງໃຈເພື່ອການລ້ຽງງົວທອມນີ້ ແມ່ນນຳໃຊ້ ລາຍລະອຽດທີ່ມີຢູ່ໃນແຜນດຳເນີນງານ ພັດທະນາອຸດສະຫະກຳການຄ້າງົວເພື່ອເປັນສິນຄ້າ; ໂຄງການທົດລອງ 3.1 ~ 3.7 |
| ຂະໜາດ/ຂົງເຂດບູລິມະສິດຕົ້ນຕໍ | ແຂວງທົດລອງຂອງໂຄງການ (ຫົວພັນ, ອຸດົມໄຊ, ຫຼວງນ້ຳທາ ແລະ ຊຽງຂວາງ) |
| ຂະແໜງການບຸລິມະສິດທີ່ສຳຄັນ<br>(ຫຼາຍຂະແໜງການ) | □ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>□ ການພັດທະນາຊັບພະຍາກອນມະນຸດ: VDCs<br>□ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>□ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>□ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>□ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກຳ<br>☑ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>☑ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼື ການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>□ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ, ທະນາຄານບ້ານ, ຫຼື ສິນເຊື່ອຂຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>☑ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>☑ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 2,100,000 |
| ໄລຍະເວລາໂຄງການ (ປີ) | 5 |

| | |
|---|---|
| ເຫດຜົນຄວາມຈຳເປັນຂອງໂຄງການ | ເຖິງວ່າລັດຖະບານໄດ້ໃຫ້ບຸລິມະສິດຊຸກຍູ້ການພັດທະນາກະສິກຳ ແລະ ການລ້ຽງສັດຕາມແຜນພັດທະນາກະສິກຳ (ADS) 2026-2030 ແລະ ນະໂຍບາຍແຫ່ງຊາດວ່າດ້ວຍການສົ່ງເສີມການລ້ຽງສັດ ແລະ ສັນໃນນ້ຳ 2022, ແຕ່ອັດຕາສ່ວນຂອງເງິນກູ້ທີ່ຈັດສັນໃຫ້ຂະແໜງກະສິກຳກວມພຽງ 5,5% ຂອງຍອດສິນເຊື່ອທັງໝົດໃນປີ 2022.<br><br>ການເຂົ້າເຖິງສິນເຊື່ອຍັງຄົງເປັນສິ່ງທ້າທາຍສຳລັບຊາວກະສິກອນລ້ຽງງົວເນື່ອງຈາກມີຂໍ້ຈຳກັດໃນການເຂົ້າເຖິງຂໍ້ມູນ ແລະ ຂາດຫຼັກຊັບຄ້ຳປະກັນ, ສິ່ງຜົນໃຫ້ຊາວກະສິກອນທີ່ມີທ່າແຮງຫຼາຍຄົນບໍ່ສາມາດຂະຫຍາຍການລ້ຽງງົວເພື່ອການຄ້າໄດ້.<br><br>ການເຂົ້າເຖິງແຫຼ່ງເງິນທຶນຂອງຊາວກະສິກອນຜູ້ລ້ຽງສັດຂະໜາດນ້ອຍຍັງຈຳກັດ ແລະ ຍັງບໍ່ມີແຫຼ່ງທຶນພຽງພໍສຳລັບການລ້ຽງງົວເພື່ອການຄ້າ. ອັດຕາດອກເບ້ຍເງິນກູ້ສູງຍັງເຮັດໃຫ້ຊາວກະສິກອນລ້ຽງງົວຈຳນວນຫຼາຍບໍ່ສາມາດຮັບຜິດຊອບຕົ້ນທຶນໃນການລ້ຽງງົວໄດ້.<br><br>ໃນລະດັບສູນກາງ, ເມື່ອໂຄງການນີ້ຖືກຈັດຕັ້ງປະຕິບັດໂດຍກະຊວງກະສິກຳ ແລະ ປ່າໄມ້ (MAF) ຮ່ວມມືກັບສະຖາບັນຄົ້ນຄວ້າທີ່ກ່ຽວຂ້ອງເຊັ່ນ: NAFRI, NUOL ແລະ SPRI, ຈະມີການໃຊ້ຂໍ້ສະເໜີດ້ານນະໂຍບາຍ ແລະ ຮູບແບບຈຳລອງການຈັດສູດອາຫານສັດພາຍໃນອົງກອນຂອງລັດຖະບານ (MAF). ຜົນການຄົ້ນຄວ້ານີ້ຈະສະຫນັບສະໜູນນະໂຍບາຍການລ້ຽງສັດແຫ່ງຊາດແລະ ແຜນພັດທະນາກະສິກຳ (ADS) 2026-2030 ເພື່ອປັບປຸງການເຂົ້າເຖິງແຫຼ່ງເງິນທຶນຂອງຊາວກະສິກອນຜູ້ລ້ຽງງົວຂະໜາດນ້ອຍ. |
| ຈຸດປະສົງ | ເພື່ອປັບປຸງການເຂົ້າເຖິງແຫຼ່ງເງິນທຶນສຳລັບຊາວກະສິກອນຜູ້ລ້ຽງງົວຂະໜາດນ້ອຍທີ່ກຳລັງລ້ຽງງົວເພື່ອເປັນສິນຄ້າ. |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | ຜົນໄດ້ຮັບ: ການພັດທະນາດ້ານການຄ້າຂອງການລ້ຽງສັດທີ່ດີຂຶ້ນ, ລາຍຮັບທີ່ເພີ່ມຂຶ້ນສຳລັບຊາວກະສິກອນຜູ້ລ້ຽງງົວຂະໜາດນ້ອຍ, ແລະ ພັດທະນາຊີວິດການເປັນຢູ່ໃນຊົນນະບົດໂດຍຜ່ານການເຂົ້າເຖິງແຫຼ່ງເງິນທຶນ, ທັກສະທາງດ້ານເຕັກນິກ, ແລະ ນະໂຍບາຍສະໜັບສະໜູນທີ່ມີປະສິດທິຜົນ. |
| ກິດຈະກຳ ແລະ ວິທີການທີ່ມີນະວັດຕະກຳ | **ຜົນໄດ້ຮັບທີ 1:** ການຄັດເລືອກ ແລະ ຝຶກອົບຮົມຊາວກະສິກອນ ສຳລັບການລ້ຽງງົວເພື່ອເປັນສິນຄ້າ<br>**ກິດຈະກຳ 1.1: ການຄັດເລືອກ ແລະ ຝຶກອົບຮົມຊາວກະສິກອນ (ປີທີ 1-3 ຂອງໂຄງການ)**<br><br>- ໂຄງການຝຶກອົບຮົມໄດ້ຖືກພັດທະນາ ແລະ ດຳເນີນໂດຍ NAFRI ແລະ NUOL ຜ່ານການຄົ້ນຄວ້າກ່ຽວກັບໂຄງການນະໂຍບາຍ ແລະ ເຕັກໂນໂລຊີແຮງຈູງໃຈ. ຖ້າຈຳເປັນ, ສູນຝຶກອົບຮົມ (ເຊັ່ນ: LKRDTC) ຈະຖືກໃຊ້ເປັນບ່ອນຝຶກອົບຮົມ ແລະ ໜ່ວຍງານທີ່ປະຕິບັດຫຼັກສູດ.<br><br>- ຄັດເລືອກເອົາຊາວກະສິກອນທີ່ມີປະສົບການລ້ຽງງົວ 200 ຄອບຄົວ, ແຕ່ລະຄອບຄົວ ມີງົວຢ່າງໜ້ອຍ 10 ໂຕ ແລະ ເນື້ອທີ່ກະສິກຳຢ່າງໜ້ອຍ 0,5 ເຮັກຕາ ເພື່ອປູກຫຍ້າ ແລະ ພືດອາຫານສັດອື່ນໆ.<br><br>- ຈັດຝຶກອົບຮົມດ້ານວິຊາການກ່ຽວກັບການລ້ຽງງົວ ແລະ ການຜະລິດອາຫານສັດຈັດຕັ້ງປະຕິບັດໂດຍ DLF ພ້ອມການສະຫນັບສະຫນູນຈາກ PAFO ແລະ DAFO.<br><br>**ຜົນໄດ້ຮັບທີ 2:** ເຄື່ອງມືນະໂຍບາຍຊຸກຍູ້ສົ່ງເສີມການລ້ຽງງົວເພື່ອເປັນສິນຄ້າ |

| | |
|---|---|
| | **ກິດຈະກຳ 2.1: ການພັດທະນາ ແລະ ນິຕິກຳຂອງໂຄງການເງິນກູ້ແບບຈູງໃຈນະໂຍບາຍ (ປີ 1-2 ຂອງໂຄງການ)**<br><br>- ອົງກອນພັດທະນານະໂຍບາຍ: MAF-DoPC/DLF, NAFRI, NUOL, ແລະ SPRI<br>- ບັນດາອົງກອນເຫຼົ່ານີ້ຈະດຳເນີນການວິເຄາະກຸ່ມເປົ້າໝາຍ, ຂອບເຂດ, ລະບຽບການ ແລະ ແນວທາງຢ່າງລະອຽດຂອງສິນເຊື່ອທຶນນະໂຍບາຍ, ໂດຍມີທະນາຄານສົ່ງເສີມກະສິກຳ (APB) ເປັນຜູ້ຕິດຕາມ ແລະ ກວດກາ.<br>- ກອງທຶນອຸດໜູນຈະໄດ້ຮັບການສ້າງຕັ້ງຂຶ້ນໂດຍໃຊ້ງົບປະມານຂອງລັດ ຫຼື ຊັບພະຍາກອນຈາກໂຄງການ ODA. ການບໍລິຫານ ແລະ ການດຳເນີນງານຈະໄດ້ຢູ່ພາຍໃຕ້ການເບິ່ງແຍງຂອງ APB, ໃນຂະນະທີ່ການປະຕິບັດຕົວຈິງ, ລວມທັງການຍື່ນຄຳຮ້ອງຂໍເງິນກູ້, ການອະນຸມັດແລະການກວດສອບຜູ້ໄດ້ຮັບຜົນປະໂຫຍດ, ຈະຖືກປະຕິບັດໂດຍ PAFO / DAFO ພາຍໃຕ້ການຊີ້ນຳຂອງ MAF.<br><br>**ຜົນໄດ້ຮັບທີ 3.** ການສ້າງພື້ນຖານ ແລະ ເພີ່ມຂີດຄວາມສາມາດໃນການແຂ່ງຂັນຂອງຟາມລ້ຽງງົວໂດຍໃຊ້ເງິນກູ້ຢືມ<br>**ກິດຈະກຳ 3.1 ການບໍລິຫານຈັດການເງິນກູ້ຢືມ**<br><br>- ຈັດສັນເງິນກູ້ (25-40 ລ້ານກີບຕໍ່ຄອບຄົວ) ເພື່ອຈຸດປະສົງສະເພາະເຊັ່ນ: ການຊື້ງົວພັນ, ແນວພັນຫຍ້າ ແລະ ພືດສຳລັບການຜະລິດອາຫານສັດ (TMR) ພ້ອມທັງປັບປຸງຄອກລ້ຽງສັດ.<br><br>- ຕິດຕາມ ແລະ ປະເມີນຜົນການນຳໃຊ້ເງິນກູ້, ການຊຳລະຄືນ, ແລະ ການປະຕິບັດຕາມເງື່ອນໄຂຢ່າງຕໍ່ເນື່ອງທຸກເດືອນ<br><br>**ກິດຈະກຳ 3.2 ທຸລະກິດເງິນກູ້ຢືມສຳລັບສະຫະກອນ**<br>- ອີງຈາກເຄື່ອງມືດ້ານນະໂຍບາຍທີ່ສ້າງຂຶ້ນໃນໂຄງການນີ້, ສະຫະກອນຜູ້ລ້ຽງງົວໃນເຂດໂຄງການຈະໄດ້ຮັບການສ້າງຕັ້ງ ແລະ ປະເມີນຈາກພາກລັດຖະບານໃຫ້ເປັນອົງກອນເງິນກູ້ຢືມທີ່ຖືກຕ້ອງຕາມກົດໝາຍ ແລະ ມີທ່າແຮງໃນການແຂ່ງຂັນ. ຈາກນັ້ນສະຫະກອນຜູ້ລ້ຽງງົວຈະໄດ້ຮັບການສະໜັບສະໜູນໃຫ້ດຳເນີນການບໍລິຫານຈັດການເງິນກູ້ນະໂຍບາຍສຳລັບສະມາຊິກສະຫະກອນຂອງເຂົາເຈົ້າ.<br>- ຜ່ານການບໍລິຫານຈັດການເງິນກູ້ຂອງສະຫະກອນ, ບົດບາດ ແລະ ໜ້າທີ່ຂອງສະຫະກອນຈະຖືກຂະຫຍາຍໃຫ້ກາຍເປັນຜູ້ໃຫ້ບໍລິການທີ່ເຂັ້ມແຂງເພື່ອສະໜັບສະໜູນການລ້ຽງງົວເປັນສິນຄ້າໃນເຂດໂຄງການ.<br><br>**ຜົນໄດ້ຮັບທີ 4:** ການປະເມີນຜົນກະທົບຂອງໂຄງການດ້ານນະໂຍບາຍ ແລະ ຄຳແນະນຳດ້ານນະໂຍບາຍ<br>**ກິດຈະກຳ 4.1 ການຕິດຕາມ ແລະ ປະເມີນຜົນກະທົບຂອງການນຳໃຊ້ເງິນກູ້ຢືມ**<br><br>- ຕິດຕາມ ແລະ ປະເມີນຜົນເພື່ອໃຫ້ໝັ້ນໃຈວ່າມີການປະຕິບັດຕາມຄຳແນະນຳ ແລະ ການນຳໃຊ້ເງິນກູ້ຢືມຕາມວັດຖຸປະສົງທີ່ຕັ້ງໄວ້. ລວມເຖິງການເກັບກຳຂໍ້ມູນຜົນການປະຕິບັດໂຄງການ ແລະ ແກ້ໄຂບັນຫາ ຫຼື ອຸປະສັກຕ່າງໆທີ່ຊາວກະສິກອນພົບໃນການເຂົ້າເຖິງເງິນກູ້ ຫຼື ການຈັດການຟາມລ້ຽງງົວຂອງເຂົາເຈົ້າ. |

| | |
|---|---|
| | - ເພື່ອໃຫ້ໄດ້ຜົນການວິເຄາະທາງດ້ານວິຊາການ ແລະ ສະທ້ອນສູ່ການປັບປຸງນະໂຍບາຍ, ຈຳເປັນຕ້ອງມີການມີສ່ວນຮ່ວມຂອງກຸ່ມຄົ້ນຄ້ວາຂອງຜູ້ຊ່ຽວຊານຈາກ SPRI ແລະ NUOL ໃນການປະເມີນຜົນກະທົບນີ້<br><br>**ກິດຈະກຳ 4.2. ການເຊື່ອມໂຍງ ແລະ ເຜີຍແຜ່ນະໂຍບາຍ**<br>- ກອງປະຊຸມຜູ້ມີສ່ວນຮ່ວມ: ສ້າງຮູບແບບ ແລະ ບົດສະຫຼຸບຂໍ້ສະເໜີທາງດ້ານນະໂຍບາຍ ເພື່ອສະໜັບສະໜູນໃຫ້ການຕັດສິນໃຈຂອງການນຳກະຊວງກະສິກຳ ແລະ ປ່າໄມ້<br>- ຂະຫຍາຍໂຄງການເງິນກູ້ຈູງໃຈສຳລັບການລ້ຽງງົວທອມໃຫ້ກວມທົ່ວເມືອງ ແລະ ຊາວກະສິກອນເພີ່ມເຕີມ.<br>- ພະນັກງານທ້ອງຖິ່ນຢູ່ຂັ້ນເມືອງ ເຜີຍແຜ່ ບົດຮຽນການຈັດຕັ້ງປະຕິບັດທີ່ໄດ້ຮັບຜົນສຳເລັດທີ່ດີໃຫ້ແກ່ຊາວກະສິກອນຄົນອື່ນໆ ເພື່ອໃຫ້ເກີດການຂະຫຍາຍຜົນ ແລະ ຄວາມຍືນຍົງ. |
| ໂຄງການທົດລອງ/ພື້ນທີ່ໂຄງການ | ຊາວກະສິກອນຜູ້ລ້ຽງງົວເພື່ອເປັນສິນຄ້າ (ສ່ວນບຸກຄົນ, ກຸ່ມ ຫຼື ສະຫະກອນ) ໃນເມືອງທົດລອງຂອງແຂວງຫົວພັນ, ອຸດົມໄຊ, ຫຼວງນ້ຳທາ ແລະ ແຂວງຊຽງຂວາງ. |

## 8.7 ແຜນດຳເນີນງານໂຄງການສົ່ງເສີມສະຫະກອນກະສິກຳ-ອົງປະກອບທີ 4: AC

| | |
|---|---|
| ຫົວຂໍ້ໂຄງການ | ໂຄງການສ້າງຂີດຄວາມສາມາດສຳລັບສະຫະກອນກະສິກຳ |
| ແຜນດຳເນີນງານພັດທະນາກະສິກຳ (ເຂົ້າ, ພືດຜັກ, ແລະ ງົວ) ແລະ ພັດທະນາຊົນນະບົດທີ່ກ່ຽວຂ້ອງ | ແຜນດຳເນີນງານ ພັດທະນາຊົນນະບົດ-ອົງປະກອບທີ 4 AC:<br>ໂຄງການ 4.1 ແລະ 4.2 |
| ຂະໜາດ/ຂົງເຂດບູລິມະສິດຕົ້ນຕໍ | ພື້ນທີ່ໂຄງການທົດລອງຕາມສິນຄ້າ (ເຂົ້າ ແລະ ພືດຜັກ) ໃນລະດັບ ເມືອງ ຫຼື ແຂວງ |
| ຂະແໜງການບູລິມະສິດທີ່ສຳຄັນ<br>(ຫຼາຍຂະແໜງການ) | ☑ ການພັດທະນາຊັບພະຍາກອນມະນຸດ: ພະນັກງານລັດ / ພະນັກງານສົ່ງເສີມກະສິກຳ<br>□ ການພັດທະນາຊັບພະຍາກອນມະນຸດ: VDCs<br>□ ການພັດທະນາຊັບພະຍາກອນມະນຸດ: ຊາວໜຸ່ມ ແລະ ແມ່ຍິງຊົນນະບົດ<br>☑ ການພັດທະນາຊັບພະຍາກອນມະນຸດ: ກຸ່ມຊາວກະສິກອນ ຫຼື ສະຫະກອນ/SMEs<br>□ ການພັດທະນາຊັບພະຍາກອນມະນຸດ: ຜູ້ຮ່າງນະໂຍບາຍ/ນັກຄົ້ນຄວ້າ<br>□ ພື້ນຖານໂຄງລ່າງ: ປັບປຸງຊີວິດການເປັນຢູ່ຂອງບ້ານ<br>□ ພື້ນຖານໂຄງລ່າງ: ປັບປຸງການບໍລິການສົ່ງເສີມກະສິກຳ<br>☑ ພື້ນຖານໂຄງລ່າງ: ການພັດທະນາກະສິກຳ/ອຸດສາຫະກຳ/ຕະຫຼາດ<br>☑ ການສ້າງລາຍຮັບ: ການປູກພືດ, ການລ້ຽງສັດ, ຫຼືການກະສິກຳແບບປະສົມປະສານ<br>□ ການສ້າງລາຍຮັບ: ການບໍລິການ ຫຼື ການທ່ອງທ່ຽວ<br>□ ການສ້າງລາຍຮັບ: ກອງທຶນພັດທະນາບ້ານ (VDF), ທະນາຄານບ້ານ, ຫຼືສິນເຊື່ອຊຸມຊົນ SMU<br>□ ເຕັກໂນໂລຊີການສື່ສານ ແລະ ຂໍ້ມູນຂ່າວສານ<br>□ ສະພາບແວດລ້ອມ: ຄວາມທົນທານຕໍ່ດິນຟ້າອາກາດ, ກະສິກຳນິເວດວິທະຍາ, ການອະນຸລັກ<br>□ ບໍລິການສາທາລະນະ: ການຄົ້ນຄວ້າ ແລະ ພັດທະນາເຕັກໂນໂລຊີ (R&D)<br>□ ການບໍລິການສາທາລະນະ: ຖ່າຍທອດເຕັກໂນໂລຊີ/ການບໍລິການສົ່ງເສີມ<br>☑ ການບໍລິການສາທາລະນະ: ການປົກຄອງ, ການສົ່ງເສີມລະດັບນະໂຍບາຍ, ແລະ ການແລກປ່ຽນຄວາມຮູ້ |
| ຄາດຄະເນ ງົບປະມານໂຄງການທັງໝົດ (ໂດລາສະຫະລັດ) | 1,200,000 (600,000 from Project 4.1., and 600,000 from Project 4.2.) |
| ໄລຍະເວລາໂຄງການ (ປີ) | 5 |
| ເຫດຜົນຄວາມຈຳເປັນຂອງໂຄງການ | ສະຫະກອນກະສິກຳແມ່ນອົງການຈັດຕັ້ງ ແລະ ທຸລະກິດທີ່ສຳຄັນຕໍ່ການພັດທະນາກະສິກຳ ແລະ ຊົນນະບົດ. ສະຫະກອນບໍ່ໄດ້ເປັນພຽງຄວາມພະຍາຍາມຮ່ວມກັນເທົ່ານັ້ນ, ແຕ່ຍັງເປັນອົງການຈັດຕັ້ງທຸລະກິດທີ່ຊາວກະສິກອນເປັນກຸ່ມທີ່ມີຖານະເສດຖະກິດອ່ອນແອ, ຊອກຫາຜົນປະໂຫຍດຮ່ວມກັນຢ່າງເທົ່າທຽມໃນຕະຫຼາດໂດຍການຮ່ວມກັນຈັດຕັ້ງປະຕິບັດກິດຈະກຳຮ່ວມກັນ.<br><br>ຖ້າສະຫະກອນກະສິກຳໄດ້ຮັບການບໍລິຫານຈັດການເປັນຢ່າງດີ, ລາຍຮັບຂອງຊາວກະສິກອນກໍຈະເພີ່ມຂຶ້ນ ແລະ ເສດຖະກິດຊົນນະບົດກໍຈະເຕີບໂຕຕາມຄວາມຕ້ອງການ, ເຊິ່ງຈະເປັນຜົນດີຕໍ່ສັງຄົມຊົນນະບົດ. ນອກນັ້ນ, ຕ່ອງໂສ້ມູນຄ່າຂອງຜົນຜະລິດກະສິກຳກໍຈະປະຕິບັດໜ້າທີ່ຢ່າງມີປະສິດທິຜົນ, ແລະ ສົ່ງເສີມການພັດທະນາຕະຫຼາດກະສິກຳຢ່າງໝັ້ນຄົງ. ສະນັ້ນ, ການສົ່ງເສີມສະຫະກອນກະສິກຳແມ່ນວຽກງານສຳຄັນຂອງການພັດທະນາຊົນນະບົດ. |

| | |
|---|---|
| | ລັດຖະບານ ລາວ ພະຍາຍາມ ສົ່ງເສີມ ສະຫະກອນ ກະສິກຳ ດ້ວຍການເຜີຍແຜ່ການນຳໃຊ້ກົດ ໝາຍ ແລະ ອີງການ ລັດຖະບານເພື່ອ ພັດທະນສະຫະກອນ. ເຖິງຢ່າງໃດກໍຕາມ, ລະດັບຄວາມຮັບຮູ້ກ່ຽວກັບສະຫະກອນທົ່ວສັງຄົມລວມທັງຊາວກະສິກອນຍັງຢູ່ໃນລະດັບຕໍ່າ ແລະ ຍັງມີການສຶກສາກ່ຽວກັບສະຫະກອນໜ້ອຍຫຼາຍ. ນອກຈາກນັ້ນ, ຍັງບໍ່ທັນມີຮູບແບບການສົ່ງເສີມສະຫະກອນທີ່ເໝາະສົມກັບກະສິກຳ ແລະ ພື້ນທີ່ຊົນນະບົດຂອງລາວ.<br><br>ສະນັ້ນ, ຈຶ່ງຈຳເປັນຕ້ອງສ້າງລະບົບການສຶກສາສຳລັບສະຫະກອນ ເພື່ອເຜີຍແຜ່ຄວາມຮັບຮູ້ກ່ຽວກັບ "ຍ້ອນຫຍັງພວກເຮົາຈຶ່ງຕ້ອງການສະຫະກອນ", ສະຫະກອນໃຫ້ຜົນປະໂຫຍດຫຍັງແດ່ ແລະ 'ສະຫະກອນປະກອບສ່ວນເຂົ້າໃນການຟື້ນຟູພາກພື້ນແນວໃດ'. ພ້ອມກັນນັ້ນ, ຈຳເປັນຕ້ອງມີຄວາມພະຍາຍາມໃນການຊຸກຍູ້ສົ່ງເສີມໂດຍການພັດທະນາຮູບແບບສະຫະກອນທີ່ເໝາະສົມກັບລາວ, ຜ່ານການຊຸກຍູ້ໂຄງການທົດລອງເພື່ອສົ່ງເສີມສະຫະກອນ. |
| ຈຸດປະສົງ | ການຊຸກຍູ້ສົ່ງເສີມສະຫະກອນກະສິກຳ, ອີງຕາມຮູບແບບການພັດທະນາສະຫະກອນກະສິກຳຂອງ ສປປ ລາວ |
| ຄາດຄະເນຜົນໄດ້ທີ່ຈະໄດ້ຮັບ | **ຜົນກະທົບ:** ໂຄງການທົດລອງນີ້ແມ່ນເພື່ອສ້າງຕັ້ງສະຫະກອນທີ່ປະສົບຜົນສຳເລັດໃນພື້ນທີ່ຜະລິດທີ່ສຳຄັນ, ແລະ ພັດທະນາຮູບແບບສະເພາະຂອງລາວສຳລັບສະຫະກອນກະສິກຳເພື່ອຂະຫຍາຍຕົວໂດຍອີງໃສ່ບົດຮຽນທີ່ໄດ້ຈາກການທົດລອງ.<br>**ຜົນໄດ້ຮັບ:** ການສ້າງຕັ້ງລະບົບການສຶກສາກ່ຽວກັບສະຫະກອນ<br>- ໃນໂຄງການທົດລອງ, ຊາວກະສິກອນປູກເຂົ້າ ແລະ ພືດຜັກ ແມ່ນກຸ່ມເປົ້າໝາຍຫຼັກສຳລັບການຈັດຕັ້ງ ແລະ ການຈັດການສະຫະກອນໃນພື້ນທີ່ໂຄງການທົດລອງຕາມປະເພດສິນຄ້າ |
| ກິດຈະກຳ ແລະ ວິທີການທີ່ມີນະວັດຕະກຳ | **ຜົນໄດ້ຮັບທີ 1:** ການປະຕິບັດຫຼັກສູດສະເພາະເພື່ອສ້າງ ແລະ ສົ່ງເສີມຜູ້ນຳສະຫະກອນ<br>**ກິດຈະກຳ: ການກະກຽມຫຼັກສູດ (ປີທີ 1 ຂອງໂຄງການ)**<br><br>- **ສະຖາບັນຝຶກອົບຮົມ**: ຕົວຢ່າງ ສູນຝຶກອົບຮົມກະສະກຳ ແລະ ພັດທະນາຊົນນະບົດ ລາວ-ເກົາຫຼີ (LKRDTC)<br>- **ວິທະຍາກອນ:** ຜູ້ຊ່ຽວຊານດ້ານສະຫະກອນ (ພາຍໃນ ຫຼື ຕ່າງປະເທດ)<br>- **ຜູ້ເຂົ້າຮ່ວມ:** ເຈົ້າໜ້າທີ່ພາກລັດ (DAEC ແລະ PAFO), ແລະ ຜູ້ນຳກຸ່ມຊາວກະສິກອນລະດັບຊາດ<br>- **ຜູ້ເຂົ້າຮ່ວມ** ແມ່ນເຂົ້າຮ່ວມກອງປະຊຸມສຳມະນາເພື່ອພັດທະນາຫຼັກສູດການສຶກສາສຳລັບຜູ້ນຳສະຫະກອນ, ລວມທັງຫຼັກສູດ ແລະ ເນື້ອໃນດັ່ງຕໍ່ໄປນີ້: ນະໂຍບາຍ ແລະ ກົດໝາຍຂອງສະຫະກອນ, ຫຼັກການຄຸ້ມຄອງ ແລະ ການຈັດຕັ້ງປະຕິບັດຂອງສະຫະກອນ, ຮູບແບບ/ກໍລະນີສຶກສາຂອງສະຫະກອນໃນຕ່າງປະເທດ, ການຄຸ້ມຄອງການເງິນ, ແລະ ການຕະຫຼາດ ແລະ ທຸລະກິດ, ອື່ນໆ.<br>- **ຜົນໄດ້ຮັບ ແລະ ເນື້ອໃນທີ່ໄດ້ຈາກກອງປະຊຸມສຳມະນາ** ແມ່ນໄດ້ຖືກນຳມາພັດທະນາເປັນປຶ້ມ/ອຸປະກອນການຝຶກອົບຮົມສຳລັບໂຄງການຝຶກອົບຮົມຜູ້ນຳສະຫະກອນ.<br>**ກິດຈະກຳ 1.2. ການດຳເນີນງານຫຼັກສູດຝຶກອົບຮົມຜູ້ນຳສະຫະກອນ (ປີທີ 2-4 ຂອງໂຄງການ)**<br>- ສະຖາບັນຝຶກອົບຮົມ: (ຕົວຢ່າງ) LKRDTC, SATC, PAFO, ແລະ ອື່ນໆ.<br>- ວິທະຍາກອນ: ຜູ້ຊ່ຽວຊານດ້ານສະຫະກອນ (ພາຍໃນ ຫຼື ຕ່າງປະເທດ)<br>- ຜູ້ເຂົ້າຮ່ວມຝຶກອົບຮົມ**:** ຜູ້ນຳກຸ່ມຊາວກະສິກອນຕາມປະເພດສິນຄ້າ (ເຂົ້າ ແລະ ຜັກ); ລວມ 6-10 ຜູ້ນຳຊາວກະສິກອນຕໍ່ຫຼັກສູດ (2 ຜູ້ນຳຊາວກະສິກອນຕໍ່ເມືອງ; 6-10 ຄົນຕໍ່ແຂວງ; 1 ແຂວງຕໍ່ຫຼັກສູດ). ຊາວກະສິກອນທີ່ກຳລັງຄຸ້ມຄອງສະຫະກອນກໍ່ສາມາດເຂົ້າຮ່ວມການຝຶກອົບຮົມໄດ້. |

| | |
|---|---|
| | - ດຳເນີນການຝຶກອົບຮົມປີລະ 3 ຄັ້ງ (ຫຼັກສູດ). ການຝຶກອົບຮົມລວມ 4 ຄືນ 5 ວັນ; ຫຼັງຈາກສຳເລັດການຝຶກອົບຮົມໃນຫ້ອງຮຽນແລ້ວ, ການຝຶກອົບຮົມທາງອອນໄລນ໌ແມ່ນໄດ້ດຳເນີນເປັນກິດຈະກຳປະຈຳເດືອນເປັນເວລາ 6 ເດືອນ, ຫຼັງຈາກນັ້ນຜູ້ເຂົ້າຮ່ວມຈະໄດ້ສືບຕໍ່ເຮັດກິດຈະກຳສ້າງເຄືອຂ່າຍ ແລະ ກິດຈະກຳຮ່ວມມືແບບອອນລາຍ/ອອບລາຍດ້ວຍຕົນເອງ.<br>- ເນື້ອໃນຫຼັກ: ປັດຊະຍາຂອງສະຫະກອນ, ເອກະລັກ, ການປົກຄອງ, ຫຼັກການດຳເນີນງານ, ການຄຸ້ມຄອງການເງິນ, ແລະ ການຕະຫຼາດ ແລະ ທຸລະກິດ, ອື່ນໆ.<br>- ການຖອດຖອນບົດຮຽນຈາກກໍລະນີຂອງສະຫະກອນໃນຕ່າງປະເທດ (ປະຫວັດການພັດທະນາ, ການທົດລອງ ແລະ ຄວາມຜິດພາດ, ການຄຸ້ມຄອງ ແລະ ທຸລະກິດໃນປັດຈຸບັນ, ແລະ ອື່ນໆ.)<br><br>**ກິດຈະກຳ 1.3: ການສ້າງຕັ້ງລະບົບການສຶກສາໝູນວຽນໃນທ້ອງຖິ່ນ (ປີທີ 3-5 ຂອງໂຄງການ)**<br>- ການຍື່ນຄຳຮ້ອງຂໍຝຶກອົບຮົມຕາມເມືອງ (DAFO → PAFO → DAEC, LKRDTC & SATC)<br>- ການວາງແຜນຕາຕະລາງການຝຶກອົບຮົມຕາມເມືອງ, ແລະ ການຈັດສົ່ງຜູ້ຊ່ຽວຊານໄປຍັງພື້ນທີ່ຝຶກອົບຮົມ (LKRDTC & SATC)<br><br>**ກິດຈະກຳ 1.4 ການໃຫ້ສິ່ງຈູງໃຈແກ່ຜູ້ເຂົ້າຝຶກອົບຮົມ ແລະ ບ້ານດີເດັ່ນ (ປີທີ 3-4 ຂອງໂຄງການ)**<br>- ການຄັດເລືອກຜູ້ເຂົ້າຝຶກອົບຮົມດີເດັ່ນ: 20 ຄົນຕໍ່ປີ<br>- ສິ່ງຈູງໃຈ: ການເດີນທາງໄປສຶກສາວຽກງານພາກສະໜາມຕ່າງປະເທດ ຢູ່ສະຫະກອນທີ່ກ້າວໜ້າ<br>- ການຄັດເລືອກບ້ານດີເດັ່ນໃນການພັດທະນາກະສິກຳ ແລະ ກິດຈະກຳກຸ່ມຊາວກະສິກອນ: 10 ບ້ານຕໍ່ປີ<br>- ສິ່ງຈູງໃຈ: ການໃຫ້ກູ້ຢືມເງິນນະໂຍບາຍສຳລັບວຽກງານກະສິກຳ ແລະ ກິດຈະກຳສະຫະກອນ (ດອກເບ້ຍຕ່ຳ ແລະ ໄລຍະຍາວ)<br><br>**ຜົນໄດ້ຮັບ2 :** ການສ້າງຕັ້ງໂຕແບບ ສະຫະກອນກະສິກຳລາວ<br>**ກິດຈະກຳ 2.1: ການວິເຄາະຜົນງານຂອງໂຄງການທົດລອງສະຫະກອນ (ປີທີ 4-5 ຂອງໂຄງການ)**<br>- ບັນດາອົງກອນຈັດຕັ້ງຄົ້ນຄວ້າ ແລະ ອົງການລັດທີ່ກ່ຽວຂ້ອງກັບວຽກງານສະຫະກອນ (ຕົວຢ່າງ: DAEC, NAFRI, ແລະ SPRI, ອື່ນໆ) ຈະເຂົ້າຮ່ວມໃນການວິເຄາະ ແລະ ການພັດທະນາຮູບແບບ.<br>- ການວິເຄາະຜົນປະໂຫຍດລວມຂອງສະຫະກອນ: 1) ການປະຢັດຕົ້ນທຶນຕໍ່ຫົວໜ່ວຍ– ການຫຼຸດຜ່ອນຕົ້ນທຶນຜ່ານການຊື້ປັດໄຈການຜະລິດກະສິກຳຮ່ວມກັນ ແລະ ການຂາຍຜົນຜະລິດກະສິກຳຮ່ວມກັນ. 2) ການເພີ່ມອຳນາດໃນການຕໍ່ລອງ– ການເພີ່ມລາຄາຂາຍຈາກການຕະຫຼາດຮ່ວມກັນ.<br>- ການວິເຄາະປະສິດທິພາບການດຳເນີນທຸລະກິດ: 1) ການປະກອບສ່ວນຕໍ່ປະສິດທິພາບຂອງລະບົບຕ່ອງໂສ້ມູນຄ່າສິນຄ້າ. 2) ການປະກອບສ່ວນຕໍ່ການເພີ່ມຂຶ້ນລາຍຮັບຂອງສະມາຊິກຊາວກະສິກອນ.<br><br>ກິດຈະກຳ 2.2 : ການວິເຄາະຄວາມເປັນໄປໄດ້ຂອງການບໍລິການດ້ານການເງິນຂອງສະຫະກອນ (ປີທີ 4-5 ຂອງໂຄງການ) |

| | |
|---|---|
| | - ການສຶກສາຄວາມເປັນໄປໄດ້ໃນການສ້າງຕັ້ງສະມາຄົມສະຫະກອນຂັ້ນທ້ອງຖິ່ນ ແລະ ການດຳເນີນງານດ້ານການເງິນຂອງພວກເຂົາ, ລວມທັງການຮັບເງິນຝາກ ແລະ ການຈັດສັນກອງທຶນສຳລັບວຽກງານກະສິກຳ ແລະ ຄອບຄົວຊາວກະສິກອນ.<br><br>ກິດຈະກຳ 2.3: ການພັດທະນາຕົວແບບສະຫະກອນທີ່ເໝາະສົມກັບສະພາບການກະສິກຳ ແລະ ທ້ອງຖິ່ນໃນລາວ (ປີທີ 4-5 ຂອງໂຄງການ)<br><br>- ອີງຕາມການວິເຄາະ ແລະ ບົດຮຽນຈາກໂຄງການທົດລອງ AC, ໄດ້ມີການແນະນຳຮູບແບບສະຫະກອນສະເພາະສິນຄ້າ ຫຼື ສະຫະກອນຕາມທ້ອງຖິ່ນ<br><br>- ການທົບທວນດ້ານກົດໝາຍ ແລະ ການສະເໜີປັບປຸງກົດໝາຍ/ນະໂຍບາຍສະເພາະ ແລະ ການສ້າງຕັ້ງສະຖາບັນແມ່ນໄດ້ຖືກສະເໜີຂຶ້ນເພື່ອການພັດທະນາສະຫະກອນໂດຍອີງໃສ່ຮູບແບບດັ່ງກ່າວ. |
| ໂຄງການທົດລອງ/ພື້ນທີ່ໂຄງການ | ຈັດຕັ້ງປະຕິບັດຄຽງຄູ່ກັບບັນດາແຂວງ ແລະ ຂະແໜງການຜະລິດສິນຄ້າ (ເຂົ້າ ແລະ ຜັກ) ບ່ອນທີ່ໂຄງການສະຫະກອນກະສິກຳ (AC) ພວມຈັດຕັ້ງປະຕິບັດຢູ່. |

## IX. ເອກະສານອ້າງອີງ


ALISEA. (2023). *An Agroecological Laos by 2040*. Retrieved from https://www.asset-project.org.

Debonne, N., van Vliet, J., Heinimann, A., et al. (2018). *Representing large-scale land acquisitions in land use change scenario for the Lao PDR*. *Regional Environmental Change*, 18, 1857-1869. DOI: 10.1007/s10113-018-1316-8.

Department of Planning and Cooperation, Ministry of Agriculture and Forestry (MAF). (2024). *Agricultural Statistics Yearbook 2023*.

Department of Planning, Ministry of Planning and Investment. (2021). *9th Five-Year National Socio-Economic Development Plan (2021-2025)*.

Department of Planning, Ministry of Planning and Investment. (2024, February). *Mid-Term Review 9th National Socio-Economic Development Plan (2021-2025)*.

Ernst & Young Lao Ltd. (2022). *Poverty Reduction Fund III: Report of Project's Management & Audited Finance for the year ended 31 December 2022*.

European Commission. (2019). *INFORM Index for Risk Management Lao PDR Country Profile*.

Greater Mekong Subregion Secretariat. (2018). *GMS Economic Corridors in Lao PDR - Road Surface*. Retrieved from https://www.greatermekong.org/gms-economic-corridors-lao-pdr-road-surface.

Government of the Lao PDR. (2024, June). *Lao People's Democratic Republic Voluntary National Review on the Implementation of the 2030 Agenda for Sustainable Development*.

International Trade Center (ITC). (2022). *Lao PDR Trade Outlook 2022*.

Khamlouang, K. (2018). *LICA: LAO Facilitated Initiative on Agroecology for ASEAN: The Agro-ecology Initiatives in Lao PDR*.

Kim, J.I. (2019). *A study on the universality and specificity of the Saemaul Movement based on a Delphi survey, International Saemaul Movement Research Report.* (10th Anniversary Commemorative Paper Collection (7th August 2019)), International Saemaul Movement Research Institute.

Kim, Y. (2014). *A Study on the Development Strategies of the 6th Industry by Analyzing Rural Industrial Statistics*. KREI.

Lao National Chamber of Commerce and Industry. (n.d.). *Why invest in Laos*. Retrieved from https://lncci.la/why-invest-in-laos/.

Luxembourg/AID & Development. (2023). *Luxembourg Development Cooperation in Laos*.

Lux DEV. (2023). *Final Evaluation LAO/030 Local Development Programme for Bokeo, Bolikhamxay, Khammouane and Vientiane Province*.

Ministry of Industry and Commerce of Lao PDR. (n.d.). *Overview of Commercial and Industrial Development in Lao PDR*.

Special Economic Zone Promotion and Management Office (SEZO). (2021). *Special Economic Zones in Lao PDR*. Ministry of Planning and Investment. Retrieved from https://laosez.gov.la.

The World Bank Group and the Asian Development Bank. (2021). *Climate Risk Country Profile: Lao PDR*. Retrieved from https://climateknowledgeportal.worldbank.org.

UNDP. (2018). *Evaluation of Project Saemaul Initiative towards Inclusive and Sustainable New Communities (ISNC) Covering Period 2015-2017*.

United Nations Population Fund (UNFPA) Lao PDR. (2020). *Demographic change for development Lao People's Democratic Republic 2030*.

WBG/SDC/Australian AID. (2016). *Lao Poverty Reduction Fund II Impact Evaluation: Final Report*.

World Food Programme. (2016). *Lao PDR CLEAR: Consolidated Livelihood Exercise for Analyzing Resilience*.